# ພຣະທັມ 2 ປະຫວັດກະສັດ


| | | | | | | |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | | | |


## ປະຫວັດກະສັດສະບັບທີ 2

2 KINGS

### 1 ນໍຣະນະກັມຂອງອາຮາຊີຢາ

Elijah Denounces Ahaziah

1 ເມື່ອອາຮາບສິ້ນພຣະຊົນແລ້ວ ເມືອງໂມອາບກໍກະບົດຕໍ່ຄົນອິສຣາເອນ
2 ຝ່າຍອາຮາຊີຢາຊົງຕົກລົງມາຈາກຊ່ອງພຣະແກຕາຂ່າຍທີ່ຫ້ອງຊັ້ນເທິງຂອງພຣະອົງໃນກຸງຊາມາເຣັຽ ແລະຊົງປະ
ຊວນຈຶ່ງຊົງໃຊ້ບັນດາຜູ້ສື່ງຂ່າວໄປ ຮັບສັ່ງວ່າ, “ຈົ່ງໄປຖາມບາອານເຊບູບ ພຣະເຈົ້າແຫ່ງເອກໂຣນວ່າເຮົາຈະຫາຍ
ຈາກຄວາມເຈັບປ່ວຍນີ້ໄດ້ຫລືບໍ່?”
3 ແຕ່ທູດຂອງພຣະຜູ້ເປັນເຈົ້າເວົ້າກັບເອລີຢາ ຊາວຕິສບີວ່າ, “ຈົ່ງລຸກຂຶ້ນໄປພົບບັນດາຜູ້ສື່ງຂ່າວຂອງເຈົ້າຊີວິດແຫ່ງ
ຊາມາເຣັຽ ແລະຈົ່ງເວົ້າກັບເຂົາທັງຫລາຍວ່າ “ເພາະບໍ່ມີພຣະເຈົ້າໃນອິສຣາເອນແລ້ວຫລື ທ່ານຈຶ່ງໄປຖາມພຣະບາ
ອານເຊບູບ ພຣະເຈົ້າຂອງເອກໂຣນ”
4 ເພາະສະນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເຈົ້າຈະບໍ່ໄດ້ລົງມາຈາກບ່ອນນອນຊຶ່ງເຈົ້າຂຶ້ນໄປນັ້ນ ແຕ່ເຈົ້າຈະຕ້ອງ
ຕາຍແນ່ນອນ” ແລ້ວເອລີຢາກໍໄປ
5 ຜູ້ສື່ງຂ່າວນັ້ນກໍກັບມາເຝົ້າເຈົ້າຊີວິດ ພຣະອົງໄດ້ຖາມເຂົາທັງຫລາຍວ່າ, “ເປັນຫຍັງພວກເຈົ້າຈຶ່ງພາກັນກັບມາ?”
6 ແລະເຂົາທັງຫລາຍທູນພຣະອົງວ່າ, “ມີຊາຍຄົນນຶ່ງມາພົບກັບພວກຂ້ານ້ອຍ ແລະເວົ້າກັບພວກຂ້ານ້ອຍວ່າ “ຈົ່ງກັບ
ໄປຫາພຣະຣາຊາຜູ້ໃຊ້ທ່ານມາ ແລະທູນພຣະອົງວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະບໍ່ມີພຣະເຈົ້າໃນອິສຣາເອນ
ແລ້ວຫລື ເຈົ້າຈຶ່ງໃຊ້ຄົນໄປຖາມພຣະບາອານເຊບູບພຣະເຈົ້າແຫ່ງເອກໂຣນ ເພາະສະນັ້ນເຈົ້າຈະບໍ່ໄດ້ລົງມາຈາກ
ບ່ອນນອນຊຶ່ງເຈົ້າໄດ້ຂຶ້ນໄປນັ້ນ ແຕ່ເຈົ້າຈະຕ້ອງຕາຍແນ່ນອນ”
7 ພຣະອົງໄດ້ຖາມເຂົາທັງຫລາຍວ່າ, “ຄົນທີ່ໄດ້ມາພົບເຈົ້າ ແລະບອກສິ່ງເຫລົ່ານີ້ແກ່ເຈົ້ານັ້ນເປັນຄົນລັກສນະແບບ
ໃດ?”
8 ເຂົາທັງຫລາຍທູນຕອບພຣະອົງວ່າ, “ທ່ານສວມເສື້ອຂົນ ແລະມີຫນັງຄາດແອວຂອງທ່ານໄວ້” ແລະພຣະອົງເວົ້າວ່າ,
“ເປັນເອລີຢາ ຊາວຕິສບີ”
9 ແລ້ວເຈົ້າຊີວິດກໍຮັບສັ່ງໃຫ້ນາຍຫ້າສິບກັບທະຫານຫ້າສິບຄົນໄປຫາເອລີຢາ ເຂົາໄດ້ຂຶ້ນໄປຫາທ່ານ ເບິ່ງແມ໋, ທ່ານ
ນັ່ງຢູ່ເທິງຍອດພູເຂົາ ແລະນາຍຫ້າສິບກ່າວແກ່ທ່ານວ່າ, “ຂ້າແດ່ຄົນແຫ່ງພຣະເຈົ້າ ພຣະຣາຊາໄດ້ສັ່ງດັ່ງນີ້ວ່າ “ລົງ
ມາ”
10 ແຕ່ເອລີຢາຕອບນາຍຫ້າສິບວ່າ, “ຖ້າຂ້ອຍເປັນຄົນແຫ່ງພຣະເຈົ້າ ກໍຂໍໃຫ້ໄຟລົງມາຈາກຟ້າສວັນເຜົາຜານເຈົ້າແລະ
ຄົນທັງຫ້າສິບຄົນຂອງເຈົ້າເຖີດ” ແລ້ວໄຟກໍລົງມາຈາກຟ້າສວັນ ແລະເຜົາຜານເຂົາກັບຄົນທັງຫ້າສິບຂອງເຂົາເສັຽ

11 ເຈົ້າຊີວິດກໍຮັບສັ່ງໃຫ້ນາຍຫ້າສິບກັບທະຫານຫ້າສິບຄົນອີກພວກນຶ່ງໄປ ແລະເຂົາກໍກ່າວແກ່ທ່ານວ່າ, "ຂ້າແດ່ຄົນ
ແຫ່ງພຣະເຈົ້າ   ພຣະຣາຊາສັ່ງດັ່ງນີ້ວ່າ "ລົງມາ ໄວໆ"
12 ແຕ່ເອລີຢາຕອບວ່າ, "ຖ້າຂ້ອຍເປັນຄົນແຫ່ງພຣະເຈົ້າ ກໍຂໍໃຫ້ໄຟລົງມາຈາກຟ້າສວັນເຜົາຜານເຈົ້າ ແລະຄົນທັງຫ້າ
ສິບຂອງເຈົ້າເຖີດ" ແລະໄຟຂອງພຣະເຈົ້າລົງມາຈາກຟ້າສວັນແລະເຜົາຜານເຂົາກັບຄົນທັງຫ້າສິບຂອງເຂົາເສັຽ
13 ເຈົ້າຊີວິດຮັບສັ່ງໃຫ້ນາຍຫ້າສິບຄົນທີສາມໄປພ້ອມກັບທະຫານຫ້າສິບຄົນຂອງເຂົາ ແລະນາຍຫ້າສິບຄົນທີສາມກໍຂຶ້ນ
ໄປ ແລະຄຸເຂົ່າລົງຕໍ່ຫນ້າເອລີຢາ ແລະວິງວອນທ່ານວ່າ, "ຂ້າແດ່ຄົນແຫ່ງພຣະເຈົ້າ ຂໍຊີວິດຂອງຂ້າພະເຈົ້າ ແລະຊີ
ວິດຂອງຜູ້ຮັບໃຊ້ຂອງທ່ານອີກຫ້າສິບຄົນນີ້ໃຫ້ເປັນສິ່ງທີ່ປະເສີດໃນສາຍຕາຂອງທ່ານ
14 ເບິ່ງແມ່, ໄຟລົງມາຈາກຟ້າສວັນແລະໄດ້ເຜົາຜານນາຍຫ້າສິບທັງສອງຄົນກ່ອນນັ້ນເສັຽພ້ອມທັງທະຫານຫ້າສິບຄົນ
ຂອງເຂົາດ້ວຍ ແຕ່ບັດນີ້ຂໍໃຫ້ຊີວິດຂອງຂ້າພະເຈົ້າ
15 ເປັນສິ່ງທີ່ປະເສີດໃນສາຍຕາຂອງທ່ານ" ແລ້ວທູດຂອງພຣະຜູ້ເປັນເຈົ້າກ່າວແກ່ເອລີຢາວ່າ, "ຈົ່ງລົງໄປກັບເຂົາເຖີດ
ຢ່າຢ້ານເຂົາເລີຍ" ທ່ານກໍລຸກຂຶ້ນລົງໄປກັບເຂົາເຂົ້າເຝົ້າເຈົ້າຊີວິດ
16 ແລະທູນພຣະອົງວ່າ, "ພຣະເຈົ້າຊົງກ່າວດັ່ງນີ້ວ່າ, "ເພາະເຈົ້າໄດ້ສົ່ງຜູ້ສົ່ງຂ່າວໄປຍັງບາອານເຊບູບພຣະເຈົ້າແຫ່ງເອກ
ໂຣນ (ເພາະບໍ່ມີພຣະເຈົ້າໃນອິສຣາເອນທີ່ຈະທູນຖາມພຣະຄຳຂອງພຣະອົງຢ່າງນັ້ນຫລື) ເພາະສະນັ້ນເຈົ້າຈະບໍ່ໄດ້
ລົງມາຈາກບ່ອນນອນຊຶ່ງເຈົ້າໄດ້ຂຶ້ນໄປນັ້ນ ແຕ່ເຈົ້າຈະຕ້ອງຕາຍແນ່ນອນ"

**ມໍຣະນະກັມຂອງອາຮາຊີຢາ**

Death of Ahaziah

17 ທ່ານກໍສິ້ນຊີວິດຕາມພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງເອລີຢາກ່າວນັ້ນ ແລະເຢໂຮຣາມກໍຂຶ້ນຄອງແທນ ໃນປີທີສອງ
ແຫ່ງຣັຊການເຢໂຮຊາຟັດກະສັດແຫ່ງຢູດາ ເພາະອາຮາຊີຢາບໍ່ມີໂອຣົດ
18 ສ່ວນພຣະຣາຊກິຈນອກນັ້ນຂອງອາຮາຊີຢາຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະ
ຣາຊາປະເທດອິສຣາເອນ

## 2 ພຣະຜູ້ເປັນເຈົ້າຊົງຮັບເອົາເອລີຢາຂຶ້ນສູ່ຟ້າສວັນ

Elijah Ascends to Heaven

1 ໃນຕອນທີ່ພຣະຜູ້ເປັນເຈົ້າຊົງບັນດານໃຫ້ລົມພະຍຸພັດ ເອລີຢາຂຶ້ນສູ່ຟ້າສວັນນັ້ນ ເຫດການໄດ້ເປັນມາດັ່ງນີ້ ເອລີຢາ
ກັບເອລີຊາພາກັນເດີນທາງອອກຈາກເມືອງກິນການ
2 ເອລີຢາໄດ້ບອກເອລີຊາວ່າ, "ຂໍໃຫ້ເຈົ້າຢູ່ບ່ອນນີ້ ສ່ວນຂ້ອຍຈະໄປເມືອງເບັດເອນຕາມທີ່ພຣະເຈົ້າຊົງສັ່ງ" ແຕ່ເອລີຊາ
ຕອບວ່າ, "ຂ້ານ້ອຍຂໍສາບານດ້ວຍຄວາມສັດຊື່ຕໍ່ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ແລະຕໍ່ທ່ານເອງວ່າ ຂ້ານ້ອຍຈະບໍ່
ພາກຈາກທ່ານໄປເລີຍ" ດັ່ງນັ້ນທັງສອງຈຶ່ງພາກັນເດີນທາງໄປຍັງເມືອງເບັດເອນ
3 ເມື່ອທັງສອງໄປຮອດແລ້ວ ພວກຄນະຜູ້ປະກາດພຣະທັມທີ່ຢູ່ໃນເມືອງເບັດເອນໄດ້ມາຫາເອລີຊາ ແລະເວົ້າຕໍ່ເຂົາ
ວ່າ, "ເຈົ້າບໍ່ຮູ້ບໍວ່າ ມື້ນີ້ພຣະຜູ້ເປັນເຈົ້າຈະຊົງຮັບເອົານາຍຂອງເຈົ້າໄປຈາກເຈົ້າ?" ເອລີຊາຕອບວ່າ, "ຢ່າສູ່ປາກ ຂ້ອຍ
ຮູ້ແລ້ວ"
4 ເອລີຢາເວົ້າຕໍ່ເອລີຊາວ່າ, "ຂໍໃຫ້ເຈົ້າຢູ່ບ່ອນນີ້ ເພາະພຣະຜູ້ເປັນເຈົ້າຊົງສັ່ງຂ້ອຍໄປເມືອງເຢຣີໂກ" ແຕ່ເອລີຊາຕອບ
ວ່າ, "ຂ້ານ້ອຍຂໍສາບານດ້ວຍຄວາມສັດຊື່ຕໍ່ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ແລະຕໍ່ທ່ານເອງວ່າ ຂ້ານ້ອຍຈະບໍ່ພາກ
ຈາກທ່ານໄປເລີຍ" ແລ້ວທັງສອງກໍພາກັນເດີນທາງໄປຍັງເມືອງເຢຣີໂກ
5 ພວກຄນະຜູ້ປະກາດພຣະທັມທີ່ຢູ່ໃນເມືອງເຢຣີໂກໄດ້ອອກມາພົບເອລີຊາ ແລະເວົ້າຕໍ່ເຂົາວ່າ, "ເຈົ້າຮູ້ບໍວ່າ ມື້ນີ້ພຣະ
ຜູ້ເປັນເຈົ້າຈະຊົງຮັບເອົານາຍຂອງເຈົ້າໄປຈາກເຈົ້າ?" ເອລີຊາຕອບວ່າ, "ຢ່າສູ່ປາກ ຂ້ອຍຮູ້ແລ້ວ"

6 ເອລີຢາຈຶ່ງເວົ້າຕໍ່ເອລີຊາວ່າ, “ຂໍໃຫ້ເຈົ້າຢູ່ບ່ອນນີ້ ເພາະວ່າພຣະຜູ້ເປັນເຈົ້າຊົງສັ່ງໃຫ້ຂ້ອຍໄປແມ່ນໍ້າຈໍແດນ” ແຕ່ເອລີ
ຊາຕອບຄືເກົ່າວ່າ, “ຂ້ານ້ອຍຂໍສາບານດ້ວຍຄວາມສັດຊື່ຕໍ່ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ແລະຕໍ່ທ່ານເອງວ່າ ຂ້າ
ນ້ອຍຈະບໍ່ພາກຈາກທ່ານໄປເລີຍ” ແລ້ວທັງສອງກໍພາກັນເດີນທາງຕໍ່ໄປນຳກັນ
7 ມີພວກຜູ້ປະກາດພຣະທັມຫ້າສິບຄົນຕິດຕາມພວກທ່ານໄປຈົນຮອດແມ່ນໍ້າຈໍແດນ ແລ້ວພວກຜູ້ປະກາດພຣະທັມກໍາ
ພາກັນຢືນຢູ່ຫ່າງໆ
8 ເອລີຢາໄດ້ແກ້ເສື້ອຄຸມອອກແລ້ວບິດເຂົ້າກັນ ແລະຕີລົງເທິງໜ້ານໍ້າ ນໍ້ານັ້ນກໍແຍກອອກ ທັງສອງຈຶ່ງຍ່າງຂ້າມໄປສູ່
ຝັ່ງນັ້ນ
9 ເມື່ອຂ້າມໄປແລ້ວ ເອລີຢາຈຶ່ງເວົ້າຕໍ່ເອລີຊາວ່າ, “ກ່ອນທີ່ຂ້ອຍຈະຖືກຮັບຂຶ້ນໄປນີ້ ເຈົ້າຢາກໄດ້ຫຍັງ ຈົ່ງຂໍມາເບິ່ງດູ”
ເອລີຊາຕອບວ່າ, “ຂໍໃຫ້ຂ້ານ້ອຍໄດ້ເປັນຜູ້ສືບແທນຮັບເອົາຣິດເດດສ່ວນໃຫຍ່ຈາກທ່ານເທີ້ນ”
10 ເອລີຢາຈຶ່ງຕອບວ່າ, “ເຈົ້າຮ້ອງຂໍເອົາໃນຂໍ້ທີ່ເປັນໄປໄດ້ຍາກທີ່ສຸດ ແຕ່ເຖິງຢ່າງໃດກໍຕາມ ຖ້າວ່າເຈົ້າເຫັນຂ້ອຍໃນຂ
ນະທີ່ຖືກຮັບ ຂຶ້ນໄປນັ້ນ ເຈົ້າຈະໄດ້ຮັບຕາມຄຳຮ້ອງຂໍ ຄັນຖ້າເຈົ້າບໍ່ເຫັນເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ”
11 ແຕ່ແລ້ວ ໃນຂນະທີ່ພວກທ່ານຍ່າງສົນທະນາກັນໄປນັ້ນ ຣົດມ້າທີ່ມີແປວໄຟພຸ້ງຫໍ່ແລ່ນຜ່ານທ່ານທັງສອງໄປ ແລ້ວ
ລົມພະຍຸກໍພັດເອົາເອລີຢາຂຶ້ນໄປສູ່ຟ້າສວັນ
12 ເອລີຊາຫລຽວເຫັນຈຶ່ງຮ້ອງຫາເອລີຢາ “ພໍ່ເອີຍ ພໍ່ເອີຍ ຜູ້ປ້ອງກັນຜູ້ຍິ່ງໃຫຍ່ແຫ່ງອິສຣາເອນເອີຍ ທ່ານຈາກໄປແລ້ວ
ໜໍ” ເມື່ອເອລີຊາບໍ່ເຫັນເອລີຢາ ເຂົາກໍຈີກເສື້ອຂອງຕົນຈົນຂາດເຄິ່ງ

Elisha Succeeds Elijah

13 ແລ້ວຈັບເອົາເສື້ອຄຸມຂອງເອລີຢາທີ່ຕົກລົງມານັ້ນ ກັບຄືນໄປຢືນຢູ່ແຄມຝັ່ງແມ່ນໍ້າຈໍແດນ
14 ເຂົາເອົາເສື້ອຟາດລົງນໍ້າ ແຕ່ນໍ້າກໍບໍ່ແຍກອອກຈາກກັນ ເຂົາຈຶ່ງຮ້ອງຂຶ້ນວ່າ, “ພຣະຜູ້ເປັນເຈົ້າຂອງເອລີຢາຢູ່ໃສ?”
ແລ້ວໄດ້ຟາດນໍ້າອີກເທື່ອນຶ່ງ ນໍ້າຈຶ່ງແຍກອອກ ເອລີຊາກໍຍ່າງຂ້າມໄປຝັ່ງນັ້ນ
15 ເມື່ອພວກຜູ້ປະກາດພຣະທັມຫ້າສິບຄົນຈາກເມືອງເຢຣິໂກຫລຽວເຫັນດັ່ງນັ້ນ ຈຶ່ງເວົ້າຂຶ້ນວ່າ, “ຣິດເດດຂອງເອລີຢາ
ໄດ້ຢູ່ນຳເອລີຊາແລ້ວ” ພວກເຂົາກໍພາກັນໄປຫາເອລີຊາ ກົ້ມຂາບລົງຕໍ່ໜ້າທ່ານ
16 ທັງເວົ້າວ່າ, “ພວກຂ້ານ້ອຍທັງຫ້າສິບຄົນຍັງຢູ່ທີ່ນີ້ ທຸກຄົນລ້ວນແຕ່ເປັນຜູ້ແຂງແຮງ ຂໍໃຫ້ພວກຂ້ານ້ອຍອອກໄປຊອກ
ຫານາຍຂອງທ່ານເທີ້ນ ບາງທີພຣະວິນຍານຂອງພຣະຜູ້ເປັນເຈົ້າຊົງເອົາທ່ານໄປປະໄວ້ເທິງຈອມພູ ຫລືຕາມຮ່ອມພູ
ບ່ອນໃດບ່ອນນຶ່ງກໍອາດເປັນໄປໄດ້ ເອລີຊາຕອບວ່າ, “ບໍ່ ພວກເຈົ້າບໍ່ຕ້ອງໄປດອກ”
17 ແຕ່ພວກເຂົາໄດ້ໜ່ຽວວອນຂໍຈົນທ່ານໄດ້ຍອມ ໃຫ້ພວກເຂົາໄປ ດັ່ງນັ້ນທັງຫ້າສິບຄົນຈຶ່ງອອກທ່ຽວຊອກຫາເປັນເວ
ລາສາມວັນ ແຕ່ກໍບໍ່ພົບເລີຍ
18 ແລ້ວພວກເຂົາໄດ້ພາກັນຄືນມາຫາເອລີຊາທີ່ຄອຍຖ້າຢູ່ເມືອງເຢຣິໂກ ເອລີຊາຈຶ່ງເວົ້າຕໍ່ພວກເຂົາວ່າ, “ຂ້ອຍໄດ້ບອກ
ພວກເຈົ້າແລ້ວວ່າບໍ່ຕ້ອງໄປ”

**ເອລີຊາເຮັດການອັດສະຈັນ**

Elisha Performs Miracles

19 ຊາວເມືອງເຢຣິໂກບາງຄົນໄດ້ເວົ້າຕໍ່ເອລີຊາວ່າ, “ເມືອງນີ້ເປັນຫນ້າຢູ່ຕາມທີ່ເຈົ້ານາຍເຫັນນີ້ແຫລະ ຫາກແຕ່ວ່ານໍ້າ
ໄດ້ເກີດເປັນພິດອັນເປັນເຫດໃຫ້ຍິງຫລາຍຄົນຫລຸລູກ”
20 ເອລີຊາຈຶ່ງບອກກັບພວກເຂົາວ່າ, “ຈົ່ງໄປເອົາເກືອໃສ່ຊາມໜ່ວຍໃໝ່ໆມາ” ພວກເຂົາກໍປະຕິບັດຕາມ
21 ທ່ານໄດ້ໄປທີ່ບໍ່ນໍ້າຫວ່ານເກືອລົງນໍ້າ ແລະເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງກ່າວໄວ້ວ່າ “ເຮົາທຳໃຫ້ນໍ້ານີ້ສະອາດຕໍ່ໄປ
ຄວາມຕາຍແລະການຫລຸລູກຈະບໍ່ມີອີກ”
22 ຕັ້ງແຕ່ນັ້ນມາຈົນເຖິງທຸກວັນນີ້ ນໍ້າກໍໄດ້ສະອາດດີເປັນຈິງຕາມເອລີຊາໄດ້ບອກໄວ້

23 ຈາກນັ້ນເອລີຊາກໍຈາກເມືອງເຢຣິໂກໄປສູ່ເມືອງເບັດເອນ ໃນຂະນະທີ່ທ່ານກຳລັງຍ່າງຕາມທາງນັ້ນໄດ້ມີພວກເດັກ
ນ້ອຍຜູ້ຊາຍຈຳນວນນຶ່ງທີ່ອອກມາຈາກໃນເມືອງຮ້ອງເຍີ້ຍໃສ່ທ່ານວ່າ, "ຂຶ້ນໄປ ຂຶ້ນໄປໂລດເຖົ້າຫົວລ້ານ"
24 ເອລີຊາງວາກຫນ້າມາຈ້ອງເບິ່ງເຂົາ ແລະສາບແຊ່ງພວກເຂົາໃນພຣະນາມຂອງພຣະຜູ້ເປັນເຈົ້າ ແລ້ວໄດ້ມີຫມີແມ່
ສອງໂຕອອກມາຈາກປ່າ ຫມີນັ້ນໄດ້ຈີກເດັກນ້ອຍຈຳນວນສີ່ສິບຄົນຢູ່ທີ່ນັ້ນຕາຍຫມົດ
25 ສ່ວນເອລີຊາກໍເດີນທາງໄປຍັງພູກາຣ໌ເມນ ແລະພາຍລຸນມາກໍກັບຄືນມາກຸງຊາມາເຣັຽ

## 3 ຣັຊການເຢໂຮຣາມກະສັດແຫ່ງອິສຣາເອນ

Jehoram Reigns over Israel

1 ໃນປີທີສິບແປດຂອງຣັຊການເຢໂຮຊາຟັດກະສັດແຫ່ງຢູດາ ເຢໂຮຣາມໂອຣົດຂອງອາຮາບໄດ້ເລີ້ມປົກຄອງເຫນືອອິ
ສຣາເອນໃນກຸງຊາມາເຣັຽ ແລະຊົງປົກຄອງສິບສອງປີ
2 ພຣະອົງຊົງກະທຳສິ່ງທີ່ຊົ່ວໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ແຕ່ບໍ່ເຫມືອນບິດາແລະມານດາຂອງພຣະອົງ ພ
ຣະອົງຊົງທຳລາຍເສົາສັກສິດແຫ່ງພຣະບາອານຊຶ່ງຣາຊບິດາຂອງພຣະອົງຊົງກະທຳໄວ້ເສັຽ
3 ແຕ່ພຣະອົງຍັງຊົງເກາະຕິດຢູ່ກັບບາບຂອງເຢໂຣໂບອາມບຸດເນບັດ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນທຳ ດ້ວຍພ
ຣະອົງບໍ່ໄດ້ຊົງພາກຈາກບາບນັ້ນ

### ເອລີຊາທຳນວາຍວ່າ ຈະຊະນະໂມອາບ

War with Moab

4 ຝ່າຍເມຊາກະສັດແຫ່ງໂມອາບຊົງເປັນຜູ້ລ້ຽງສັດ ແລະພຣະອົງຕ້ອງຖວາຍລູກແກະນຶ່ງແສນໂຕ ແລະຂົນແກະເຖິກ
ແສນໂຕໃຫ້ແກ່ກະສັດອິສຣາເອນ
5 ແຕ່ຢູ່ມາເມື່ອອາຮາບສິ້ນພຣະຊົນແລ້ວ ກະສັດແຫ່ງໂມອາບກໍກະບົດຕໍ່ກະສັດແຫ່ງອິສຣາເອນ
6 ກະສັດເຢໂຮຣາມຈຶ່ງອອກຈາກຊາມາເຣັຽໃນຄັ້ງນັ້ນ ແລະຊົງເກນຄົນອິສຣາເອນທັງສິ້ນ
7 ພຣະອົງຊົງສົ່ງສານໄປຍັງເຢໂຮຊາຟັດພຣະຣາຊາແຫ່ງຢູດາວ່າ, "ພຣະຣາຊາແຫ່ງໂມອາບໄດ້ກະບົດຕໍ່ຂ້າພະເຈົ້າ
ທ່ານຈະໄປຮົບກັບໂມອາບພ້ອມກັບຂ້າພະເຈົ້າໄດ້ຫລືບໍ?" ແລະທ່ານວ່າ, "ເຮົາຈະໄປ ເຮົາກໍເປັນດັ່ງທີ່ທ່ານເປັນ
ແລະປະຊາຊົນຂອງເຮົາກໍເປັນດັ່ງປະຊາຊົນຂອງທ່ານ ບັນດາມ້າຂອງເຮົາກໍເປັນດັ່ງມ້າຂອງທ່ານ"
8 ແລ້ວທ່ານວ່າ, "ເຮົາຈະຂຶ້ນໄປທາງໃດ?" ເຢໂຮຣາມຊົງຕອບໄປວ່າ, "ໄປທາງຖິ່ນກັນດານເມືອງເອໂດມ"
9 ພຣະຣາຊາແຫ່ງອິສຣາເອນຈຶ່ງສະເດັດໄປພ້ອມກັບພຣະຣາຊາແຫ່ງຢູດາ ແລະພຣະຣາຊແຫ່ງເອໂດມ ແລະເມື່ອທັງ
ສາມກະສັດສະເດັດອ້ອມໄປໄດ້ເຈັດວັນແລ້ວກໍຫານ້ຳໃຫ້ກອງທັບແລະໃຫ້ສັດທີ່ຕິດຕາມມານັ້ນບໍ່ໄດ້
10 ແລ້ວເຈົ້າຊີວິດແຫ່ງອິສຣາເອນຈຶ່ງເວົ້າວ່າ, "ອະນິດຈາເອີຍ, ພຣະຜູ້ເປັນເຈົ້າຊົງເອີ້ນສາມກະສັດນີ້ມາເພື່ອຈະມອບ
ໄວ້ໃນມືຂອງໂມອາບ"
11 ແລະເຢໂຮຊາຟັດເວົ້າວ່າ, "ບ່ອນນີ້ບໍ່ມີຜູ້ປະກາດພຣະທັມຂອງພຣະຜູ້ເປັນເຈົ້າ ເພື່ອເຮົາຈະໃຫ້ທູນຖາມພຣະຜູ້ເປັນ
ເຈົ້າຫລື" ແລ້ວຂ້າຣາຊການຄົນນຶ່ງຂອງກະສັດອິສຣາເອນຈຶ່ງທູນວ່າ, "ເອລີຊາບຸດຊາຟັດຢູ່ທີ່ນີ້ ເປັນຜູ້ເທນ້ຳໃສ່ມືເອລີ
ຢາ"
12 ແລ້ວເຢໂຮຊາຟັດເວົ້າວ່າ, "ພຣະຄຳຂອງພຣະຜູ້ເປັນເຈົ້າຢູ່ກັບທ່ານ" ເຈົ້າຊີວິດແຫ່ງອິສຣາເອນ ແລະເຢໂຮຊາຟັດ
ແລະເຈົ້າຊີວິດແຫ່ງເອໂດມຈຶ່ງສະເດັດລົງໄປຫາທ່ານ
13 ແລະເອລີຊາທູນເຈົ້າຊີວິດແຫ່ງອິສຣາເອນວ່າ, "ພຣະອົງມີເຣື່ອງໃດກ່ຽວຂ້ອງກັບຂ້ານ້ອຍ ສະເດັດໄປຫາຜູ້ປະກາດພ
ຣະທັມຂອງສະເດັດພໍ່ ແລະສະເດັດແມ່ຂອງພຣະອົງເຖີດ" ແຕ່ເຈົ້າຊີວິດແຫ່ງອິສຣາເອນເວົ້າກັບທ່ານວ່າ, "ບໍ່ໄດ້
ດອກ ດ້ວຍວ່າພຣະຜູ້ເປັນເຈົ້າຊົງເປັນຜູ້ເອີ້ນກະສັດທັງສາມນີ້ມາເພື່ອມອບໄວ້ໃນມືຂອງໂມອາບ"

14 ແລະເອລີຊາທູນວ່າ, “ພຣະຜູ້ເປັນເຈົ້າຈອມໂຍທາ ຊຶ່ງຂ້ານ້ອຍປົວຣະບັດຊົງພຣະຊົນຢູ່ ຖ້າຂ້ານ້ອຍບໍ່ໄດ້ເຄົາຣົບນັບ
ຖືຕໍ່ເຢໂຮຊາ ຟັດ ພຣະຣາຊາແຫ່ງຢູດາແລ້ວ ຂ້ານ້ອຍຈະບໍ່ເບິ່ງພຣະພັກພຣະອົງຫລືດູແລພຣະອົງເລີຍ
15 ຂໍຊົງນຳຜູ້ຫລິ້ນເຄື່ອງສາຍມາໃຫ້ຂ້ານ້ອຍຈັກຄົນນຶ່ງ” ແລະເມື່ອຜູ້ຫລິ້ນສາຍບັນເລງແລ້ວຣິດທານຸພາບຂອງພຣະຜູ້
ເປັນເຈົ້າກໍມາເຫນືອທ່ານ
16 ແລະທ່ານທູນວ່າ, “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເຮັດຮ່ອມພູນີ້ໃຫ້ເປັນສະທີ່ວໄປຫມົດ”
17 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເຈົ້າທັງຫລາຍຈະບໍ່ເຫັນລົມຫລືຝົນ ເຖິງຢ່າງໃດກໍດີຮ່ອມພູນັ້ນຈະມີນ້ຳເຕັມໄປ
ຫມົດ ເພື່ອເຈົ້າຈະໄດ້ດື່ມ ທັງເຈົ້າ ຝູງສັດລ້ຽງແລະສັດໃຊ້ຂອງເຈົ້າ”
18 ເຣື່ອງຢ່າງນີ້ເປັນເຣື່ອງນ້ອຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະອົງຈະຊົງມອບຄົນໂມອາບໄວ້ໃນມືຂອງເຈົ້າ
ດ້ວຍ
19 ເຈົ້າຈະໂຈມຕີເມືອງທີ່ມີປ້ອມທຸກເມືອງ ແລະເມືອງເອກທຸກເມືອງ ແລະຈະໂຄ່ນລົ້ມຕົ້ນໄມ້ທຸກຕົ້ນ ແລະຈະຖົມນ້ຳພຸ
ທຸກແຫ່ງເສັຽ ແລະທຳໄຮ່ນາທີ່ດີທຸກຕອນໃຫ້ເສັຽດ້ວຍຫີນ
20 ແລະຢູ່ມາພໍຮຸ່ງເຊົ້າປະມານເວລາຖວາຍເຄື່ອງບູຊາ ເບິ່ງແມ່,ມີນ້ຳມາຈາກທາງເມືອງເອໂດມ ຈົນແຜ່ນດິນມີນ້ຳເຕັມ
ຫມົດ
21 ແລະເມື່ອຄົນໂມອາບທັງຫລາຍໄດ້ຍິນວ່າບັນດາພຣະຣາຊາຍົກໄປສູ້ຮົບກັບຕົນ ຄົນທີ່ມີອາຍຸສວມເກາະແລະສູງຂຶ້ນ
ໄປກໍໄດ້ຮວບຮວມກັນເຂົ້າ ແລະຍົກໄປຕັ້ງທີ່ເຂດແດນ
22 ເມື່ອເຂົາຕື່ນຂຶ້ນໃນຕອນເຊົ້າ ແລະຕາເວັນສ່ອງແສງຢູ່ເທິງນ້ຳ ຄົນໂມອາບເຫັນນ້ຳທີ່ຢູ່ກົງຂ້າມກັບຕົນແດງເຫມືອນ
ເລືອດ
23 ເຂົາທັງຫລາຍກ່າວວ່າ, “ນີ້ແມ່ນເລືອດ ບັນດາເຈົ້າຊີວິດທີ່ໄດ້ສູ້ຮົບກັນເອງ ແລະຂ້າກັນເອງ ໂມອາບເອີຍ, ມາເຖີດ
ມາຍຶດເອົາເຄື່ອງຂອງຂອງເຂົາ”
24 ແຕ່ເມື່ອເຂົາມາເຖິງຄ້າຍອິສຣາເອນ ຄົນອິສຣາເອນກໍລຸກຂຶ້ນຕໍ່ສູ້ກັບຄົນໂມອາບຈົນເຂົາທັງຫລາຍຫນີໄປ ແລະເຂົາກໍ
ບຸກຫນ້າເຂົ້າໄປໃນແຜ່ນດິນຂ້າຟັນຄົນໂມອາບ
25 ເຂົາທັງຫລາຍໄດ້ທລາຍທົ່ວເມືອງ ແລະຕ່າງຄົນກໍຕ່າງໂຍນຫີນເຂົ້າໄປໃນໄຮ່ນາທີ່ດີທຸກຕອນ ເຂົາຖົມນ້ຳພຸເສັຽທຸກ
ແຫ່ງ ແລະໂຄ່ນລົ້ມຕົ້ນໄມ້ດີໆເສັຽຫມົດ ຈົນໃນກີຣ໌ຮາເຣເຊທ ມີແຕ່ຫີນຂອງເມືອງເຫລືອຢູ່ ບັນດານັກສະລິງໄດ້ລ້ອມ
ເມືອງໄວ້ແລະໂຈມຕີໄດ້
26 ເມື່ອພຣະຣາຊາແຫ່ງໂມອາບຊົງເຫັນວ່າຈະສູ້ບໍ່ໄດ້ ພຣະອົງກໍຊົງພາພົນດາບເຈັດຮ້ອຍຄົນຈະຕີຜ່າອອກມາທາງດ້ານ
ພຣະຣາຊາເມືອງເອໂດມ ແຕ່ອອກມາບໍ່ໄດ້
27 ແລ້ວພຣະອົງຊົງນຳໂອຣົດຫົວປີ ຜູ້ຊຶ່ງຄວນຈະຂຶ້ນຄອງແທນນັ້ນ ຖວາຍເປັນເຄື່ອງເຜົາບູຊາເສັຽທີ່ເທິງກຳແພງ ແລະ
ມີພຣະພິໂຣດອັນໃຫຍ່ຍິ່ງຕໍ່ພວກອິສຣາເອນ ເຂົາທັງຫລາຍກໍຍົກຖອຍໄປຈາກພຣະອົງແລະກັບບ້ານເມືອງຂອງຕົນ

## 4 ເອລີຊາ ແລະນ້ຳມັນຂອງຍິງຫມ້າຍ

Elisha and the wisdom’s oil

(1ກສດ 17:14-16)

1 ພັຣຍາຂອງຄົນນຶ່ງໃນພວກຜູ້ປະກາດພຣະທັມຮ້ອງຕໍ່ເອລີຊາວ່າ, “ຜູ້ຮັບໃຊ້ຂອງທ່ານ ຄື ຜົວຂອງຂ້ານ້ອຍສິ້ນຊີວິດ
ເສັຽແລ້ວ ແລະທ່ານກໍຮູ້ຢູ່ແລ້ວວ່າຜູ້ຮັບໃຊ້ຂອງທ່ານຢຳເກງພຣະຜູ້ເປັນເຈົ້າ ແຕ່ເຈົ້າຫນີ້ໄດ້ມາ ເພື່ອນຳເອົາບຸດສອງ
ຄົນຂອງຂ້ານ້ອຍໄປເປັນທາດຂອງເຂົາ”
2 ແລະເອລີຊາຕອບວ່າ, “ບອກຂ້ອຍມາດູວ່າ ຈະໃຫ້ຂ້ອຍຊ່ອຍຫຍັງ ເຈົ້າມີຫຍັງຢູ່ໃນບ້ານແດ່? ແລະນາງຕອບວ່າ,
“ສາວໃຊ້ຂອງທ່ານບໍ່ມີຫຍັງໃນບ້ານນອກຈາກນ້ຳມັນນຶ່ງໄຫ”

3 ແລະທ່ານກ່າວວ່າ, "ຈົ່ງອອກໄປນອກບ້ານ ຂໍຢືມພາຊະນະຈາກເພື່ອນບ້ານທຸກຄົນຂອງເຈົ້າມາ ເປັນພາຊະນະເປົ່າ ຢ່າໃຫ້ນ້ອຍ

4 ແລ້ວຈົ່ງເຂົ້າໄປໃນເຮືອນ ປິດປະຕູຂັງຕົວເຈົ້າແລະລູກຊາຍຂອງເຈົ້າໄວ້ ແລະຈົ່ງເທນ້ຳມັນໃສ່ພາຊະນະທັງຫມົດ ເມື່ອອັນນຶ່ງໆເຕັມແລ້ວກໍຕັ້ງໄວ້ຕ່າງຫາກ"

5 ນາງກໍລາໄປ ແລະປິດປະຕູຂັງນາງແລະບຸດຂອງນາງໄວ້ ລູກຊາຍສົ່ງພາຊະນະມາໃຫ້ແລະນາງກໍເທນ້ຳມັນ

6 ແລະຢູ່ມາເມື່ອພາຊະນະເຕັມຫມົດແລ້ວ ນາງຈຶ່ງບອກບຸດວ່າ, "ເອົາພາຊະນະໃຫ້ແມ່ອີກໃບນຶ່ງ" ແລະເຂົາຕອບນາງວ່າ, "ບໍ່ມີອີກແລ້ວ" ແລ້ວນ້ຳມັນກໍຢຸດໄຫລ

7 ນາງກໍໄປເຮືອນໃຫ້ຄົນຂອງພຣະຜູ້ເປັນເຈົ້າຮູ້ ແລະທ່ານບອກວ່າ, "ໄປໂລດ ຂາຍນ້ຳມັນເສັຽ ເອົາເງິນຊຳຣະຫນີ້ຂອງເຈົ້າ ທີ່ເຫລືອນອກນັ້ນເຈົ້າແລະລູກຂອງເຈົ້າຈົ່ງໃຊ້ລ້ຽງຊີວິດ"

**ເອລີຊາ ແລະຍິງຊູເນມ**

Elisha Raises the Shunammite's Son

(1 ກສດ 17:17-24)

8 ວັນນຶ່ງເອລີຊາໄດ້ເດີນທາງໄປຍັງເມືອງຊູເນມ ມີຍິງຖານະດີຄົນນຶ່ງອາໄສຢູ່ ແລະນາງໄດ້ຫນ່ຽວເຊີນທ່ານໃຫ້ຮັບປະທານອາຫານ ດັ່ງນັ້ນເມື່ອທ່ານຜ່ານທາງນັ້ນໄປເມື່ອໃດ ທ່ານກໍແວະເຂົ້າໄປຮັບປະທານອາຫານ

9 ຍິງຄົນນີ້ໄດ້ເວົ້າກັບຜົວຕົນວ່າ, "ຂ້ອຍເຊື່ອແນ່ວ່າຊາຍຜູ້ນີ້ມາເຮືອນເຮົາເລື້ອຍໆ ຈະຕ້ອງເປັນຄົນບໍຣິສຸດຂອງພຣະເຈົ້າ

10 ຂໍໃຫ້ພວກເຮົາຈັດແຈ່ງຫ້ອງນອນໆໄວ້ເທິງຫລັງຄາພຽງ ແລ້ວຈັດເອົາຕຽງ ໂຕະ ຕັ່ງ ແລະຕະກຽງໄວ້ໃຫ້ທ່ານ ເພື່ອວ່າເມື່ອໃດທ່ານມາຫາເຮົາ ກໍໃຫ້ທ່ານພັກຢູ່ບ່ອນນັ້ນ"

11 ວັນນຶ່ງເອລີຊາມາເມືອງຊູເນມອີກ ທ່ານໄດ້ແວ່ຂຶ້ນໄປພັກເຊົາຢູ່ຫ້ອງນັ້ນຄືເກົ່າ

12 ທ່ານຈຶ່ງບອກເກຮາຊີຄົນໃຊ້ຂອງທ່ານວ່າ, "ໄປເອີ້ນຍິງຊາວຊູເນມຄົນນີ້ມາ" ເມື່ອເຂົາເອີ້ນນາງ ນາງກໍມາຢືນຢູ່ຕໍ່ຫນ້າທ່ານ

13 ເອລີຊາກໍບອກໃຫ້ຄົນໃຊ້ຖາມນາງວ່າ, "ເຈົ້າໄດ້ຫຍຸ້ງຍາກລຳບາກຍ້ອນພວກເຮົາຫລາຍ ເຮົາຂໍຖາມເຈົ້າວ່າ ເຈົ້າຢາກໃຫ້ເຮົາຊ່ອຍຫຍັງແດ່? ບາງທີເຈົ້າອາດຢາກໃຫ້ເຮົາໄປທູນຄຸນງາມຄວາມດີຂອງເຈົ້າຕໍ່ກະສັດ ຫລືລາຍງານຕໍ່ຜູ້ບັນຊາການກອງທັບອາດເປັນໄປໄດ້" ນາງຈຶ່ງຕອບວ່າ, "ຂ້ານ້ອຍຢູ່ນຳຍາດພີ່ນ້ອງ ກໍພໍຢູ່ພໍກິນແລ້ວ"

14 ແລະທ່ານກ່າວວ່າ, "ຖ້າຢ່າງນັ້ນຈະໃຫ້ເຮົາຊ່ອຍຫຍັງນາງ" ເກຮາຊີຕອບວ່າ, "ແທ້ຈິງເພາະນາງບໍ່ມີບຸດ ແລະຜົວຂອງນາງກໍເຖົ້າແລ້ວ"

15 ທ່ານຈຶ່ງບອກວ່າ, "ໄປເອີ້ນນາງມາ" ແລະເມື່ອເຂົາໄປເອີ້ນນາງ ນາງກໍມາຢືນຢູ່ທີ່ປະຕູ

16 ທ່ານກ່າວວ່າ, "ປີຫນ້າໃນເວລາດຽວກັນນີ້ ເຈົ້າຈະໄດ້ອຸ້ມລູກຊາຍ" ແລະນາງອຸທານວ່າ, "ໂອຍ, ທ່ານເອີຍ ທ່ານເປັນຄົນຂອງ ພຣະເຈົ້າ ກະຣຸນາຢ່າຕວົະຂ້ານ້ອຍເລີຍ"

17 ແລ້ວຕໍ່ມາ ຍິງຄົນນັ້ນກໍຖືພາ ພໍເຖິງເວລາກຳນົດນາງກໍເກີດບຸດຊາຍຕາມທີ່ເອລີຊາໄດ້ບອກໄວ້

18 ເມື່ອເດັກນ້ອຍນີ້ໃຫຍ່ເຕີບໂຕຂຶ້ນ ເຊົ້າມື້ນຶ່ງເຂົາກໍອອກໄປຫາພໍ່ຢູ່ທົ່ງນາ ໃນບ່ອນທີ່ພວກກ່ຽວເຂົ້າຢູ່

19 ໃນເວລານັ້ນເຂົາຮ້ອງຂຶ້ນວ່າ, "ໂອຍ, ຂ້ານ້ອຍເຈັບຫົວ ຂ້ານ້ອຍເຈັບຫົວ" ຜູ້ເປັນພໍ່ຈຶ່ງບອກຄົນໃຊ້ຂອງເຂົາວ່າ, "ອຸ້ມເຂົາໄປຫາແມ່ໄປ"

20 ແລະເມື່ອເຂົາອຸ້ມມາໃຫ້ແມ່ຂອງເດັກ ເດັກນັ້ນກໍນັ່ງຢູ່ເທິງຕັກແມ່ຈົນທ່ຽງວັນ ແລ້ວລູກນັ້ນກໍສິ້ນໃຈຕາຍ

21 ຜູ້ເປັນແມ່ຈຶ່ງນຳລູກໄປປົງໄວ້ເທິງຕຽງນອນຂອງເອລີຊາຄົນຂອງພຣະເຈົ້າ ແລ້ວນາງກໍອອກມາແລ້ວປິດປະຕູໄວ້

22 ນາງກໍໄປເອີ້ນຜົວຂອງນາງກ່າວວ່າ, "ບອກຄົນໃຊ້ເອົາລໍໂຕນຶ່ງມາໃຫ້ຂ້ອຍແດ່ ເພື່ອຂ້ອຍຈະໄດ້ຟ້າວໄປຫາຄົນຂອງພຣະເຈົ້າ ແລະຈະກັບຄືນມາໄວເທົ່າທີ່ຈະໄວໄດ້"

23 ແລະເຂົາຖາມວ່າ, “ເປັນຫຍັງຈຶ່ງໄປຫາທ່ານມື້ນີ້ ມັນບໍ່ແມ່ນຍາມເດືອນອອກໃຫມ່ ຫລືວັນບໍຣິສຸດຂອງພຣະເຈົ້າ”

24 ນາງຕອບວ່າ, “ບໍ່ເປັນຫຍັງດອກ” ແລ້ວນາງໄດ້ບອກໃຫ້ຄົນໃຊ້ເອົາອານໃສ່ຫລັງລໍ ແລະເວົ້າວ່າ, “ພາຂ້ອຍໄປໃຫ້ໄວ
ເທົ່າທີ່ຈະໄວໄດ້ ຢ່າຢຸດກາງທາງຈົນກວ່າຈະໄດ້ຮັບຄຳສັ່ງຈາກຂ້ອຍກ່ອນ”

25 ແລ້ວນາງກໍອອກເດີນທາງ ແລະມາເຖິງຄົນຂອງພຣະເຈົ້າທີ່ພູກາຣ໌ເມນ ເມື່ອຄົນຂອງພຣະເຈົ້າເຫັນນາງມາ ທ່ານກໍ
ເວົ້າກັບເກຣາຊີຄົນໃຊ້ຂອງທ່ານວ່າ, “ເບິ່ງດູຫັ້ນ ຍິງຊາວຊູເນມມາແມ່ນບໍ

26 ຮີບຟ້າວອອກຕ້ອນຮັບນາງ ແລະຖາມນາງເບິ່ງວ່າ ນາງທັງຜົວແລະລູກຍັງຄ່ອຍສະບາຍດີຢູ່ບໍ?” ແລະນາງກໍຕອບ
ວ່າ, “ສະບາຍດີ”

27 ແລະເມື່ອນາງມາຍັງພູ ເຖິງຄົນຂອງພຣະເຈົ້ານາງກໍກົ້ມຂາບລົງກອດຕີນຂອງເອລີຊາ ເກຣາຊີຈຶ່ງຍ່າງເຂົ້າມາຫາທ່ານ
ຈະດຶງເອົານາງອອກໄປ ແຕ່ເອລີຊາບອກວ່າ, “ປ່ອຍນາງເທີນ ເຈົ້າບໍ່ເຫັນບໍວ່ານາງມີຄວາມທຸກໃຈອັນໃຫຍ່ຫລວງ ພ
ຣະຜູ້ເປັນເຈົ້າຊົງອຳເຣື່ອງນີ້ໄວ້ ໂດຍບໍ່ໄດ້ບອກໃຫ້ເຮົາຮູ້”

28 ແລ້ວນາງຈຶ່ງເວົ້າວ່າ, “ຂ້ານ້ອຍເຄີຍຂໍຈາກທ່ານກ່ຽວກັບເຣື່ອງລູກຊາຍນັ້ນ ແມ່ນບໍ? ຂ້ານ້ອຍໄດ້ເວົ້າບໍ່ແມ່ນບໍວ່າ ຢ່
າຕົວະຢ່າຫລອກລວງຂ້ານ້ອຍເລີຍ?

29 ເມື່ອເປັນດັ່ງນັ້ນທ່ານຈຶ່ງເວົ້າຕໍ່ເກຣາຊີວ່າ, “ຈົ່ງຟ້າວຖືໄມ້ເທົ້າຂອງເຮົານີ້ລ່ວງຫນ້າໄປກ່ອນ ຖ້າວ່າເຈົ້າພົບໃຜກໍຢ່າ
ຖາມສະບາຍດີກັບເຂົາ ແລະຖ້າໃຜສະບາຍດີກັບເຈົ້າກໍຢ່າຕອບເຂົາເດີ ໃຫ້ເອົາໄມ້ເທົ້າຂອງເຮົານີ້ຢຽດໃສ່ເທິງຫນ້າ
ຂອງເດັກນັ້ນ”

30 ແລ້ວມານດາຂອງເດັກນັ້ນເວົ້າວ່າ, “ຂ້ານ້ອຍຂໍສາບານຢ່າງສັດຊື່ຕໍ່ພຣະຜູ້ເປັນເຈົ້າ ຜູ້ຊົງພຣະຊົນຢູ່ແລະຕໍ່ທ່ານ
ເອງວ່າ ຂ້ານ້ອຍຈະບໍ່ຈາກທ່ານໄປ” ດັ່ງນັ້ນເອລີຊາແລະແມ່ຂອງເດັກຈຶ່ງພາກັນອອກເດີນທາງໄປຕາມຫລັງ

31 ເກຣາຊີໄດ້ມຸ່ງຫນ້າໄປກ່ອນແລະເອົາໄມ້ເທົ້າຢຽດໃສ່ເດັກນ້ອຍນັ້ນ ແຕ່ບໍ່ມີສຽງຫລືຄຳຕອບຢ່າງໃດເລີຍ ເຂົາຈຶ່ງກັບ
ຄືນມາພົບທ່ານ ແລະບອກເອລີຊາວ່າ, “ເດັກນ້ອຍຍັງບໍ່ທັນຟື້ນຕົວເທື່ອ”

32 ເມື່ອເອລີຊາເຂົ້າມາໃນເຮືອນ ທ່ານເຫັນເດັກນ້ອຍນອນຕາຍຢູ່ເທິງຕຽງຂອງທ່ານ

33 ທ່ານຈຶ່ງເຂົ້າໄປຂ້າງໃນອັດປະຕູໄວ້ ແລ້ວໄດ້ອ້ອນວອນຫາພຣະຜູ້ເປັນເຈົ້າ

34 ແລ້ວທ່ານຂຶ້ນເທິງຕຽງ ແລະນອນຢຽດຕົວລົງເຕັງເດັກນ້ອຍ ໂດຍເອົາປາກເຕັງປາກ ຕາເຕັງຕາ ແລະມືເຕັງມື ແລະ
ເມື່ອທ່ານຢຽດເຕັງເດັກນ້ອຍຢູ່ນັ້ນ ເນື້ອຫນັງຂອງເດັກກໍຮູ້ສຶກອຸ່ນຂຶ້ນມາ

35 ແລ້ວທ່ານກໍລຸກຍ່າງໄປມາຢູ່ໃນຫ້ອງ ແລ້ວໄປນອນຢຽດຕົວເຕັງເດັກນ້ອຍອີກເທື່ອນຶ່ງ ຄັ້ງນີ້ເດັກນ້ອຍກໍຈາມເຖິງເຈັດ
ເທື່ອ ແລະມືນຕາຂຶ້ນ

36 ແລ້ວທ່ານກໍເອີ້ນເກຣາຊີມາບອກວ່າ, “ໄປເອີ້ນຍິງຊູເນມຄົນນີ້ມາ” ເຂົາຈຶ່ງໄປເອີ້ນນາງ ແລະເມື່ອນາງມາຮອດທ່ານ
ແລ້ວ ທ່ານຈຶ່ງເວົ້າກັບນາງວ່າ, “ຈົ່ງອຸ້ມລູກຂອງເຈົ້າໄປເຖີດ”

37 ນາງເຂົ້າໄປທາງໃນ ກົ້ມຂາບຕີນເອລີຊາ ແລະພາລູກຊາຍຂອງນາງອອກໄປ

Elisha Purifies the Pot of Stew

38 ເອລີຊາມາເຖິງກິນການອີກ ເມື່ອແຜ່ນດິນເກີດກັນດານອາຫານ ແລະເມື່ອພວກຜູ້ປະກາດພຣະທັມນັ່ງຢູ່ຕໍ່ຫນ້າທ່ານ
ທ່ານກໍບອກຄົນໃຊ້ຂອງທ່ານວ່າ, “ຈົ່ງຕັ້ງຫມໍ້ຫນ່ວຍໃຫຍ່ແລະຕົ້ມເຂົ້າໃຫ້ແກ່ພວກຜູ້ປະກາດພຣະທັມ”

39 ຄົນນຶ່ງໃນພວກອອກໄປເກັບຜັກທີ່ໃນທົ່ງນາ ແລະພົບໄມ້ເຄືອປ່າເຄືອນຶ່ງ ເຂົາເກັບໄດ້ຫມາກນ້ຳເຕົ້າປ່າຈົນເຕັມຕັກ
ກັບມາຜ່າໃສ່ໃນຫມໍ້ເຂົ້າຕົ້ມໂດຍບໍ່ຮູ້ວ່າເປັນຫມາກຫຍັງ

40 ເຂົາກໍເທອອກໃຫ້ຄົນເຫລົ່ານັ້ນຮັບປະທານ ຂນະທີ່ເຂົາກຳລັງຮັບປະທານເຂົ້າຕົ້ມຢູ່ນັ້ນ ເຂົາຮ້ອງຂຶ້ນວ່າ, “ຂ້າແດ່ຄົນ
ແຫ່ງພຣະເຈົ້າ ມີຄວາມຕາຍຢູ່ໃນຫມໍ້ນີ້” ແລະເຂົາກໍຮັບປະທານກັນບໍ່ໄດ້

41 ທ່ານກໍວ່າ, “ຈົ່ງເອົາແປ້ງມາ” ທ່ານກໍໃສ່ແປ້ງລົງໃນຫມໍ້ ແລະບອກວ່າ, “ຈົ່ງເທອອກໃຫ້ຄົນເຫລົ່ານັ້ນຮັບປະທານ”
ແລະບໍ່ມີອັນຕະລາຍຢູ່ໃນຫມໍ້ນັ້ນ

Elisha Feeds One Hundred Men

(ມທ 14:13-21; 15:32-39)

42 ມີຊາຍຄົນນຶ່ງມາຈາກບ້ານບາອັນຊາລີຊາ ນຳຂອງມາໃຫ້ຄົນແຫ່ງພຣະຜູ້ເປັນເຈົ້າ ມີເຂົ້າຈີ່ເປັນຜົນທຳອິດຄື ເຂົ້າ
ຫນົມບເລຊາວກ້ອນ ແລະຮວງເຂົ້າໃຫມ່ໃສ່ກະສອບຂອງເຂົາມາແລະເອລີຊາເວົ້າວ່າ, “ຈົ່ງໃຫ້ແກ່ຄົນເຫລົ່ານັ້ນຮັບ
ປະທານ”
43 ແຕ່ຄົນໃຊ້ຄົນນີ້ຕອບວ່າ, “ຂ້າພະເຈົ້າຈະຕັ້ງອາຫານເທົ່ານີ້ ໃຫ້ຄົນນຶ່ງຮ້ອຍຮັບປະທານໄດ້ຢ່າງໃດ?” ທ່ານຈຶ່ງສັ່ງຊ້ຳ
ວ່າ, “ຈົ່ງໃຫ້ຄົນເຫລົ່ານັ້ນຮັບປະທານເຖີດ ເພາະພຣະຜູ້ເປັນເຈົ້າກ່າວສັ່ງດັ່ງນີ້ວ່າ “ເຂົາທັງຫລາຍຈະໄດ້ຮັບປະທານ
ແລະຍັງເຫລືອອີກ”
44 ເຂົາຈຶ່ງຕັ້ງອາຫານໄວ້ຕໍ່ຫນ້າເຂົາທັງຫລາຍ ເຂົາທັງຫລາຍກໍຮັບປະທານ ແລະຍັງເຫລືອຢູ່ຈິງຕາມພຣະຄຳຂອງພຣະ
ຜູ້ເປັນເຈົ້າ

## 5 ນາອາມານຜູ້ບັນຊາການທະຫານເດີນທາງໄປຫາເອລີຊາ

The Healing of Naaman

1 ນາອາມານຜູ້ບັນຊາການທະຫານຊີເຣັຽ (ອາຣາມ) ເປັນບຸກຄົນສຳຄັນ ແລະໄດ້ຮັບກຽດອັນສູງສົ່ງຈາກເຈົ້າຊີວິດແຫ່ງ
ຊີເຣັຽ ເພາະວ່າພຣະຜູ້ເປັນເຈົ້າຊົງໃຫ້ທ່ານເປັນຜູ້ນຳໄຊຊະນະມາສູ່ກອງທັບຊີເຣັຽ ທ່ານເປັນນາຍທະຫານທີ່ເກັ່ງກ້າ
ແຕ່ທ່ານເປັນພຍາດຂີ້ທູດ
2 ມີຄັ້ງນຶ່ງ ເມື່ອພວກຊີເຣັຽໄປຕໍ່ສູ້ກັບພວກອິສຣາເອນ ເຂົາໄດ້ຈັບເອົາຍິງສາວຄົນນຶ່ງມາເປັນຄົນໃຊ້ຂອງເມັຽຂອງທ່ານ
ນາອາມານ
3 ຄົນໃຊ້ຜູ້ນີ້ເວົ້າຕໍ່ນາຍຍິງຂອງນາງວ່າ, “ຂ້ານ້ອຍຢາກໃຫ້ນາຍຜູ້ຊາຍໄປຫາຜູ້ປະກາດພຣະທັມທີ່ຊາມາເຣັຽ ຄົນຜູ້ນັ້ນ
ສາມາດປົວພຍາດຂີ້ທູດຂອງເຈົ້ານາຍໃຫ້ດີໄດ້”
4 ເມື່ອນາອາມານໄດ້ຍິນດັ່ງນັ້ນ ທ່ານກໍໄປທູນເຈົ້າຊີວິດຕາມທີ່ຄົນໃຊ້ໄດ້ລາຍງານໃຫ້ຟັງ
5 ເຈົ້າຊີວິດແຫ່ງຊີເຣັຽຈຶ່ງບອກນາອາມານວ່າ, “ຈົ່ງໄປຫາເຈົ້າຊີວິດແຫ່ງອິສຣາເອນ ແລະຍື່ນຈົດຫມາຍນີ້ໃຫ້ພຣະອົງ”
ນາອາມານໄດ້ນຳເອົາເງິນສາມສິບພັນຫລຽນ ພ້ອມທັງເຄື່ອງນຸ່ງທີ່ສວຍງາມສິບຊຸດອອກເດີນທາງໄປ
6 ທ່ານໄດ້ຖວາຍສານໃຫ້ແກ່ເຈົ້າຊີວິດອິສຣາເອນ ໃນຣາຊສານນັ້ນມີເນື້ອຄວາມດັ່ງນີ້ “ນີ້ຄືນາອາມານ ນາຍທະຫານ
ຂອງຂ້າພະເຈົ້າ ຂ້າພະເຈົ້າຢາກໃຫ້ພຣະອົງປົວພຍາດຂີ້ທູດໃຫ້ເຂົາ”
7 ເມື່ອເຈົ້າຊີວິດອິສຣາເອນໄດ້ອ່ານພຣະຣາຊສານແລ້ວ ພຣະອົງກໍຈີກເຄື່ອງສລອງພຣະອົງອອກ ແລະເວົ້າຂຶ້ນດ້ວຍ
ຄວາມເສັຽພຣະທັຍວ່າ, “ເຮົາແມ່ນພຣະເຈົ້າຜູ້ມີອຳນາດທີ່ບອກໃຫ້ຕາຍ ຫລືໃຫ້ເປັນໄດ້ຊັ້ນບໍ ຈຶ່ງຢາກໃຫ້ເຮົາປົວ
ພຍາດຂີ້ທູດໃຫ້? ເຂົາຢາກຊອກເຣື່ອງຜິດກັນກັບເຮົາບໍ?
8 ເມື່ອຜູ້ປະກາດພຣະທັມເອລີຊາ ຮູ້ຂ່າວເຫດການທີ່ເກີດຂຶ້ນ ທ່ານກໍສົ່ງຄວາມໄປທູນເຈົ້າຊີວິດວ່າ, “ເປັນຫຍັງພຣະອົງ
ຈຶ່ງຊົງທຸກພຣະທັຍຫນັກ ຂໍຊົງສົ່ງຊາຍຄົນນັ້ນມາຫາຂ້ານ້ອຍ ຂ້ານ້ອຍຈະແນະນຳໃຫ້ເຂົາຮູ້ຈັກວ່າ ຢູ່ທີ່ອິສຣາເອນນີ້ມີ
ຜູ້ປະກາດພຣະທັມ”
9 ດັ່ງນັ້ນ ນາອາມານພ້ອມທັງຄນະ ແລະຣົດມ້າກໍມາຮອດເຮືອນຂອງເອລີຊາ
10 ຝ່າຍເອລີຊາໄດ້ສົ່ງຄົນມາບອກອານາມານວ່າ, “ຈົ່ງໄປອາບນ້ຳທີ່ແມ່ນ້ຳຈໍແດນເຈັດຄັ້ງ ແລະເນື້ອຫນັງຂອງທ່ານຈະ
ສະອາດເປັນປົກກະຕິ
11 ແຕ່ອານາມານໃຈຮ້າຍແລະຍ່າງອອກໄປພ້ອມທັງຈົ່ມວ່າ, “ເຮົາຄິດວ່າ ຢ່າງນ້ອຍທ່ານຕ້ອງອອກມາພົບເຮົາ ແລ້ວ
ອ້ອນວອນຫາພຣະຜູ້ເປັນເຈົ້າຂອງທ່ານ ໂດຍວາງມືໃສ່ເທິງບ່ອນທີ່ເປັນພຍາດໃຫ້ເຮົາດີຊັ້ນດອກ

12 ຕາມຈິງແລ້ວແມ່ນ້ຳອາບານາ ແລະແມ່ນ້ຳຟາຣ໌ປາທີ່ເມືອງດາມັສກັສຍັງດີກວ່າແມ່ນ້ຳໃນອິສຣາເອນນີ້ ເຮົາໄປອາບ
ໃນແມ່ນ້ຳເຫລົ່ານັ້ນກໍຄົງຈະຫາຍດີຢູ່ຕີ" ແລ້ວທ່ານກໍຫັນຫລັງຄືນໄປດ້ວຍຄວາມໂກດຮ້າຍ
13 ແຕ່ພວກຂ້າໃຊ້ຂອງທ່ານເຂົ້າມາເວົ້າກັບທ່ານວ່າ, "ຍາພໍ່ເອີຍ, ຖ້າຫາກວ່າຜູ້ປະກາດພຣະທັມສັ່ງໃຫ້ທ່ານເຮັດສິ່ງທີ່
ຍາກທ່ານຈະບໍ່ເຮັດຫລື ແຕ່ດຽວນີ້ ທ່ານຜູ້ປະກາດພຣະທັມບອກໃຫ້ທ່ານພຽງແຕ່ໄປອາບນ້ຳ ແລ້ວທ່ານກໍຈະສະ
ອາດແລະດີພຍາດ ເປັນຫຍັງທ່ານຈຶ່ງບໍ່ເຮັດ"
14 ດັ່ງນັ້ນນາອາມານຈຶ່ງລົງໄປແຊ່ໃນແມ່ນ້ຳຈໍແດນເຈັດຄັ້ງຕາມທີ່ເອລີຊາໄດ້ບອກ ແລ້ວເນື້ອຫນັງຂອງທ່ານຈຶ່ງສະອາດ
ເປັນປົກກະຕິເຫມືອນເນື້ອຫນັງຂອງເດັກນ້ອຍ
15 ແລ້ວນາອາມານພ້ອມທັງພວກຕິດຕາມທຸກຄົນກໍກັບຄືນໄປຫາເອລີຊາແລ້ວເວົ້າວ່າ, "ດຽວນີ້ຂ້າພະເຈົ້າຮູ້ແລ້ວວ່າ ບໍ່
ມີພຣະເຈົ້າອົງອື່ນນອກຈາກພຣະເຈົ້າຂອງອິສຣາເອນ ບັດນີ້ຂໍທ່ານຈົ່ງຮັບເອົາຂອງຂວັນຈາກຂ້ານ້ອຍເທີນ"
16 ແຕ່ເອລີຊາຕອບວ່າ, "ດ້ວຍພຣະນາມຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ຜູ້ຊຶ່ງຂ້າພະເຈົ້າກຳລັງຮັບໃຊ້ຢູ່ ຂ້າພະເຈົ້າຈະບໍ່
ຍອມຮັບເອົາຂອງຂວັນສິ່ງໃດຫມົດ" ສ່ວນນາອາມານກໍຊັງເຊັນໃຫ້ທ່ານຍອມຮັບເອົາ ແຕ່ທ່ານກໍປະຕິເສດ
17 ແລ້ວນາອາມານຈຶ່ງເວົ້າວ່າ, "ຖ້າທ່ານບໍ່ຍອມຮັບເອົາຂອງຂວັນຈາກຂ້າພະເຈົ້າ ຂໍອະນຸຍາດໃຫ້ຂ້າພະເຈົ້າເອົາດິນ
ຈາກທີ່ນີ້ເມືອບ້ານນຳໃຫ້ພໍດີກັບລໍສອງໂຕບັນທຸກໄດ້ ເພາະວ່າຂ້າພະເຈົ້າຈະບໍ່ຖວາຍເຄື່ອງເຜົາບູຊາ ຫລືການບູຊາ
ອັນໃດແກ່ພຣະອົງອື່ນ ນອກຈາກພຣະຜູ້ເປັນເຈົ້າເທົ່ານັ້ນ
18 ແລະຂ້າພະເຈົ້າຂໍພຽງຢ່າງດຽວຄື ເວລາທີ່ຂ້າພະເຈົ້າໄປນຳກະສັດເພື່ອນະມັສການພຣະຣິມໂມນຂອງຊາວຊີເຣັຽນັ້ນ
ຂ້າພະເຈົ້າຂໍຂາບລົງນຳກະສັດ ສະນັ້ນຂໍພຣະຜູ້ເປັນເຈົ້າຊົງໂຜດອະພັຍຂ້ານ້ອຍດ້ວຍ"
19 ເອລີຊາຕອບວ່າ, "ຂໍທ່ານຈົ່ງໄປເປັນສຸກເທີນ" ແລ້ວນາອາມານກໍຈາກໄປ

**ຄົນໃຊ້ຂອງເອລີຊາທຳຜິດ**

Gahazi's Greed

ພໍເມື່ອນາອາມານໄປບໍ່ໄດ້ໄກເທົ່າໃດ
20 ເກຮາຊີຄົນໃຊ້ຂອງເອລີຊາກໍຄິດໃນໃຈວ່າ, "ເອີ ນາຍຂອງເຮົາບໍ່ຍອມຮັບເອົາສິ່ງໃດທີ່ນາອາມານຊາວຊີເຣັຽຄົນນີ້
ມອບໃຫ້ ແລະປ່ອຍໃຫ້ເຂົາໄປລ້າໆ ທ່ານຄວນຍອມຮັບເອົາສິ່ງເຫລົ່ານີ້ດ້ວຍພຣະນາມຂອງພຣະຜູ້ເປັນເຈົ້າຜູ້ຊົງພ
ຣະຊົນຢູ່ ເຮົາຈະຕ້ອງແລ່ນໄປເອົາບາງສິ່ງບາງຢ່າງນຳທ່ານໃຫ້ໄດ້"
21 ດັ່ງນັ້ນເກຮາຊີຈຶ່ງແລ່ນຕິດຕາມນາອາມານໄປ ເມື່ອນາອາມານເຫັນເຂົາແລ່ນຕາມຫລັງມາ ທ່ານຈຶ່ງລົງຈາກຣົດມ້າ
ມາພົບເຂົາແລະຖາມວ່າ, "ເຈົ້າຕາມມາຫຍັງນໍ?"
22 ເກຮາຊີຕອບວ່າ, "ທຸກສິ່ງຮຽບຮ້ອຍດີ ແຕ່ນາຍຂອງຂ້ານ້ອຍໄດ້ສັ່ງຂ້ານ້ອຍມາບອກທ່ານວ່າ ຫວ່າງກີ້ນີ້ມີຜູ້ປະກາດພ
ຣະທັມຫນຸ່ມສອງຄົນເດີນທາງມາຈາກພູເອຟຣາອິມ ຂໍທ່ານໂຜດໃຫ້ເງິນແກ່ເຂົາທັງຫລາຍຈັກນຶ່ງຕາລັນກັບເຄື່ອງນຸ່ງ
ສອງຊຸດໃຫ້ພວກນັ້ນ"
23 ນາອາມານຕອບວ່າ, "ຂໍໂຜດຮັບໄປສອງຕາລັນເຖີດ" ທ່ານບອກໃຫ້ເຂົາຟ້າວມັດເງິນໃສ່ຖົງສອງຖົງໄວ້ແລະເອົາເສື້ອ
ສອງຊຸດໃຫ້ ທ່ານສັ່ງໃຫ້ຄົນໃຊ້ສອງຄົນຫາມໄປກ່ອນເກຮາຊີ
24 ເມື່ອມາຮອດພູນ້ອຍບ່ອນທີ່ເອລີຊາຢູ່ ເຂົາກໍເອົາຖົງໄປປະໄວ້ໃນເຮືອນ ແລະບອກໃຫ້ຄົນໃຊ້ຂອງນາອາມານກັບຄືນ
ເມືອ
25 ເມື່ອເກຮາຊີເຂົ້າໄປໃນເຮືອນ ເອລີຊາໄດ້ຖາມວ່າ, "ເກຮາຊີ ມື້ກີ້ນີ້ເຈົ້າໄປໃສມາ?" ເກຮາຊີຕອບວ່າ, "ບໍ່ໄດ້ໄປໃສ"
26 ແຕ່ເອລີຊາເວົ້າກັບເຂົາວ່າ, "ເວລາຊາຍນັ້ນລົງຈາກຣົດມ້ານມາຫາເຈົ້າ ຈິດວິນຍານຂອງຂ້ອຍກໍຢູ່ທີ່ນັ້ນ ດຽວນີ້ເຈົ້າໄດ້
ເອົາເງິນນຳຜູ້ນັ້ນ ເຈົ້າອາດຊື້ສວນຫມາກກອກເທດ ຊື້ແກະ ຊື້ງົວ ແລະທາດຍິງຊາຍ
27 ແຕ່ວ່າພຍາດຂີ້ທູດຂອງນາອາມານຈະຕິດແປດເຈົ້າ ແລະຕິດແປດເຊື້ອສາຍຂອງເຈົ້າຕລອດໄປ" ເກຮາຊີໄດ້ຫນີ
ຈາກເອລີຊາໄປດ້ວຍມີພຍາດຂີ້ທູດຂາວດັ່ງນວນຝ້າຍເຕັມຮ່າງກາຍ

## 6 ເອລີຊາເຮັດໃຫ້ຂວານຕົກນໍ້າຟູຂຶ້ນ

The Miracle of the Ax Head

1 ພວກຜູ້ປະກາດພຣະທັມໃນຄະນະຂອງເອລີຊາໄດ້ຈົ່ມຕໍ່ທ່ານວ່າ,
2 "ບ່ອນຂອງພວກເຂົານີ້ຄັບແຄບເກີນໄປ ສະນັ້ນຂໍອະນຸຍາດໃຫ້ພວກເຂົາຕັດໄມ້ທີ່ແມ່ນໍ້າຈໍແດນ ເພື່ອສ້າງທີ່ຢູ່ອາໄສ
ຢູ່ບ່ອນນັ້ນ" ເອລີຊາຕອບວ່າ, "ໄປແມ"
3 ຜູ້ນຶ່ງໃນຈຳນວນພວກເຂົາໄດ້ຊັ່ງວຂອດໃຫ້ເອລີຊາໄປນຳ ທ່ານກໍຕົກລົງໄປນຳພວກເຂົາ
4 ເມື່ອໄປຮອດແມ່ນໍ້າຈໍແດນ ພວກເຂົາໄດ້ເລີ້ມຕົ້ນລົງມືເຮັດວຽກ ຄົນນຶ່ງໃນຫມູ່ພວກເຂົາໄດ້ເປັນຜູ້ຕັດໄມ້
5 ທັນໃດນັ້ນຂວານເຫລັກຂອງເຂົາໄດ້ຫລ່ອນຕົກລົງນໍ້າ ເຂົາຈຶ່ງຮ້ອງຫາເອລີຊາວ່າ, "ນາຍເອີຍ, ຂວານຕົກນໍ້າແລ້ວ ຈະ
ໃຫ້ຂ້ານ້ອຍເຮັດແນວໃດ ເພາະຂວານນັ້ນຂ້ານ້ອຍໄດ້ຢືມເຂົາມາຊໍ້າ"
6 ເອລີຊາຈຶ່ງຖາມເຂົາວ່າ, "ຂວານນັ້ນຕົກຢູ່ໃສ?" ເຂົາໄດ້ຊີ້ບອກບ່ອນຂວານຕົກໃຫ້ທ່ານເບິ່ງ ແລ້ວເອລີຊາໄດ້ຕັດໄມ້
ທ່ອນນຶ່ງຖິ້ມລົງໃນບ່ອນນັ້ນ ແລ້ວຂວານດວງນັ້ນກໍຟູຂຶ້ນມາ
7 ທ່ານໄດ້ບອກເຂົາວ່າ, "ໄປເອົາແມ໋" ຊາຍຄົນນັ້ນຈຶ່ງຍື່ນມືໄປຈັບເອົາມາ

The Aramean Attach is Thwarted

8 ເມື່ອເຈົ້າຊີວິດແຫ່ງຊີເຣັຽອອກໄປສູ້ຮົບພວກອິສຣາເອນ ພຣະອົງໄດ້ປະຊຸມກັບພວກຂ້າຣາຊການຂອງພຣະອົງ ແລະ
ໄດ້ເລືອກເອົາບ່ອນນຶ່ງເປັນບ່ອນຕັ້ງຄ້າຍໄວ້
9 ແຕ່ເອລີຊາໄດ້ສົ່ງຂ່າວໄປບອກເຈົ້າຊີວິດອິສຣາເອນໃຫ້ລະວັງຕົວ ບໍ່ໃຫ້ພຣະອົງຜ່ານໄປໃນທາງນັ້ນ ເພາະວ່າພວກຊີ
ເຣັຽໄດ້ຕັ້ງກອງຫລອນດັກສະກັດຢູ່ທີ່ນັ້ນ
10 ດັ່ງນັ້ນເຈົ້າຊີວິດອິສຣາເອນຈຶ່ງເຕືອນທະຫານໃຫ້ລະມັດລະວັງຕົວຢູ່ສເມີ ໃນການລະວັງຕົວຢ່າງນີ້ໄດ້ມີມາສອງສາມ
ຄັ້ງແລ້ວ
11 ຝ່າຍເຈົ້າຊີວິດຊີເຣັຽມີຈິດໃຈກະວົນກະວາຍໃນເຣື່ອງນີ້ ພຣະອົງຈຶ່ງເອີ້ນເອົາບັນດານາຍທະຫານມາຖາມວ່າ, "ຈົ່ງ
ບອກເຮົາມາເບິ່ງວ່າ ໃນພວກເຈົ້າແມ່ນໃຜເຂົ້າຂ້າງເຈົ້າຊີວິດແຫ່ງອິສຣາເອນແດ່?"
12 ນາຍທະຫານຜູ້ນຶ່ງຈຶ່ງຕອບຂຶ້ນວ່າ, "ຂ້າແດ່ພຣະອົງ ບໍ່ມີໃຜດອກ ເຣື່ອງນີ້ເປັນເພາະຜູ້ປະກາດພຣະທັມເອລີຊາໄດ້
ຣາຍງານຄວາມລັບທີ່ພຣະອົງເວົ້າໃນຫ້ອງນອນທັງຫມົດຕໍ່ເຈົ້າຊີວິດແຫ່ງອິສຣາເອນ"
13 ເຈົ້າຊີວິດຈຶ່ງສັ່ງວ່າ, "ຈົ່ງໄປຊອກຫາບ່ອນເຂົາຢູ່ ແລະເຮົາຈະສົ່ງຄົນໄປຈັບເຂົາມາ" ຕໍ່ມາມີຄົນມາບອກທ່ານວ່າ ເອລີ
ຊາຢູ່ເມືອງໂດທານ
14 ດັ່ງນັ້ນພຣະອົງຈຶ່ງໄດ້ຈັດເອົາມ້າ ຣົດຮົບພ້ອມທັງກຳລັງພົນອອກໄປ ພວກເຂົາໄດ້ໄປຮອດທີ່ນັ້ນໃນເວລາກາງຄືນ
ແລະໄດ້ລ້ອມເມືອງໄວ້
15 ວັນຕໍ່ມາຄົນໃຊ້ຂອງເອລີຊາກໍໄດ້ລຸກຂຶ້ນແຕ່ເຊົ້າ ແລະຍ່າງອອກໄປຂ້າງນອກ ເຂົາໄດ້ເຫັນກຳລັງທະຫານຊີເຣັຽພ້ອມ
ດ້ວຍຝູງມ້າແລະຣົດຮົບລ້ອມເມືອງຢູ່ ເຂົາຈຶ່ງຟ້າວມາຫາເອລີຊາແລະຮ້ອງຂຶ້ນວ່າ, "ຕາຍແລ້ວ ເຈົ້ານາຍ! ພວກເຮົາ
ຖືກອ້ອມແລ້ວ ພວກເຮົາຊິເຮັດຈັ່ງໃດ?"
16 ເອລີຊາຕອບວ່າ, "ບໍ່ຕ້ອງຢ້ານດອກ ເພາະຝ່າຍເຮົາມີຫລາຍກວ່າຝ່າຍເຂົາ"
17 ແລ້ວເອລີຊາກໍອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງເປີດຕາຂ້າໃຊ້ຂອງຂ້ານ້ອຍຜູ້ນີ້
ໃຫ້ເຫັນກຳລັງຂອງຝ່າຍເຮົາແດ່ທ້ອນ" ພຣະຜູ້ເປັນເຈົ້າຈຶ່ງຊົງບັນດານໃຫ້ຄົນໃຊ້ເຫັນ ເຂົາໄດ້ເຫັນຝູງມ້າແລະຣົດຮົບ
ໄຟເຕັມຢູ່ເທິງພູກຳລັງອ້ອມເອລີຊາຢູ່
18 ໃນຂນະທີ່ພວກຊີເຣັຽໂຈມຕີເມືອງຢູ່ນັ້ນ ເອລີຊາໄດ້ອ້ອນວອນຫາພຣະຜູ້ເປັນເຈົ້າວ່າ, "ຂ້ານ້ອຍຂໍຮ້ອງໃຫ້ພຣະອົງຊົງ
ບັງຕາພວກເຫລົ່ານີ້ແດ່ທ້ອນ"

19 ພຣະອົງຈຶ່ງຊົງບັງຕາພວກເຂົາຕາມຄຳຮ້ອງຂໍຂອງເອລີຊາ ແລະເອລີຊາໄດ້ໄປຫາພວກເຂົາແລະເວົ້າວ່າ, “ພວກເຈົ້າ
ມາຜິດທາງແລ້ວ ອັນນີ້ບໍ່ແມ່ນເມືອງທີ່ພວກເຈົ້າຊອກຫາ ຈົ່ງຕາມເຮົາມາ ເຮົາຈະພາພວກເຈົ້າໄປຊອກຫາຊາຍທີ່
ພວກເຈົ້າຊອກຫານັ້ນ ແລ້ວເອລີຊາໄດ້ພາພວກເຂົາໄປເມືອງສະມາເຣັຽ
20 ເມື່ອເຂົ້າໄປໃນເມືອງສະມາເຣັຽ ເອລີຊາກໍອ້ອນວອນຕໍ່ພຣະເຈົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງເປີດຕາ
ພວກເຂົາໃຫ້ເຫັນເທີນ” ພຣະຜູ້ເປັນເຈົ້າຊົງເປີດຕາໃຫ້ພວກເຂົາເຫັນຮຸ່ງ ແລະພວກເຂົາຈຶ່ງເຫັນວ່າພວກເຂົາໄດ້ຢູ່ໃນ
ກຸງຊາມາເຣັຽເສັຽແລ້ວ
21 ເມື່ອເຈົ້າຊີວິດອິສຣາເອນເຫັນພວກເຂົາ ພຣະອົງຈຶ່ງຖາມເອລີຊາວ່າ, “ຍາພໍ່ເອີຍ, ໃຫ້ຂ້າພະເຈົ້າຂ້າພວກເຂົາບໍ?”
22 ທ່ານຕອບວ່າ, “ຂໍພຣະອົງຢ່າຊົງຂ້າພວກເຂົາເລີຍ ແມ່ນແຕ່ພວກຊະເລີຍທີ່ພຣະອົງຈັບມາດ້ວຍຕົນເອງ ພຣະອົງກໍບໍ່
ຕ້ອງຂ້າພວກເຂົາ ຂໍພຣະອົງເອົາເຂົ້າຈີ່ ແລະນໍ້າໃຫ້ພວກເຂົາກິນ ແລ້ວປ່ອຍໃຫ້ເຂົາກັບໄປຫາເຈົ້ານາຍຂອງພວກ
ເຂົາສາ”
23 ດັ່ງນັ້ນເຈົ້າຊີວິດຈຶ່ງຈັດງານກິນລ້ຽງອັນຍິ່ງໃຫຍ່ຂຶ້ນ ເມື່ອພວກເຂົາກິນແລະດື່ມສິ້ນສຸດລົງແລ້ວ ພຣະອົງກໍສົ່ງພວກເຂົາ
ຫລົບຄືນເມືອ ຫລັງຈາກທີ່ພວກເຂົາກັບຄືນເມືອຫາເຈົ້າຊີວິດແຫ່ງຊີເຣັຽແລ້ວ ນັບຕັ້ງແຕ່ນັ້ນມາພວກຊີເຣັຽກໍບໍ່ໄດ້ທຳ
ການປຸ້ນຍາດຊິງເອົາເຂດແດນອິສຣາເອນອີກເລີຍ

Ben-hadad’s Siege of Samaria

24 ແລະຢູ່ມາພາຍຫລັງເບນຮາດາດ ພຣະຣາຊາແຫ່ງຊີເຣັຽຊົງຈັດກອງທັບທັງສິ້ນຂອງພຣະອົງ ແລ້ວໄດ້ສະເດັດຂຶ້ນໄປ
ລ້ອມກຸງຊາມາເຣັຽ
25 ມີການອຶດຢາກອາຫານຢ່າງຫນັກໃນຊາມາເຣັຽ ຂນະເມື່ອເຂົາລ້ອມຢູ່ຈົນຫົວລໍໂຕນຶ່ງເຂົາຂາຍກັນເປັນເງິນແປດສິບ
ເຊເກລ ແລະຂີ້ນົກກາງແກ 200ກຣາມເປັນເງິນຫ້າເຊເກລ
26 ຂນະທີ່ພຣະຣາຊາແຫງອິສຣາເອນຊົງຜ່ານໄປເທິງກຳແພງ ມີຜູ້ຍິງຄົນນຶ່ງຮ້ອງທູນພຣະອົງວ່າ, “ຂ້າແດ່ພຣະອົງເຈົ້າ
ນາຍຂອງຂ້ານ້ອຍ ຂໍຊົງຊ່ອຍ”
27 ພຣະອົງຊົງກ່າວວ່າ, “ຖ້າພຣະເຈົ້າບໍ່ໄດ້ຊົງຊ່ອຍເຈົ້າເຮົາຈະຊ່ອຍເຈົ້າໄດ້ຈາກໃສ ຈາກລານນວດເຂົ້າ ຫລືຈາກບໍ່ຢໍ່າ
ຫມາກອະງຸ່ນຫລື”
28 ແລະເຈົ້າຊີວິດຊົງຖາມນາງວ່າ, “ເຈົ້າມີຄວາມເດືອດຮ້ອນຫຍັງ?” ນາງທູນຕອບວ່າ, “ຍິງຄົນນີ້ບອກຂ້ານ້ອຍວ່າ ເອົາ
ລູກຂອງເຈົ້າມາ ໃຫ້ພວກເຮົາກິນເສັຽວັນນີ້ເຖີດ ແລະພວກເຮົາຈຶ່ງກິນລູກຂອງຂ້ອຍມື້ອື່ນ”
29 ດັ່ງນັ້ນພວກເຮົາຈຶ່ງຕົ້ມລູກຂອງຂ້ານ້ອຍແລະກິນ ແລະຮຸ່ງຂຶ້ນຂ້ານ້ອຍກໍເວົ້າກັບນາງວ່າ, “ເອົາລູກຂອງເຈົ້າມາ ເພື່ອ
ພວກເຮົາຈະໄດ້ກິນເສັຽ ແລະນາງກໍເຊື່ອງລູກຂອງນາງເສັຽ”
30 ແລະເມື່ອເຈົ້າຊີວິດຊົງໄດ້ຍິນຖ້ອຍຄຳຂອງຍິງນັ້ນ ພຣະອົງກໍຈີກເຄື່ອງສລອງພຣະອົງ (ພຣະອົງກຳລັງຍ່າງຢູ່ເທິງກຳ
ແພງ) ປະຊາຊົນກໍໄດ້ເຫັນ ເບິ່ງແມ໋, ພຣະອົງຊົງສລອງພຣະອົງທີ່ທຳດ້ວຍຜ້າກະສອບຢູ່ແນບກາຍ
31 ແລະພຣະອົງກ່າວວ່າ, “ຖ້າຫົວຂອງເອລີຊາບຸດຊາຟັດຍັງຢູ່ເທິງບ່າຂອງເຂົາໃນວັນນີ້ ກໍຂໍພຣະເຈົ້າຊົງລົງໂທດແກ່ເຮົາ
ແລະຍິ່ງຫນັກກວ່າ”
32 ແຕ່ເອລີຊານັ່ງຢູ່ໃນບ້ານຂອງທ່ານ ແລະພວກຜູ້ໃຫຍ່ກໍນັ່ງຢູ່ດ້ວຍ ພຣະຣາຊາຊົງໃຊ້ຄົນມາຈາກຕໍ່ເບື້ອງພຣະພັກພຣະ
ອົງ ແຕ່ກ່ອນທີ່ຜູ້ສົ່ງຂ່າວຈະມາເຖິງ ເອລີຊາກໍເວົ້າກັບພວກຜູ້ໃຫຍ່ວ່າ, “ທ່ານທັງຫລາຍເຫັນຫລືບໍ ທີ່ຜູ້ກະທຳຄາຕກັມ
ຄົນນີ້ໃຊ້ຄົນມາເອົາຫົວຂອງຂ້າພະເຈົ້າ ເບິ່ງດູເມື່ອຜູ້ສົ່ງຂ່າວມາ ຈົ່ງອັດປະຕູ ແລະຍຶດປະຕູໃຫ້ແຫນ້ນ ກັນເຂົາໄວ້
ສຽງບາດຕີນຂອງນາຍຂອງເຂົາຕາມເຂົາມາບໍ່ແມ່ນບໍ?”
33 ຂນະທີ່ທ່ານກຳລັງເວົ້າກັບເຂົາທັງຫລາຍຢູ່ ເບິ່ງແມ໋ ຜູ້ສົ່ງຂ່າວລົງມາຫາທ່ານ ແລະເຈົ້າຊີວິດກ່າວວ່າ, “ເຫດຮ້າຍນີ້ມາ
ຈາກພຣະເຈົ້າ ຂ້າພະເຈົ້າຈະລໍຖ້າພຣະເຈົ້າອີກເຮັດຫຍັງ?”

# 7

Chapter 7

1 ແຕ່ເອລີຊາທູນວ່າ, “ຂໍຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ “ມື້ອື່ນນີ້ປະມານເວລານີ້
ຍອດແປ້ງຖັງນຶ່ງເຂົາຈະຂາຍກັນນຶ່ງເຊເກລ ແລະເຂົ້າບເລສອງຖັງເຊເກລ ທີ່ປະຕູເມືອງສະມາເຣັຽ”
2 ແລ້ວນາຍທະຫານຄົນສນິດຂອງພຣະຣາຊາຕອບຄົນຂອງພຣະເຈົ້າວ່າ, “ຖ້າວ່າພຣະເຈົ້າສ້າງປະຕູໃນຟ້າສວັນ ສິ່ງນີ້
ຈະເປັນຂຶ້ນໄດ້ຫລື” ແຕ່ທ່ານບອກວ່າ “ທ່ານຈະເຫັນກັບຕາຂອງທ່ານເອງ ແຕ່ຈະບໍ່ໄດ້ກິນ”
3 ມີຄົນເປັນຂີ້ທູດສີ່ຄົນຢູ່ທີ່ທາງເຂົ້າປະຕູເມືອງ ເຂົາເວົ້າກັນວ່າ, “ເປັນຫຍັງເຮົາຈະນັ່ງຢູ່ບ່ອນນີ້ຈົນຕາຍ
4 ຖ້າເຮົາວ່າ “ໃຫ້ເຮົາເຂົ້າໄປໃນເມືອງ ການອຶດຢາກກໍຢູ່ໃນເມືອງ ແລະເຮົາກໍຈະຕາຍທີ່ນັ້ນ ແລະຖ້າເຮົານັ່ງທີ່ນີ້ເຮົາກໍ
ຕາຍເຫມືອນກັນ ສັນນັ້ນຈົ່ງມາເຖີດ ໃຫ້ເຮົາເຂົ້າໄປໃນຄ້າຍຂອງຄົນຊີເຣັຽ ຖ້າຫາກເຂົາໄວ້ຊີວິດຂອງເຮົາ ເຮົາກໍຈະ
ລອດຕາຍ ຖ້າເຂົາຂ້າເຮົາ ກໍໄດ້ແຕ່ຕາຍເທົ່ານັ້ນເອງ”

The Arameans Flee

5 ດັ່ງນັ້ນເຂົາຈຶ່ງລຸກຂຶ້ນໃນເວລາໃກ້ຈະຄ່ຳເພື່ອຈະໄປຍັງຄ້າຍຂອງຄົນຊີເຣັຽ ແຕ່ເມື່ອເຂົາໄປເຖິງຄ້າຍຂອງຄົນຊີເຣັຽ
ເບິ່ງແມ ບໍ່ມີໃຜຈັກຄົນຢູ່ທີ່ນັ້ນ
6 ເພາະພຣະຜູ້ເປັນເຈົ້າໄດ້ຊົງກະທຳໃຫ້ກອງທັບຂອງຄົນຊີເຣັຽໄດ້ຍິນສຽງຣົດຮົບ ສຽງມ້າ ແລະສຽງກອງທັບໃຫຍ່ ເຂົາ
ຈຶ່ງເວົ້າກັນແລະກັນວ່າ, “ເບິ່ງແມ, ເຈົ້າຊີວິດແຫ່ງອິສຣາເອນໄດ້ຈ້າງບັນດາເຈົ້າຊີວິດແຫ່ງຄົນຮິດຕີ ແລະບັນດາເຈົ້າ
ຊີວິດແຫ່ງເອຢິບມາຮົບເຮົາແລ້ວ”
7 ເຂົາຈຶ່ງລຸກຂຶ້ນຫນີໄປໃນເວລາຄ່ຳ ແລະປະເຕັນ ມ້າແລະລໍຂອງເຂົາ ປະເຕັນໄວ້ຢ່າງນັ້ນເອງ ແລະຫນີໄປເອົາຊີວິດ
ລອດ
8 ແລະເມື່ອຄົນຂີ້ທູດເຫລົ່ານີ້ມາເຖິງຄ້າຍ ເຂົາກໍເຂົ້າໄປໃນເຕັນ ທັງກິນແລະດື່ມ ແລະຂົນເງິນ ທອງຄຳແລະເຄື່ອງນຸ່ງ
ເອົາໄປເຊື່ອງໄວ້ ແລ້ວເຂົາກໍກັບມາເຂົ້າໄປໃນເຕັນອື່ນອີກ ຂົນເອົາເຄື່ອງຂອງອອກໄປຈາກທີ່ນັ້ນດ້ວຍເອົາໄປເຊື່ອງ
ໄວ້
9 ແລະເຂົາເວົ້າກັນແລະກັນວ່າ, “ເຮົາເຮັດບໍ່ຖືກເສັຽແລ້ວ ວັນນີ້ເປັນວັນຂ່າວດີ ຖ້າເຮົາງຽບຢູ່ ແລະຄອຍຈົນເຖິງມື້ເຊົ້າ
ໂທດຈະຕົກຢູ່ກັບເຮົາ ເຫດສັນນັ້ນມາເຖີດ ໃຫ້ເຮົາໄປບອກຍັງສຳນັກພຣະຣາຊວັງ”
10 ເຂົາຈຶ່ງເອີ້ນນາຍປະຕູເມືອງ ແລະບອກເຣື່ອງຣາວແກ່ເຂົາວ່າ, “ເຮົາມາຍັງຄ້າຍຂອງຄົນຊີເຣັຽ ແລະເບິ່ງແມ ເຮົາບໍ່
ເຫັນໃຜ ແລະບໍ່ໄດ້ຍິນສຽງຜູ້ໃດຢູ່ທີ່ນັ້ນ ມີແຕ່ມ້າຜູກຢູ່ແລະລໍຜູກຢູ່ ແລະເຕັນຕັ້ງຢູ່ຢ່າງນັ້ນເອງ”
11 ແລ້ວນາຍປະຕູກໍເອີ້ນບອກໄປ ແລະເຂົາກໍບອກກັນໄປເຖິງສຳນັກພຣະຣາຊວັງ
12 ພຣະຣາຊາກໍຊົງຕື່ນບັນທົມໃນກາງຄືນ ແລະກ່າວກັບຂ້າຣາຊການວ່າ, “ເຮົາຈະບອກໃຫ້ວ່າຄົນຊີເຣັຽຕຽມສູ້ຮົບເຮົາ
ຢ່າງໃດ ເຂົາທັງຫລາຍຮູ້ຢູ່ວ່າເຮົາຫິວ ເຂົາຈຶ່ງອອກໄປລີ້ຊ່ອນຕົວຢູ່ນອກຄ້າຍທີ່ກາງທົ່ງຄິດວ່າ “ເມື່ອເຂົາອອກມາ
ຈາກໃນເມືອງເຮົາຈະຈັບເຂົາທັງເປັນ ແລ້ວຈະເຂົ້າໄປໃນເມືອງ”
13 ແລະຂ້າຣາຊການຄົນນຶ່ງທູນວ່າ, “ຂໍຮັບສັ່ງໃຫ້ຄົນເອົາມ້າທີ່ເຫລືອຢູ່ໃນເມືອງຈັກຫ້າໂຕ (ບາງທີມ້າເຫລົ່ານັ້ນຈະຍັງ
ເປັນຢູ່ ຢ່າງຄົນອິສຣາເອນທີ່ເຫລືອຢູ່ໃນເມືອງ ຫລືຈະເປັນຢ່າງຄົນອິສຣາເອນທີ່ໄດ້ພິນາດແລ້ວກໍຊ່າງເຖີດ) ຂໍໃຫ້
ເຮົາສົ່ງຄົນໄປເບິ່ງ”
14 ເຂົາຈຶ່ງເອົາຣົດຮົບສອງຄັນພ້ອມກັບມ້າ ແລະເຈົ້າຊີວິດຊົງສົ່ງໃຫ້ໄປຕິດຕາມກອງທັບຂອງຄົນຊີເຣັຽ ກ່າວວ່າ, “ຈົ່ງໄປ
ເບິ່ງ”
15 ເຂົາທັງຫລາຍຈຶ່ງຕິດຕາມໄປຈົນເຖິງແມ່ນ້ຳຈໍແດນ ຕລອດທາງມີເຄື່ອງນຸ່ງແລະເຄື່ອງໃຊ້ ຊຶ່ງຄົນຊີເຣັຽປະເມື່ອເຂົາ
ຟ້າວຫນີໄປ ຜູ້ສົ່ງຂ່າວກໍກັບມາທູນກະສັດ

16 ແລ້ວປະຊາຊົນກໍຍົກອອກໄປປຸ້ນຄ້າຍຂອງຄົນຊີເຣັຽ ຍອດແປ້ງຈຶ່ງຂາຍກັນຖັງລະເຊເກລ ແລະເຂົ້າບເລສອງຖັງຕໍ່ເຊ
ເກລ ຕາມ ພຣະຄຳຂອງພຣະຜູ້ເປັນເຈົ້າ
17 ຝ່າຍພຣະຣາຊາຊົງແຕ່ງຕັ້ງນາຍທະຫານຄົນສນິດໃຫ້ເປັນນາຍປະຕູ ແລະປະຊາຊົນກໍຢຽບເທິງເຂົາໄປທີ່ປະຕູເມືອງ
ເຂົາຈຶ່ງສິ້ນຊີວິດຕາມຊຶ່ງຄົນຂອງພຣະເຈົ້າໄດ້ກ່າວໄວ້ໃນວັນເມື່ອເຈົ້າຊີວິດສະເດັດລົງມາຫາທ່ານ
18 ແລະເປັນໄປຕາມທີ່ຄົນແຫ່ງພຣະເຈົ້າໄດ້ທູນເຈົ້າຊີວິດວ່າ, “ເຂົ້າບເລສອງຖັງຂາຍນຶ່ງເຊເກລ ແລະຍອດແປ້ງນຶ່ງຖັງ
ນຶ່ງເຊເກລປະມານເວລານີ້ໃນມື້ອື່ນທີ່ປະຕູເມືອງສະມາເຣັຽ”
19 ແລະນາຍທະຫານຄົນສນິດກໍໄດ້ຕອບຄົນແຫ່ງພຣະເຈົ້າວ່າ, “ຖ້າວ່າພຣະເຈົ້າຊົງສ້າງຫນ້າຕ່າງໃນຟ້າສວັນ ສິ່ງນີ້ຈະ
ເປັນຂຶ້ນໄດ້ຫລື” ແລະທ່ານໄດ້ຕອບວ່າ, “ທ່ານຈະເຫັນກັບຕາຂອງທ່ານເອງ ແຕ່ຈະບໍ່ໄດ້ກິນ”
20 ແລະຢູ່ມາກໍບັງເກີດເປັນດັ່ງນັ້ນແກ່ເຂົາ ເພາະປະຊາຊົນຢຽບເທິງເຂົາໄປທີ່ປະຕູເມືອງແລະເຂົາກໍໄດ້ສິ້ນຊີວິດ

## 8 ຍິງຊາວຊູເນມໄດ້ທີ່ດິນກັບຄືນ

The Shunammite Woman’s Land Restored

1 ຝ່າຍເອລີຊາໄດ້ບອກຍິງຄົນທີ່ທ່ານໄດ້ໃຫ້ບຸດຂອງນາງກັບຄືນຊີວິດມາວ່າ, “ຈົ່ງລຸກຂຶ້ນແລະອອກໄປທັງຄົວເຮືອນ
ຂອງເຈົ້າ ໄປອາໄສຢູ່ທີ່ໃດຊຶ່ງເຈົ້າຈະອາໄສຢູ່ໄດ້ ເພາະພຣະຜູ້ເປັນເຈົ້າຊົງເອີ້ນໃຫ້ເກີດການອຶດຢາກອາຫານ ແລະ
ຈະເປັນແກ່ແຜ່ນດິນນີ້ເຈັດປີ”
2 ຍິງຄົນນັ້ນກໍລຸກຂຶ້ນກະທຳຕາມຖ້ອຍຄຳຂອງຄົນຂອງພຣະເຈົ້າ ນາງຍົກອອກໄປທັງຄົວເຮືອນຂອງນາງໄປອາໄສຢູ່
ໃນແຜ່ນດິນຟີລິສຕິນເຈັດປີ
3 ແລະຢູ່ມາເມື່ອຮອດເຈັດປີແລ້ວຍິງຄົນນັ້ນກໍກັບມາຈາກແຜ່ນດິນຟີລິສຕິນ ແລະໄດ້ອອກໄປທູນອຸທອນຕໍ່ເຈົ້າຊີວິດ
ເພື່ອຂໍບ້ານແລະທີ່ດິນຂອງນາງຄືນ
4 ຝ່າຍເຈົ້າຊີວິດກຳລັງກ່າວກັບເກຮາຊີຄົນໃຊ້ຂອງຄົນແຫ່ງພຣະເຈົ້າຢູ່ວ່າ, “ຈົ່ງບອກເຮົາເຖິງບັນດາການອັດສະຈັນທີ່
ເອລີຊາໄດ້ກະທຳ”
5 ແລະຢູ່ມາ ເມື່ອເຂົາກຳລັງທູນກະສັດເຖິງເຣື່ອງທີ່ເອລີຊາໄດ້ເອີ້ນຊີວິດຂອງເດັກນັ້ນກັບຄືນມາ ເບິ່ງແມ, ຜູ້ຍິງຄົນທີ່
ທ່ານໄດ້ໃຫ້ບຸດກັບຄືນຊີວິດມາໄດ້ອຸທອນຕໍ່ເຈົ້າຊີວິດ ເພື່ອຂໍບ້ານແລະທີ່ດິນຂອງນາງຄືນ ແລະເກຮາຊີທູນວ່າ, “ຂ້າ
ແດ່ພຣະຣາຊາເຈົ້ານາຍຂອງຂ້ານ້ອຍ ນີ້ເປັນນາງຄົນນັ້ນ ແລະຄົນນີ້ແຫລະເປັນບຸດຂອງນາງຊຶ່ງເອລີຊາໄດ້ໃຫ້ກັບ
ຄືນຊີວິດມາ”
6 ແລະເມື່ອເຈົ້າຊີວິດກ່າວຖາມຍິງຄົນນັ້ນນາງກໍທູນເຣື່ອງຖວາຍພຣະອົງ ເຈົ້າຊີວິດຈຶ່ງຊົງຕັ້ງເຈົ້າຫນ້າທີ່ຄົນນຶ່ງໃຫ້ແກ່
ນາງຮັບສັ່ງວ່າ, “ຈົ່ງຈັດການຄືນທຸກສິ່ງທີ່ເປັນຂອງນາງ ພ້ອມທັງພືດຜົນຂອງນານັ້ນ ຕັ້ງແຕ່ວັນທີ່ນາງອອກຈາກແຜ່ນ
ດິນມາຈົນເຖິງບັດນີ້”

Death of Ben-hadad

7 ຝ່າຍເອລີຊາມາຍັງດາມັສກັສ ເບນຮາດາດເຈົ້າຊີວິດແຫ່ງຊີເຣັຽຊົງປະຊວນ ແລະເມື່ອມີຄົນທູນວ່າ, “ຄົນແຫ່ງພຣະ
ເຈົ້າມາທີ່ນີ້”
8 ເຈົ້າຊີວິດກ່າວກັບຮາຊາເອນວ່າ, “ຈົ່ງນຳຂອງຂວັນໄປພົບຄົນແຫ່ງພຣະເຈົ້າ ໃຫ້ທູນຖາມພຣະເຈົ້າໂດຍທ່ານວ່າ ຂ້າ
ພະເຈົ້າຈະຫາຍປ່ວຍຫລືບໍ?”
9 ຮາຊາເອນຈຶ່ງໄປພົບທ່ານນຳຂອງຂວັນໄປນຳ ຄືສິນຄ້າທຸກຢ່າງຂອງເມືອງດາມັສກັສບັນທຸກໃສ່ຫລັງອູດສີ່ສິບໂຕ
ເມື່ອເຂົາມາຢືນຕໍ່ຫນ້າທ່ານເຂົາກ່າວວ່າ, “ບຸດຂອງທ່ານຄື ເບນຮາດາດເຈົ້າຊີວິດແຫ່ງຊີເຣັຽໄດ້ຊົງໃຊ້ຂ້າພະເຈົ້າມາ
ຫາທ່ານກ່າວວ່າ “ຂ້າພະເຈົ້າຈະຫາຍປ່ວຍຫລືບໍ?”

10 ແລະເອລີຊາຕອບເຂົາວ່າ, “ຈົ່ງໄປທູນເຈົ້າຊີວິດວ່າ “ພຣະອົງຈະຊົງຫາຍປະຊວນແນ່ນອນ” ແຕ່ພຣະຜູ້ເປັນເຈົ້າຊົງ
ສຳແດງແກ່ຂ້າພະເຈົ້າວ່າ ພຣະອົງຈະສິ້ນພຣະຊົນ“
11 ແລະທ່ານກໍຈ້ອງເບິ່ງຕົວເຂົາຈົນອາຍ ແລະຄົນແຫ່ງພຣະເຈົ້າກໍຮ້ອງໄຫ້
12 ແລະຮາຊາເອນຖາມວ່າ, “ເຫດໃດເຈົ້ານາຍຂອງຂ້າພະເຈົ້າຈຶ່ງຮ້ອງໄຫ້” ທ່ານຕອບວ່າ, “ເພາະຂ້າພະເຈົ້າຊາບເຖິງ
ເຫດຮ້າຍ ຊຶ່ງທ່ານຈະກະທຳຕໍ່ປະຊາຊົນອິສຣາເອນທ່ານຈະເອົາໄຟເຜົາປ້ອມປ້ອງກັນເມືອງຂອງເຂົາເສັຽ ແລະທ່ານ
ຈະຂ້າຄົນຫນຸ່ມໆເສັຽດ້ວຍດາບ ແລະຕີເດັກນ້ອຍໆໃຫ້ເຖິງຕາຍ ແລະຜ່າທ້ອງພວກແມ່ມານ”
13 ແລະຮາຊາເອນຕອບວ່າ, “ຜູ້ຮັບໃຊ້ຂອງທ່ານຜູ້ເປັນແຕ່ພຽງຫມາເປັນໃຜ ຈຶ່ງຈະກະທຳສິ່ງໃຫຍ່ໂຕນີ້” ເອລີຊາຕອບ
ວ່າ, “ພຣະຜູ້ເປັນເຈົ້າສຳແດງແກ່ຂ້າພະເຈົ້າວ່າ ທ່ານຈະເປັນກະສັດປົກຄອງປະເທດຊີເຣັຽ”
14 ແລະເຂົາກໍໄປຈາກເອລີຊາມາຍັງນາຍຂອງຕົນ ຜູ້ຊຶ່ງຖາມເຂົາວ່າ, “ເອລີຊາວ່າຢ່າງໃດກັບເຈົ້າແດ່?” ແລະເຂົາທູນ
ຕອບວ່າ, “ເຂົາບອກຂ້ານ້ອຍວ່າພຣະອົງຈະຫາຍປະຊວນແນ່ນອນ”
15 ແລະຢູ່ມາວັນຮຸ່ງເຊົ້າເຂົາກໍເອົາຜ້າປູນອນຈຸ່ມນ້ຳຄຸມພຣະພັກພຣະອົງໄວ້ ຈົນພຣະອົງສິ້ນພຣະຊົນ ແລະຮາຊາເອນກໍ
ຂຶ້ນປົກຄອງ

**ຣັຊການເຢໂຮຣາມກະສັດແຫ່ງຢູດາ**

Jehoram Reigns over Judah

(2 ຂຄວ 21:1-20)

16 ໃນປີທີຫ້າແຫ່ງເຢໂຮຣາມ ໂອຣົດອາຮາບເຈົ້າຊີວິດຂອງອິສຣາເອນ ເຢໂຮຣາມໂອຣົດເຢໂຮຊາຟັດເຈົ້າຊີວິດຂອງຢູ
ດາໄດ້ຊົງເລີ້ມປົກຄອງ
17 ເມື່ອພຣະອົງຊົງເລີ້ມປົກຄອງນັ້ນມີອາຍຸສາມສິບສອງປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມແປດປີ
18 ແລະພຣະອົງຊົງດຳເນີນຕາມມັນຄາຂອງບັນດາພຣະຣາຊາແຫ່ງອິສຣາເອນຕາມຢ່າງທີ່ຣາຊວົງອາຮາບກະທຳ ເພາະ
ວ່າທິດາຂອງອາຮາບເປັນມະເຫສີຂອງພຣະອົງ ແລະພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນ
ເຈົ້າ
19 ແຕ່ພຣະຜູ້ເປັນເຈົ້າຈະບໍ່ຊົງທຳລາຍຢູດາ ເພາະຊົງເຫັນແກ່ດາວິດຜູ້ຮັບໃຊ້ຂອງພຣະອົງ ເຫດທີ່ພຣະອົງໄດ້ກ່າວສັນ
ຍາວ່າ ຈະຊົງປະທານປະທີບແກ່ດາວິດ ແລະແກ່ຣາຊໂອຣົດຂອງພຣະອົງສືບຕໍ່ໄປ
20 ໃນຣັຊການຂອງພຣະອົງເອໂດມໄດ້ກະບົດອອກຈາກການປົກຄອງຂອງຢູດາ ແລະຕັ້ງກະສັດຂຶ້ນເຫນືອຕົນ
21 ແລ້ວເຢໂຮຣາມກໍສະເດັດພ້ອມກັບຣົດຮົບຂອງພຣະອົງຜ່ານໄປເຖິງຊາອີຣ໌ ພໍກາງຄືນກໍລຸກຂຶ້ນ ພຣະອົງແລະຜູ້ບັນ
ຊາການຣົດຮົບຂອງພຣະອົງກໍໂຈມຕີຄົນເອໂດມຊຶ່ງມາລ້ອມພຣະອົງນັ້ນ ແຕ່ກອງທັບຂອງພຣະອົງໄດ້ຫນີກັບບ້ານ
ເສັຽ
22 ເອໂດມຈຶ່ງໄດ້ກະບົດອອກຈາກຢູດາຈົນທຸກວັນນີ້ ແລ້ວລິບນາກໍໄດ້ກະບົດໃນຄາວດຽວກັນ
23 ສ່ວນພຣະຣາຊກິຈນອກນັ້ນຂອງເຢໂຮຣາມ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະ
ດານແຫ່ງພຣະຣາຊາປະເທດຢູດາຫລື
24 ເຢໂຮຣາມຈຶ່ງຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງໄວ້ກັບບັນພະບຸຣຸດຂອງພຣະອົງໃນນະ
ຄອນດາວິດ ແລະອາຮາຊີຢາໂອຣົດຂອງພຣະອົງໄດ້ຂຶ້ນຄອງແທນ

**ຣັຊການອາຮາຊີຢາກະສັດແຫ່ງຢູດາ**

Ahaziah Reigns over Judah

(2 ຂຄວ 22:1-6)

25 ໃນປີທີສິບສອງແຫ່ງຣັຊການໂຢຣາມໂອຣົດຂອງອາຮາບເຈົ້າຊີວິດແຫ່ງອິສຣາເອນ ອາຮາຊີຢາໂອຣົດເຢໂຮຣາມເຈົ້າ
ຊີວິດແຫ່ງຢູດາໄດ້ຊົງເລີ້ມປົກຄອງ

26 ເມື່ອອາຮາຊີຢາຊົງເລີ້ມປົກຄອງນັ້ນມີອາຍຸສິບສອງປີ ແລະຊົງປົກຄອງໃນເຢຣູຊາເລັມນຶ່ງປີ ພຣະມານດາຂອງພຣະ
ອົງຊົງພຣະນາມອາທາລີຢາ ພຣະນາງເປັນພຣະນັດດາ(ຫລານສາວ)ຂອງອົມຣີພຣະຣາຊາແຫ່ງອິສຣາເອນ
27 ພຣະອົງຊົງດຳເນີນຕາມຣາຊວົງຂອງອາຮາບດ້ວຍ ແລະຊົງກະທຳສິ່ງທີ່ຊົ່ວໃນສາຍພຣະເນດພຣະຜູ້ເປັນເຈົ້າ ດັ່ງທີ່
ຣາຊວົງຂອງອາຮາບໄດ້ກະທຳເພາະຊົງເປັນຣາຊໂອຣົດເຂີຍໃນຣາຊວົງຂອງອາຮາບ
28 ພຣະອົງສະເດັດກັບໂຢຣາມໂອຣົດຂອງອາຮາບເພື່ອທຳສົງຄາມກັບຮາຊາເອນເຈົ້າຊີວິດແຫ່ງຊີເຣັຽທີ່ຣາໂມທກິເລ
ອາດ ແລະຄົນຊີເຣັຽກະທຳໃຫ້ໂຢຣາມບາດເຈັບ
29 ແລະເຈົ້າຊີວິດໂຢຣາມໄດ້ກັບມາຮັກສາພຣະອົງທີ່ຍິສເອເອນໃຫ້ຫາຍບາດເຈັບຈາກທີ່ຄົນຊີເຣັຽໄດ້ກະທຳແກ່ພຣະ
ອົງທີ່ຣາມາ ເມື່ອພຣະອົງຊົງສູ້ກັບຮາຊາເອນເຈົ້າຊີວິດແຫ່ງຊີເຣັຽ ແລະອາຮາຊີຢາໂອຣົດຂອງເຢໂຮຣາມເຈົ້າຊີ
ວິດແຫ່ງຢູດາໄດ້ສະເດັດລົງໄປຫາໂຢຣາມໂອຣົດຂອງອາຮັບໃນຍິສເອເອນເພາະວ່າພຣະອົງຊົງປະຊວນ

## 9 ເຢຮູຮັບການເຈີມເປັນກະສັດຂອງອິສຣາເອນ

Anointing of Jehu

1 ແລ້ວເອລີຊາຜູ້ປະກາດພຣະທັມໄດ້ເອີ້ນພວກຜູ້ປະກາດພຣະທັມມາຄົນນຶ່ງແລະເວົ້າກັບເຂົາວ່າ, "ຈົ່ງຄາດແອວຂອງ
ເຈົ້າໄວ້ ຖືນ້ຳມັນຂວດນີ້ໄປທີ່ຣາໂມທກິເລອາດ
2 ແລະເມື່ອເຈົ້າໄປເຖິງແລ້ວ ຈົ່ງມອງເບິ່ງເຢຮູ ບຸດເຢໂຮຊາຟັດບຸດນິມຊີ ຈົ່ງເຂົ້າໄປຫາເຂົາ ໃຫ້ລຸກຂຶ້ນຈາກຫມູ່ພວກ
ເພື່ອນໆ ແລະນຳເຂົາເຂົ້າໄປໃນຫ້ອງຂ້າງໃນ
3 ແລ້ວຈົ່ງເອົານ້ຳມັນໃນຂວດເທລົງເທິງຫົວຂອງເຂົາ ແລະກ່າວວ່າ "ພຣະຜູ້ເປັນເຈົ້າຊົ່ງກ່າວດັ່ງນີ້ວ່າ ເຮົາຊະໂລມທົດ
ສົງໃຫ້ເຈົ້າເປັນກະສັດເຫນືອອິສຣາເອນ" ແລ້ວຈົ່ງເປີດປະຕູອອກຫນີໄປຢ່າລໍຊ້າຢູ່"
4 ຄົນຫນຸ່ມນັ້ນຄືຄົນຫນຸ່ມທີ່ເປັນຜູ້ປະກາດພຣະທັມຈຶ່ງໄປຍັງຣາໂມທກິເລອາດ
5 ແລະເມື່ອເຂົາມາເຖິງ ບັນດາຜູ້ບັງຄັບບັນຊາທະຫານກຳລັງປະຊຸມກັນຢູ່ ແລະເຂົາກ່າວວ່າ, "ຂ້າແດ່ທ່ານຜູ້ບັນຊາ
ການ ຂ້າພະເຈົ້າມີວຽກດ່ວນມາເຖິງທ່ານ" ແລະເຢຮູເວົ້າວ່າ, "ມາຫາຄົນໃດໃນພວກເຮົາ" ແລະເຂົາເວົ້າວ່າ, "ຂ້າ
ນ້ອຍ ມາຫາທ່ານ
6 ທ່ານກໍລຸກຂຶ້ນເຂົ້າໄປໃນເຮືອນ ແລະຄົນຫນຸ່ມນັ້ນກໍເທນ້ຳມັນເທິງຫົວຂອງທ່ານ ເວົ້າວ່າ, "ພຣະຜູ້ເປັນເຈົ້າ ພຣະເຈົ້າ
ແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຮົາທົດສົງຕັ້ງເຈົ້າໄວ້ເປັນກະສັດເຫນືອປະຊາກອນຂອງພຣະຜູ້ເປັນເຈົ້າຄືເຫນືອອິສ
ຣາເອນ
7 ແລະເຈົ້າຈົ່ງໂຄ່ນລົ້ມຣາຊວົງຂອງອາຮາບນາຍຂອງເຈົ້າ ເພື່ອເຮົາຈະໄດ້ຈັດການສນອງເຢເຊເບນ ເພາະໂລຫິດຂອງ
ບັນດາຜູ້ປະກາດພຣະທັມຜູ້ຮັບໃຊ້ຂອງເຮົາ ແລະເພາະໂລຫິດຂອງບັນດາຜູ້ຮັບໃຊ້ທັງສິ້ນຂອງພຣະຜູ້ເປັນເຈົ້າ
8 ເພາະວ່າຣາຊວົງອາຮາບທັງຫມົດຈະຕ້ອງພິນາດ ແລະເຮົາຈະຕັດຜູ້ຊາຍທຸກຄົນບໍ່ວ່າທາດຫລືອິສຣະທີ່ວໄປໃນອິສ
ຣາເອນອອກເສັຽຈາກອາຮາບ
9 ແລະເຮົາຈະກະທຳຣາຊວົງຂອງອາຮາບໃຫ້ເຫມືອນຣາຊວົງຂອງເຢໂຣໂບອາມບຸດເນບັດ ແລະເຫມືອນຣາຊວົງ
ຂອງບາອາຊາບຸດອາຮີຢາ
10 ແລະຫມາຈະກິນເຢເຊເບນໃນທີ່ດິນສ່ວນພຣະອົງໃນຍິສເອເອນ ແລະຈະບໍ່ມີຜູ້ໃດຝັງສົບພຣະນາງ"ແລ້ວເຂົາກໍເປີດ
ປະຕູຫນີໄປ
11 ເມື່ອເຢຮູອອກມາສູ່ພວກຂ້າຣາຊການຂອງເຈົ້ານາຍຂອງທ່ານ ເຂົາທັງຫລາຍເວົ້າກັບທ່ານວ່າ, "ທຸກຢ່າງຮຽບຮ້ອຍດີ
ຫລື ເປັນຫຍັງຄົນບ້າຄົນນີ້ຈຶ່ງມາຫາທ່ານ" ທ່ານເວົ້າກັບເຂົາທັງຫລາຍວ່າ, "ທ່ານທັງຫລາຍຮູ້ຈັກຊາຍຄົນນັ້ນແລະ
ພວກທ່ານຮູ້ດີວ່າເຂົາຢາກໄດ້ຫຍັງ?"

12 ແລະເຂົາທັງຫລາຍວ່າ, “ນັ້ນບໍ່ເປັນຄວາມຈິງ ຂໍບອກເຮົາມາເຖີດ” ແລະທ່ານວ່າ, “ເຂົາເວົ້າຢ່າງນີ້ກັບຂ້າພະເຈົ້າວ່າ
“ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າເຮົາທົດສົງຕັ້ງເຈົ້າໃຫ້ເປັນກະສັດເໜືອອິສຣາເອນ”
13 ແລ້ວທຸກຄົນກໍຟ້າວແກ້ເສື້ອຜ້າຂອງຕົນອອກ ວາງໄວ້ຮອງທ່ານທີ່ຂັ້ນບັນໄດຊຶ່ງແປນຢູ່ ແລະເຂົາທັງຫລາຍເປົ່າເຂົາ
ສັດ ແລະປ່າວຮ້ອງວ່າ, “ເຢຮູເປັນກະສັດ”

**ເຢຮູຊົງປະຫານໂຢຣາມ**

Joram of Israel killed

14 ດັ່ງນີ້ແຫລະ, ເຢຮູບຸດເຢໂຮຊາຟັດ ບຸດນິມຊີໄດ້ຮ່ວມກັນຄິດກະບົດຕໍ່ໂຢຣາມ (ຝ່າຍໂຢຣາມພ້ອມກັບອິສຣເອນທັງ
ປວງຍັງລະວັງປ້ອງກັນຮາຊາເອນກະສັດແຫ່ງຊີເຣັຽຢູ່ທີ່ຣາໂມທກີເລອາດ
15 ແຕ່ເຈົ້າຊີວິດໂຢຣາມຊົງກັບໄປຮັກສາພຣະອົງທີ່ຢິສມາເອນ ເພາະບາດແຜຊຶ່ງຄົນຊີເຣັຽໄດ້ກະທຳແກ່ພຣະອົງ ເມື່ອພ
ຣະອົງຊົງສູ້ຮົບກັບຮາຊາເອນເຈົ້າຊີວິດແຫ່ງຊີເຣັຽ) ເຢຮູຈຶ່ງກ່າວວ່າ, “ຖ້ານີ້ເປັນຄວາມປະສົງຂອງທ່ານທັງຫລາຍ ກໍຂໍ
ຢ່າໃຫ້ຄົນນຶ່ງຄົນໃດລັກລອບໜີອອກຈາກເມືອງເພື່ອບອກຂ່າວທີ່ຢິສມາເອນ”
16 ແລ້ວເຢຮູກໍສະເດັດຊົງຣົດຮົບ ແລະສະເດັດໄປຍັງຢິສມາເອນ ເພາະໂຢຣາມບັນທົມທີ່ນັ້ນ ແລະອາຮາຊີຢາເຈົ້າຊີວິດ
ຢູດາໄດ້ສະເດັດລົງມາຢ້ຽມໂຢຣາມ
17 ຝ່າຍທະຫານຍາມຢືນຢູ່ເທິງຫໍຄອຍທີ່ຢິສມາເອນ ເຂົາຫລຽວເຫັນພວກຂອງເຢຮູມາຈຶ່ງເວົ້າວ່າ, “ຂ້າພະເຈົ້າເຫັນຄົນ
ພວກນຶ່ງ” ໂຢຣາມຈຶ່ງກ່າວວ່າ, “ຈົ່ງໃຊ້ໃຫ້ພົນມ້າໄປພົບທ່ານ ແລະເວົ້າວ່າ “ມາຢ່າງສັນຕິຫລື”
18 ຄົນນັ້ນຈຶ່ງຂີ່ມ້າໄປພົບທ່ານ ແລະເວົ້າວ່າ, “ພຣະຣາຊາກ່າວດັ່ງນີ້ວ່າ ມາຢ່າງສັນຕິຫລື” ແລະເຢຮູຕອບວ່າ, “ທ່ານ
ກ່ຽວຂ້ອງຫຍັງກັບສັນຕິ ຈົ່ງລ້ຽວກັບຕາມເຮົາມາ” ແລະທະຫານຍາມກໍຣາຍງານວ່າ, “ຜູ້ສົ່ງຂ່າວໄປເຖິງເຂົາແລ້ວ ແຕ່
ເຂົາບໍ່ກັບມາ”
19 ພຣະອົງຈຶ່ງຮັບສັ່ງໃຊ້ພົນມ້າຄົນທີສອງອອກໄປ ຜູ້ນັ້ນມາເຖິງເຂົາແລ້ວກໍເວົ້າວ່າ, “ພຣະຣາຊາກ່າວດັ່ງນີ້ວ່າ “ຢ່າງສັນ
ຕິຫລື” ແລະເຢຮູຕອບວ່າ, “ທ່ານກ່ຽວຂ້ອງຫຍັງກັບສັນຕິ ຈົ່ງລ້ຽວກັບຕາມເຮົາມາ”
20 ທະຫານຍາມກໍຣາຍງານອີກວ່າ, “ເຂົາໄປເຖິງແລ້ວແຕ່ເຂົາກໍບໍ່ກັບມາ ແລະການຂັບຣົດນັ້ນກໍເໝືອນກັບການຂັບຣົດ
ຂອງເຢຮູບຸດນິມຊີ ເພາະເຂົາຂັບໄວທີ່ສຸດ”
21 ໂຢຣາມເວົ້າວ່າ, “ຈົ່ງຕຽມພ້ອມ” ແລະເຂົາກໍຈັດຣົດຮົບຂອງພຣະອົງໃຫ້ພ້ອມໄວ້ ແລ້ວໂຢຣາມເຈົ້າຊີວິດແຫ່ງອິສຣາ
ເອນ ແລະອາຮາຊີຢາເຈົ້າຊີວິດແຫ່ງຢູດາກໍສະເດັດອອກໄປ ຕ່າງກໍຊົງຣົດຮົບຂອງພຣະອົງເອງ ຊົງອອກໄປປະທະ
ກັບເຢຮູ ມາພົບກັນເຂົ້າໃນທີ່ດິນຕອນນຶ່ງຂອງນາໂບທຊາວຢິສມາເອນ
22 ເມື່ອໂຢຣາມເຫັນເຢຮູແລ້ວຈຶ່ງເວົ້າວ່າ, “ເຢຮູ ຢ່າງສັນຕິຫລື” ເຢຮູຕອບວ່າ, “ຈະສັນຕິໄດ້ຢ່າງໃດ ເມື່ອການຫລິ້ນຊູ້
ແລະວິທະຍາຄົມຂອງເຢເຊເບນມານດາຂອງທ່ານຍັງມີຢູ່ຫລາຍເຊັ່ນນີ້”
23 ແລ້ວໂຢຣາມຊົງລ້ຽວຣົດຮົບຫັນກັບໄປ ທັງຮັບສັ່ງກັບອາຮາຊີຢາວ່າ, “ຂ້າແຕ່ອາຮາຊີຢາ ເຂົາຮ່ວມກັນຄິດກະບົດ”
24 ແລະເຢຮູໂກ່ງທະນູດ້ວຍສຸດກຳລັງ ແລະລູກທະນູຖືກກາງຫລັງຂອງໂຢຣາມແທງຊອດຫົວໃຈຂອງພຣະອົງ ພຣະອົງກໍ
ຊົງລົ້ມລົງໃນຣົດຮົບຂອງພຣະອົງ
25 ເຢຮູເວົ້າກັບບິດກາຣ໌ ນາຍທະຫານຄົນສນິດຂອງພຣະອົງວ່າ, “ຈົ່ງຍົກສົບເຂົາຂຶ້ນແລະໂຍນຖິ້ມລົງໄປໃນທີ່ດິນຂອງ
ນາໂບທ ຊາວຢິສມາເອນ ຈື່ໄວ້ວ່າ ເມື່ອເຮົາແລະທ່ານຂີ່ມ້າຄຽງກັນມາຕາມອາຮັບບິດາຂອງເຂົາໄປ ພຣະຜູ້ເປັນເຈົ້າ
ຊົງກ່າວໂທດເຂົາດັ່ງນີ້ວ່າ
26 “ເຮົາໄດ້ເຫັນໂລຫິດຂອງນາໂບທແລະໂລຫິດຂອງລູກຫລານຂອງເຂົາມື້ວານນີ້ ເຮົາຈຶ່ງສັນຍາວາຈະລົງໂທດເຈົ້າໃນ
ທົ່ງນາບ່ອນດຽວກັນນີ້ ສະນັ້ນຈົ່ງຍົກເຂົາຂຶ້ນຖິ້ມໄວ້ເທິງທີ່ດິນຕອນນີ້ແຫລະຕາມພຣະຄຳຂອງພຣະຜູ້ເປັນເຈົ້າ”

**ເຢຮູປະຫານອາຮາຊີຢາ**

Ahaziah of Judah killed

(2 ຂຄວ 22:7-9)
27 ເມື່ອອາຮາຊີຢາເຈົ້າຊີວິດແຫ່ງຢູດາເຫັນດັ່ງນັ້ນ ພຣະອົງຊົງໜີໄປໃນທິດເມືອງເບທຮັກການ ແລະເຢຮູກໍຕິດຕາມພ
ຣະອົງໄປກ່າວວ່າ, "ຈົ່ງຍິງທ່ານໃນຣົດຮົບດ້ວຍ" ແລະເຂົາທັງຫລາຍໄດ້ຍິງພຣະອົງທາງຂ້າມພູເມືອງກູຣ໌ຊຶ່ງຢູ່ໃກ້ອິບ
ເລອາມ ແລະພຣະອົງຊົງໜີໄປເຖິງເມືອງເມກິດໂດ ແລະສິ້ນພຣະຊົນທີ່ນັ້ນ
28 ຂ້າຣາຊການຂອງພຣະອົງກໍບັນທຸກພຣະສົບໃສ່ຣົດຮົບໄປຍັງເຢຣູຊາເລັມ ແລະຝັງໄວ້ໃນອຸບໂມງຂອງພຣະອົງກັບ
ບັນພະບຸຣຸດຂອງພຣະອົງໃນນະຄອນດາວິດ
29 ໃນປີທີສິບເອັດແຫ່ງຣັຊການໂຢຣາມບຸດອາຮາບ ອາຮາຊີຢາເລີ່ມປົກຄອງເໜືອຢູດາ

**ຣາຊີນີເຢເຊເບນຖືກຂ້າ**

Jezebel's Violent Death

30 ເມື່ອເຢຮູມາເຖິງເມືອງຍິສເຣເອນ ເຢເຊເບນຊົງຊາບເຣື່ອງ ພຣະນາງກໍຊົງຊຽນຕາແລະແຕ່ງພຣະສຽນ ແລະຊົງມອງ
ອອກໄປທາງປ່ອງຢ້ຽມວັງ
31 ແລະເມື່ອເຢຮູຜ່ານເຂົ້າປະຕູວັງມາພຣະນາງກໍຮ້ອງໃສ່ວ່າ, "ເຈົ້າຜູ້ຂ້ານາຍຂອງເຈົ້າ ຢ່າງເຈົ້າຊິມຣີ ມາຢ່າງສັນຕິຫລື"
32 ແລ້ວເຢຮູແຫງນພຣະພັກທອດພຣະເນດແລະຮ້ອງໃສ່ວ່າ, "ໃຜຢູ່ຝ່າຍເຮົາ ແມ່ນໃຜແດ່?" ມີຫະຫານວັງສອງສາມ
ຄົນຊະປ່ອນຄໍອອກມາເບິ່ງພຣະອົງ
33 ພຣະອົງເວົ້າວ່າ, "ໂຍນນາງລົງມາ" ເຂົາຈຶ່ງໂຍນພຣະນາງລົງມາ ແລະໂລຫິດຂອງພຣະນາງກໍຟົ້ງຕິດຝາກໍາແພງແລະ
ຕິດມ້າແລະພຣະອົງຊົງຂັບຣົດມ້າຢຽບຊາກສົບຂອງນາງ
34 ແລ້ວພຣະອົງສະເດັດເຂົ້າໄປ ສເວີຍແລະຊົງດື່ມ ແລະພຣະອົງເວົ້າວ່າ, "ຈັດການກັບຍິງທີ່ຖືກສາບຄົນນີ້ ເອົາໄປຝັງ
ເສັຽ ເພາະນາງເປັນທິດາຂອງພຣະຣາຊາ"
35 ແຕ່ເມື່ອເຂົາຈະໄປຝັງສົບພຣະນາງ ເຂົາກໍພົບແຕ່ກະໂລກຫົວ ຕີນແລະມືຂອງພຣະນາງ
36 ເມື່ອເຂົາກັບມາທູນພຣະອົງ ພຣະອົງເວົ້າວ່າ, "ນີ້ເປັນໄປຕາມພຣະຄໍາຂອງພຣະຜູ້ເປັນເຈົ້າ ຊຶ່ງພຣະອົງກ່າວທາງເອລີ
ຢາຊາວຕິສຊີຜູ້ຮັບໃຊ້ຂອງພຣະອົງວ່າຫມາຈະກິນເນື້ອຂອງເຢເຊເບນໃນເຂດແດນຍິສເຣເອນ
37 ແລະສົບຂອງເຢເຊເບນຈະເປັນເຫມືອນອາຈົມສັດເທິງພື້ນທີ່ງໃນເຂດແດນຍິສເຣເອນ ເພື່ອວ່າຈະບໍ່ມີໃຜກ່າວວ່າ "ນີ້
ຄື ເຢເຊເບນ"

## 10 ເຢຮູທໍາລາຍຣາຊວົງຂອງອາຮາບ

Massacre of Ahab's Descendants

1 ຝ່າຍອາຮັບມີໂອຣົດເຈັດສິບອົງໃນຊາມາເຣັຽ ເຢຮູຈຶ່ງຊົງພຣະອັກສອນສົ່ງໄປຍັງຊາມາເຣັຽເຖິງບັນດາຜູ້ປົກຄອງ
ເມືອງຍິສເຣເອນນັ້ນເຖິງພວກຜູ້ໃຫຍ່ ແລະເຖິງບັນດາພີ່ລ້ຽງແຫ່ງໂອຣົດຂອງອາຮາບວ່າ,
2 "ເພາະບັນດາໂອຣົດຂອງນາຍຂອງທ່ານຢູ່ກັບທ່ານ ແລະທ່ານມີຣົດຮົບແລະມ້າ ແລະເມືອງທີ່ມີປ້ອມດ້ວຍແລະອາ
ວຸດພໍຈົດນີ້ມາເຖິງທ່ານ
3 ຈົ່ງຄັດເລືອກໂອຣົດນາຍຂອງທ່ານອົງທີ່ດີທີ່ສຸດ ແລະເຫມາະສົມທີ່ສຸດ ຈົ່ງຕັ້ງຜູ້ນັ້ນໄວ້ເທິງພຣະທີ່ນັ່ງຣາຊບິດາຂອງ
ຕົນ ແລະຈົ່ງສູ້ຮົບເພື່ອຣາຊວົງນາຍຂອງທ່ານ"
4 ແຕ່ເຂົາທັງຫລາຍຢ້ານຢ່າງທີ່ສຸດ ແລະເວົ້າວ່າ, "ເບິ່ງແມ, ເຈົ້າຊີວິດສອງພຣະອົງຍັງຕ້ານທານພຣະອົງບໍ່ໄດ້ແລ້ວ
ເຮົາຈະຕໍ່ສູ້ ພຣະອົງໄດ້ຢ່າງໃດ"
5 ສະນັ້ນຜູ້ທີ່ບັງຄັບບັນຊາພຣະຣາຊວັງ ແລະຜູ້ທີ່ບັງຄັບບັນຊາບ້ານເມືອງພ້ອມພວກຜູ້ໃຫຍ່ແລະພວກພີ່ລ້ຽງ ໃຊ້ໃຫ້ໄປ
ທູນເຢຮູວ່າ, "ຂ້ານ້ອຍທັງຫລາຍເປັນຜູ້ຮັບໃຊ້ຂອງພຣະອົງ ແລະຂ້ານ້ອຍຈະກະທໍາທຸກຢ່າງທີ່ພຣະອົງສັ່ງແກ່ຂ້ານ້ອຍ
ຂ້ານ້ອຍຈະບໍ່ຕັ້ງຜູ້ນຶ່ງຜູ້ໃດໄວ້ເປັນກະສັດ ຂໍຊົງກະທໍາຕາມທີ່ພໍແກ່ພຣະເນດພຣະກັນຂອງພຣະອົງເຖີດ"

6 ແລ້ວພຣະອົງຊົງມີລາຍພຣະຫັດໄປເຖິງເຂົາສະບັບທີສອງວ່າ, “ຖ້າທ່ານພ້ອມທີ່ຈະເຊື່ອຟັງເຮົາ ຈົ່ງນຳຫົວຂອງບັນດາ
ໂອຣົດນາຍຂອງທ່ານມາຫາເຮົາທີ່ຍິສເຣເອນມື້ອື່ນເວລານີ້” ຝ່າຍໂອຣົດຂອງພຣະຣາຊາເຈັດສິບພຣະອົງດ້ວຍກັນ
ຢູ່ກັບຄົນໃຫຍ່ຄົນໂຕໃນເມືອງ ຜູ້ຊຶ່ງໄດ້ຊຸບລ້ຽງທ່ານທັງຫລາຍມາ
7 ແລະຢູ່ມາເມື່ອລາຍພຣະຫັດມາເຖິງເຂົາທັງຫລາຍ ເຂົາກໍຈັບໂອຣົດຂອງພຣະຣາຊາຂ້າເສັຽເຈັດສິບອົງດ້ວຍກັນ ເອົາ
ຫົວໃສ່ກະບຸງສົ່ງໄປຍັງພຣະອົງທີ່ຍິສເຣເອນ
8 ເມື່ອຜູ້ສົ່ງຂ່າວມາທູນພຣະອົງວ່າ, “ເຂົານຳຫົວໂອຣົດຂອງກະສັດມາແລ້ວ” ພຣະອົງກ່າວວ່າ, “ຈົ່ງກອງໄວ້ເປັນ
ສອງກອງທາງເຂົ້າປະຕູເມືອງຈົນເຖິງຮຸ່ງເຊົ້າ”
9 ພໍຮຸ່ງເຊົ້າພຣະອົງສະເດັດອອກໄປປະທັບຢືນ ກ່າວກັບປະຊາຊົນທັງປວງວ່າ, “ທ່ານທັງຫລາຍເປັນຜູ້ບໍ່ມີຄວາມຜິດ
ສ່ວນເຮົາໄດ້ກະບົດຕໍ່ນາຍຂອງເຮົາແລະປະຫານພຣະອົງເສັຽ ແຕ່ຜູ້ໃດທີ່ຂ້າຄົນເຫລົ່ານີ້
10 ຈົ່ງຊາບເຖີດວ່າ ພຣະຄຳຂອງພຣະຜູ້ເປັນເຈົ້າ ຊຶ່ງພຣະຜູ້ເປັນເຈົ້າກ່າວກ່ຽວກັບຣາຊວົງຂອງອາຮາບ ຈະບໍ່ຕົກດິນແຕ່
ຢ່າງໃດເລີຍ ເພາະພຣະຜູ້ເປັນເຈົ້າຊົງກະທຳຕາມທີ່ພຣະອົງກ່າວໂດຍເອລີຢາຜູ້ຮັບໃຊ້ຂອງພຣະອົງ”
11 ເຢຮູຊົງປະຫານຣາຊວົງຂອງອາຮາບທີ່ເຫລືອຢູ່ໃນຍິສເຣເອນ ຄົນໃຫຍ່ຄົນໂຕທຸກຄົນຂອງພຣະອົງ ແລະສະຫາຍສ
ນິດຂອງພຣະອົງ ແລະປະໂຣຫິດຂອງພຣະອົງດັ່ງນີ້ແຫລະບໍ່ເຫລືອໄວ້ຈັກຄົນດຽວເລີຍ
12 ແລ້ວພຣະອົງກໍຊົງລຸກຂຶ້ນສະເດັດອອກໄປຍັງຊາມາເຣັຽ ເມື່ອພຣະອົງປະທັບທີ່ເບັດເອເກດ ຫມູ່ບ້ານຂອງຜູ້ລ້ຽງແກະ
ຕາມທາງທີ່ສະເດັດ
13 ເຢຮູຊົງພົບຍາດຂອງອາຮາຊີຢາເຈົ້າຊີວິດແຫ່ງຢູດາແລະພຣະອົງຖາມວ່າ, “ທ່ານທັງຫລາຍແມ່ນໃຜ?” ແລະເຂົາທັງ
ຫລາຍທູນຕອບວ່າ, “ຂ້າພະເຈົ້າທັງຫລາຍຄືຍາດຂອງອາຮາຊີຢາ ແລະຂ້າພະເຈົ້າທັງຫລາຍລົງມາຢ້ຽມບັນດາຣາຊ
ໂອຣົດແລະໂອຣົດຂອງຣາຊມານດາ”
14 ພຣະອົງຮັບສັ່ງວ່າ, “ຈັບເຂົາທັງເປັນ” ເຂົາທັງຫລາຍກໍຈັບເຂົາທັງເປັນແລະປະຫານເຂົາເສັຽທີ່ບໍ່ເບັດເອເກດສີ່ສິບ
ສອງຄົນດ້ວຍກັນບໍ່ເຫລືອໄວ້ຈັກຄົນດຽວ
15 ເມື່ອພຣະອົງສະເດັດຈາກທີ່ນັ້ນກໍຊົງພົບເຢໂຮນາດາບບຸດເຣຄັບມາຫາພຣະອົງ ພຣະອົງຊົງຕ້ອນຮັບເຂົາແລະເວົ້າ
ກັບເຂົາວ່າ, “ໃຈຂອງທ່ານສັດຊື່ຕໍ່ໃຈຂອງເຮົາ ຢ່າງໃຈຂອງເຮົາສັດຊື່ຕໍ່ຂອງທ່ານຫລື” ແລະເຢໂຮນາດາບທູນວ່າ,
“ສັດຊື່ ຂ້ານ້ອຍ” ເຢຮູກ່າວວ່າ, “ຖ້າສັດຊື່ກໍຍື່ນມືມາໃຫ້ເຮົາ” ເຂົາຈຶ່ງຍື່ນມືຂອງເຂົາ ແລະເຢຮູກໍຈັບເຂົາຂຶ້ນມາເທິງ
ຣົດຮົບ
16 ພຣະອົງກ່າວວ່າ, “ມາກັບເຮົາເຖີດ ແລະເບິ່ງຄວາມຮ້ອນຮົນຂອງເຮົາເພື່ອພຣະຜູ້ເປັນເຈົ້າ” ພຣະອົງຈຶ່ງໃຫ້ເຂົານັ່ງຣົດ
ຮົບຂອງ ພຣະອົງໄປ
17 ເມື່ອພຣະອົງມາເຖິງຊາມາເຣັຽ ພຣະອົງຊົງປະຫານຄົນທັງປວງທີ່ເປັນຣາຊວົງຂອງອາຮາບທີ່ເຫລືອຢູ່ໃນຊາມາເຣັຽ
ເສັຽ ຈົນ ພຣະອົງຊົງທຳລາຍອາຮາບເສັຽສິ້ນ ຕາມພຣະຄຳຂອງພຣະຜູ້ເປັນເຈົ້າກ່າວກັບເອລີຢາ

Slaughter of Worshipers of Baal

18 ແລ້ວເຢຮູຊົງປະຊຸມບັນດາປະຊາຊົນທັງສິ້ນແລະກ່າວກັບເຂົາທັງຫລາຍວ່າ, “ອາຮາບບົວຣະບັດພຣະບາອານແຕ່
ນ້ອຍດຽວ ແຕ່ເຢຮູຈະບົວຣະບັດພຣະອົງຫລາຍກວ່າທ່ານອີກ
19 ສະນັ້ນຈົ່ງເອີ້ນຜູ້ປະກາດພຣະທັມຂອງພຣະບາອານມາໃຫ້ຫມົດ ທັງບັນດາຜູ້ນະມັສການແລະປະໂຣຫິດຂອງທ່ານ
ຢ່າໃຫ້ຜູ້ໃດ ຂາດໄປເລີຍ ເພາະເຮົາຈະມີສັຕບູຊາຢ່າງໃຫຍ່ໂຕທີ່ຈະຖວາຍແກ່ພຣະບາອານ ຜູ້ໃດຂາດຈະມີຊີວິດຢູ່ບໍ່
ໄດ້” ແຕ່ເຢຮູຊົງກະທຳເປັນອຸບາຍເພື່ອຈະທຳລາຍຜູ້ໂຄຣົບນະມັສການພຣະບາອານ
20 ເຢຮູສັ່ງວ່າ, “ຈົ່ງຈັດພິທີປະຊຸມນະມັສການພຣະບາອານ” ເຂົາກໍປ່າວຮ້ອງເອີ້ນປະຊຸມເຊັ່ນກັນ
21 ເຢຮູຊົງໃຊ້ໃຫ້ໄປທົ່ວອິສຣາເອນ ແລະຜູ້ນະມັສການພຣະບາອານກໍມາທັງຫມົດ ຈຶ່ງບໍ່ມີເຫລືອຈັກຄົນນຶ່ງທີ່ບໍ່ໄດ້ມາ
ແລະເຂົາທັງ ຫລາຍກໍເຂົ້າໄປໃນພຣະວິຫານຂອງພຣະບາອານ ແລະພຣະວິຫານຂອງພຣະບາອານກໍເຕັມແຫນ້ນ

22 ພຣະອົງສັ່ງຜູ້ທີ່ດູແລຕູ້ເສື້ອວ່າ, “ຈົ່ງເອົາເສື້ອອອກມາໃຫ້ເຂົາທັງຫລາຍ
23 ແລ້ວເຢຮູສະເດັດເຂົ້າໄປໃນພຣະວິຫານຂອງພຣະບາອານ ພ້ອມກັບເຢໂຮນາດາບບຸດເນຄັບ ພຣະອົງກ່າວກັບຜູ້ນະ
ມັສການພຣະບາອານວ່າ, “ຈົ່ງຄົ້ນເບິ່ງ ເບິ່ງໃຫ້ດີວ່າບໍ່ມີຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຢູ່ໃນຫມູ່ພວກທ່ານ ໃຫ້ມີແຕ່ຜູ້
ນະມັສການ
ພຣະບາອານເທົ່ານັ້ນ”
24 ແລ້ວເຂົາທັງຫລາຍເຂົ້າໄປຖວາຍເຄື່ອງສັດບູຊາແລະເຄື່ອງເຜົາບູຊາ ເຢຮູຊົງວາງຄົນແປດສິບຄົນໄວ້ພາຍນອກແລະ
ກ່າວວ່າ, “ຊາຍຄົນໃດທີ່ປ່ອຍໃຫ້ຄົນນຶ່ງຄົນໃດຊຶ່ງເຮົາມອບໄວ້ໃນມືເຈົ້າຫນີລອດໄປໄດ້ ເຂົາຕ້ອງເສັຽຊີວິດຂອງເຂົາ
ແທນ”
25 ເມື່ອພຣະອົງເສັດຈາກການຖວາຍເຄື່ອງເຜົາບູຊາ ເຢຮູຮັບສັ່ງແກ່ທະຫານຮັກສາພຣະອົງແລະພວກນາຍທະຫານວ່າ,
“ຈົ່ງເຂົ້າໄປຂ້າເຂົາເສັຽ ຢ່າໃຫ້ລອດຈັກຄົນດຽວ” ເມື່ອເຂົາຂ້າເຂົາທັງຫລາຍເສັຽດ້ວຍຄົມດາບແລ້ວ ທະຫານຮັກສາພ
ຣະອົງແລະພວກນາຍທະຫານກໍໂຍນສົບເຂົາທັງຫລາຍອອກໄປຂ້າງນອກ ແລ້ວກໍເຂົ້າໄປທີ່ແທ່ນບູຊາໃນພຣະວິຫານ
ພຣະບາອານ
26 ເຂົານໍາເອົາເສົາສັກສິດຊຶ່ງຢູ່ໃນພຣະວິຫານຂອງພຣະບາອານອອກມາເຜົາເສັຽ
27 ເຂົາທັງຫລາຍທະລາຍເສົາສັກສິດແຫ່ງພຣະບາອານ ແລະທະລາຍພຣະວິຫານຂອງພຣະບາອານແລະກະທໍາໃຫ້
ເປັນສ້ວມຈົນເຖິງທຸກວັນນີ້
28 ເຢຮູຊົງກວາດລ້າງພຣະບາອານຈາກອິສຣາເອນດັ່ງນີ້ແຫລະ
29 ແຕ່ເຢຮູບໍ່ໄດ້ຊົງຫັນຈາກບາບຂອງເຢໂຣໂບອາມບຸດເນບັດ ຊຶ່ງພຣະອົງຊົງກະທໍາໃຫ້ອິສຣາເອນທໍາດ້ວຍ ຄືງົວທອງ
ຄໍາຊຶ່ງຢູ່ໃນເມືອງເບັດເອນ ແລະໃນເມືອງດານ
30 ແລະພຣະຜູ້ເປັນເຈົ້າກ່າວກັບເຢຮູວ່າ, “ເພາະເຈົ້າໄດ້ທໍາດີໃນການທີ່ກະທໍາສິ່ງທີ່ຊອບໃນສາຍຕາຂອງເຮົາ ແລະໄດ້
ກະທໍາຕໍ່ ຣາຊວົງອາຮາບຕາມທຸກຢ່າງທີ່ຢູ່ໃນໃຈຂອງເຮົາ ເຊື້ອສາຍຂອງເຈົ້າຈົນຊົ່ວຊີວິດທີສີ່ຈະໄດ້ນັ່ງເທິງພຣະ
ທີ່ນັ່ງຂອງອິສຣາເອນ
31 ແຕ່ເຢຮູບໍ່ໄດ້ຊົງລະມັດລະວັງທີ່ຈະດໍາເນີນຕາມພຣະຄໍາຂອງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນດ້ວຍສິ້ນສຸດພ
ຣະທັຍຂອງ ພຣະອົງ ພຣະອົງບໍ່ໄດ້ຊົງຫັນຫນີຈາກບາບຂອງເຢໂຣໂບອາມ ຊຶ່ງພຣະອົງຊົງກະທໍາໃຫ້ອິສຣາເອນທໍາ
ດ້ວຍ

### ມໍຣະນະກັມຂອງເຢຮູ

Death of Jehu

32 ໃນສມັຍນັ້ນພຣະຜູ້ເປັນເຈົ້າຊົງເລີ້ມຕັດສ່ວນຂອງອິສຣາເອນອອກ ຮາຊາເອນໄດ້ຣົບຊະນະຕາມເຂດແດນອິສຣາ
ເອນ
33 ຕັ້ງແຕ່ແມ່ນໍ້າຈໍແດນຟາກຕາເວັນອອກທົ່ວແຜ່ນດິນກີເລອາດ ຄົນກາດ ຄົນຣູເບນ ແລະຄົນມານັສເຊ ຕັ້ງແຕ່ອາໂຣເອີ
ຊຶ່ງຢູ່ຂ້າງບ່ອນລຸ່ມແມ່ນໍ້າອາຣ໌ໂນນ ຄືກີເລອາດ ແລະບາຊານ
34 ສ່ວນພຣະຣາຊກິຈນອກນັ້ນຂອງເຢຮູ ແລະບັນດາສິ່ງຊຶ່ງພຣະອົງຊົງກະທໍາ ແລະຍຸດພະລັງທັງສິ້ນຂອງພຣະອົງ ບໍ່ໄດ້
ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດອິສຣາເອນຫລື
35 ເຢຮູຈຶ່ງຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາກໍຝັງໄວ້ໃນກຸງຊາມາເຣັຽ ແລະເຢໂຮອາຮັສໂອຣົດ
ຂອງພຣະອົງໄດ້ສເວີຍຣາຊແທນພຣະອົງ
36 ເວລາທີ່ເຢຮູຊົງປົກຄອງເຫນືອອິສຣາເອນໃນຊາມາເຣັຽນັ້ນເປັນເວລາຊາວແປດປີ

## 11 ພຣະນາງອາທາລີຢາຍາດແຍ່ງຣາຊບັນລັງໄດ້

Athaliah Reigns over Judah

(2 ຂຄວ 22:10-12)

1 ເມື່ອອາທາລີຢາພຣະມານດາຂອງອາຮາຊີຢາຊົງເຫັນວ່າໂອຣົດຂອງພຣະນາງສິ້ນພຣະຊົນ ພຣະນາງກໍລຸກຂຶ້ນຊົງທຳລາຍເຊື້ອ ພຣະວົງເສັຽສິ້ນ

2 ແຕ່ເຢໂຣເຊບາທິດາຂອງກະສັດໂຢຣາມພຣະນ້ອງນາງຂອງອາຮາຊີຢາໄດ້ນຳໂຢອັສໂອຣົດຂອງອາຮາຊີຢາແລະລອບລັກໂອຣົດໄປຈາກຖ້າມກາງໂອຣົດຂອງພຣະຣາຊາ ຜູ້ຊຶ່ງຈະຖືກປະຫານຊີວິດ ແລະພຣະນາງເກັບໂອຣົດແລະພີ່ລ້ຽງໄວ້ໃນຫ້ອງເກັບບ່ອນນອນ ພຣະນາງເຊື່ອງໂອຣົດເສັຽຈາກອາທາລີຢາດັ່ງນີ້ແຫລະ ໂອຣົດຈຶ່ງບໍ່ໄດ້ຖືກປະຫານຊີວິດ

3 ໂອຣົດຢູ່ກັບພຣະນາງຫົກປີລີ້ຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະອາທາລີຢາກໍປົກຄອງແຜ່ນດິນ

Jehoiada Anoints the Child Joash

(2 ຂຄວ 23:1-11)

4 ແຕ່ໃນປີທີເຈັດເຢຮົວອາດາໄດ້ໃຊ້ໃຫ້ບັນດານາຍທັບນາຍກອງຂອງຄົນກາຣີ ແລະຂອງພວກທະຫານຮັກສາພຣະອົງໃຫ້ເຂົາທັງຫລາຍມາຫາທ່ານທີ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະທ່ານໄດ້ທຳຄຳຫມັ້ນສັນຍາກັບເຂົາທັງຫລາຍ ແລະໃຫ້ເຂົາສາບານໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະທ່ານໄດ້ນຳໂອຣົດຂອງພຣະຣາຊາມາໃຫ້ເຂົາເຫັນ

5 ແລະທ່ານບັນຊາເຂົາທັງຫລາຍວ່ານີ້ເປັນສິ່ງທີ່ທ່ານທັງຫລາຍຄວນກະທຳຄືນຶ່ງໃນສາມຂອງພວກທ່ານ ຜູ້ເຂົ້າເວນວັນສະບາໂຕເຝົ້າພຣະຣາຊວັງ

6 (ຝ່າຍອີກນຶ່ງໃນສາມປະຈຳຢູ່ທີ່ປະຕູເມືອງຊູຣ໌ ແລະອີກນຶ່ງໃນສາມປະຈຳຢູ່ທີ່ປະຕູດ້ານຫລັງທະຫານຮັກສາພຣະອົງ) ໃຫ້ເຝົ້າ ພຣະຣາຊວັງທຳການຂັດຂວາງໄວ້

7 ສ່ວນທ່ານທັງຫລາຍອີກສອງພວກ ຄືຜູ້ທີ່ອອກເວນວັນສະບາໂຕໃຫ້ເຝົ້າພຣະວິຫານຂອງພຣະຜູ້ເປັນເຈົ້າ ເພື່ອປ້ອງກັນກະສັດ

8 ທ່ານທັງຫລາຍຈົ່ງລ້ອມເຈົ້າຊີວິດໄວ້ ທຸກຄົນຖືອາວຸດຂອງຕົນໄວ້ ຜູ້ທີ່ເຂົ້າມາໃກ້ແຖວໃຫ້ປະຫານເສັຽ ຈົ່ງຢູ່ກັບເຈົ້າຊີວິດເມື່ອ ພຣະອົງສະເດັດອອກແລະສະເດັດເຂົ້າ”

9 ນາຍທັບນາຍກອງກໍໄດ້ກະທຳຕາມທີ່ເຢຮົວອາດາປະໂຣຫິດສັ່ງທຸກປະການ ຕ່າຜູກໍນຳຄົນຂອງຕົນທີ່ຈະເຂົ້າເວນວັນສະບາໂຕ ພ້ອມກັບຄົນທີ່ຈະອອກເວນວັນສະບາໂຕນັ້ນມາຫາເຢຮົວອາດາປະໂຣຫິດ

10 ປະໂຣຫິດກໍມອບຫອກແລະໂລ່ຊຶ່ງຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ອັນເປັນຂອງເຈົ້າຊີວິດດາວິດແກ່ນາຍທັບນາຍກອງ

11 ທະຫານຮັກສາພຣະອົງຖືອາວຸດທຸກຄົນ ຢືນປະຈຳຢູ່ຕັ້ງແຕ່ພຣະວິຫານດ້ານຂວາໄປເຖິງພຣະວິຫານດ້ານຊ້າຍ ຮອບແທ່ນບູຊາ ແລະພຣະວິຫານຢູ່ຮອບເຈົ້າຊີວິດ

12 ແລ້ວທ່ານກໍນຳໂອຣົດຂອງເຈົ້າຊີວິດອອກມາສວມມົງກຸດໃຫ້ ແລະມອບພຣະໂອວາດໃຫ້ ແລະເຂົາທັງຫລາຍຕັ້ງທ່ານໄວ້ເປັນກະສັດ ແລະໄດ້ຫົດສົງທ່ານ ແລະເຂົາທັງຫລາຍກໍຕົບມື ເວົ້າວ່າ, “ຂໍພຣະຣາຊາຊົງພຣະຈະເຣີນ”

**ມໍຣະນະກັມຂອງອາທາລີຢາ**

Death of Athaliah

(2 ຂຄວ 23:12-24:1)

13 ເມື່ອອາທາລີຢາຊົງສະດັບຟັງສຽງຂອງທະຫານຮັກສາພຣະອົງແລະສຽງປະຊາຊົນ ພຣະນາງກໍສະເດັດເຂົ້າໄປຫາປະຊາຊົນທີ່ພຣະວິຫານຂອງພຣະຜູ້ເປັນເຈົ້າ

14 ເມື່ອພຣະນາງຫອດພຣະເນດ ກໍແລເຫັນເຈົ້າຊີວິດປະທັບຢືນຢູ່ທີ່ຂ້າງເສົາ ຕາມທັມນຽມປະເພນີມີນາຍທັບນາຍກອງ
ແລະພົນແກຢູ່ຂ້າງເຈົ້າຊີວິດ ແລະປະຊາຊົນທັງສິ້ນກໍລົ້ນເລີງແລະເປົ່າເຂົາສັດ ພຣະນາງອາທາລີຢາກໍຈີກສລອງພຣະ
ອົງຊົງຮ້ອງວ່າ, "ກະບົດ ກະບົດ"
15 ແລ້ວປະໂຣຫິດເຢຮົວອາດາກໍບັນຊານາຍທັບນາຍກອງທັງປວງຜູ້ທີ່ໄດ້ຕັ້ງໃຫ້ຄວບຄຸມກອງທັບວ່າ, "ຈົ່ງຄຸມພຣະນາງ
ອອກມາລະຫວ່າງແຖວທະຫານ ຜູ້ໃດຕິດຕາມພຣະນາງໄປກໍຈົ່ງປະຫານຊີວິດເສັຽດ້ວຍດາບ" ເພາະປະໂຣຫິດກ່າວ
ວ່າ, "ຢ່າໃຫ້ພຣະນາງຖືກປະຫານໃນພຣະວິຫານຂອງພຣະຜູ້ເປັນເຈົ້າ"
16 ເຂົາທັງຫລາຍຈຶ່ງຈັບພຣະນາງ ແລະພຣະນາງກໍໄປຕາມທາງທີ່ມ້າເຂົ້າພຣະຣາຊວັງ ແລະຖືກປະຫານຊີວິດເສັຽທີ່ນັ້ນ
17 ເຢຮົວອາດາໄດ້ກະທຳຄຳຫມັ້ນສັນຍາລະຫວ່າງພຣະຜູ້ເປັນເຈົ້າແລະເຈົ້າຊີວິດແລະປະຊາຊົນວ່າໃຫ້ເຂົາເປັນປະ
ຊາຊົນຂອງພຣະຜູ້ເປັນເຈົ້າ ແລະລະຫວ່າງເຈົ້າຊີວິດກັບປະຊາຊົນດ້ວຍ
18 ແລ້ວປະຊາຊົນທັງສິ້ນແຫ່ງແຜ່ນດິນກໍເຂົ້າໄປໃນພຣະວິຫານຂອງພຣະບາອານ ແລະພັງວິຫານເສັຽ ເຂົາທຳລາຍ
ແທ່ນບູຊາ ແລະຮູບໂຄຣົບຂອງພຣະບາອານເສັຽເປັນຊິ້ນໆ ແລະໄດ້ປະຫານຊີວິດປະໂຣຫິດມັທຕານຂອງພຣະບາ
ອານເສັຽທີ່ຫນ້າແທ່ນບູຊາ ແລະປະໂຣຫິດກໍວາງຍາມໄວ້ດູແລພຣະວິຫານຂອງພຣະຜູ້ເປັນເຈົ້າ
19 ທ່ານໄດ້ນຳນາຍທັບນາຍກອງຄົນກາຣີ ທະຫານຮັກສາພຣະອົງ ແລະຣາສດອນທັງສິ້ນ ແລະເຂົາທັງຫລາຍໄດ້ນຳເຈົ້າ
ຊີວິດລົງມາຈາກພຣະວິຫານຂອງພຣະຜູ້ເປັນເຈົ້າ ໄປຕາມທາງປະຕູທະຫານຮັກສາພຣະອົງໄປເຖິງພຣະຣາຊວັງ
ແລະພຣະອົງກໍສະເດັດປະທັບເທິງພຣະທີ່ນັ່ງຂອງເຈົ້າຊີວິດ
20 ປະຊາຊົນທຸກຄົນຈຶ່ງລ້າເລີງ ແລະບ້ານເມືອງກໍສງົບງຽບ ແລະອາທາລີຢາຊົງຖືກປະຫານດ້ວຍດາບແລ້ວທີ່ພຣະຣາ
ຊວັງ

**ຣັຊການເຢໂຮອັສກະສັດແຫ່ງຢູດາ**

21 ເມື່ອເຢໂຮອັສໄດ້ເລີ້ມປົກຄອງນັ້ນມີອາຍຸເຈັດປີ

## 12

The Temple Repaired

(2 ຂຄວ 24:1-14)

1 ໃນປີທີເຈັດແຫ່ງຣັຊການເຢຮູ ເຢໂຮອັສໄດ້ເລີ້ມປົກຄອງ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສີ່ສິບປີ ພຣະ
ມານດາຂອງ ພຣະອົງຊົງພຣະນາມວ່າສິບີຢາຊາວເບເອີເຊບາ
2 ເຢໂຮອັສຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕລອດເວລາຂອງພຣະອົງທີ່ປະໂຣຫິດເຢຮົວອາດາ
ໄດ້ສັ່ງສອນແນະນຳພຣະອົງ
3 ແຕ່ເຖິງຢ່າງໃດກໍຕາມສະຖານທີ່ຂາບໄຫວ້ຂອງຄົນຕ່າງຊາດຍັງບໍ່ໄດ້ຖືກທຳລາຍເທື່ອ ປະຊາຊົນຍັງຄົງຖວາຍສັຕບູ
ຊາ ແລະເຜົາເຄື່ອງຫອມໃນບ່ອນນະມັສການສະຖານທີ່ສູງເຫລົ່ານັ້ນ
4 ເຢໂຮອັສກ່າວກັບພວກປະໂຣຫິດວ່າ, "ເງິນອັນເປັນຂອງຖວາຍທີ່ບໍຣິສຸດທັງສິ້ນ ຊຶ່ງເຂົານຳມາໃນພຣະວິຫານຂອງພ
ຣະຜູ້ເປັນ  ເຈົ້າ ເງິນທີ່ເອີ້ນຈາກຣາຍບຸກຄົນ ແລະເງິນຊຶ່ງປະຊາຊົນຖວາຍດ້ວຍຄວາມສມັກໃຈທີ່ຈະນຳມາໄວ້ໃນພ
ຣະວິຫານຂອງພຣະຜູ້ເປັນເຈົ້າ
5 ໃຫ້ປະໂຣຫິດຮັບເງິນນັ້ນຈາກຫມູ່ຄົນທີ່ຮູ້ຈັກກັນ ໃຫ້ເຂົາສ້ອມແຊມພຣະວິຫານບ່ອນທີ່ເຂົາເຫັນວ່າຕ້ອງການສ້ອມ
ແຊມ"
6 ແຕ່ເມື່ອເຖິງປີທີຊາວສາມແຫ່ງຣັຊການເຈົ້າຊີວິດເຢໂຮອັສ ປາກົດວ່າປະໂຣຫິດບໍ່ໄດ້ທຳການສ້ອມແຊມພຣະວິຫານ

7 ເພາະສະນັ້ນເຈົ້າຊີວິດເຢໂຮອັສຈຶ່ງໄດ້ເອີ້ນເຢຮົວອາດາ ແລະປະໂຣຫິດອື່ນໆແລະກ່າວກັບເຂົາວ່າ, “ເປັນຫຍັງທ່ານ
ຈຶ່ງບໍ່ໄດ້ສ້ອມແຊມພຣະວິຫານ ເພາະສະນັ້ນຢ່າເກັບເງິນຈາກຄົນທີ່ທ່ານຮູ້ຈັກອີກຕໍ່ໄປເລີຍ ແຕ່ໃຫ້ສົ່ງໄປເພື່ອ
ການສ້ອມແຊມພຣະວິຫານ”
8 ປະໂຣຫິດຈຶ່ງຕົກລົງວ່າຈະບໍ່ຮັບເງິນຈາກປະຊາຊົນອີກ ແລະເຂົາບໍ່ຕ້ອງທຳການສ້ອມແຊມພຣະວິຫານ
9 ປະໂຣຫິດເຢຮົວອາດານຳຫີບມາອັນນຶ່ງ ເຈາະຮູນຶ່ງທີ່ຝາຫີບນັ້ນ ແລະຕັ້ງໄວ້ທີ່ຂ້າງໆແທ່ນບູຊາດ້ານຂວາ ເມື່ອເຂົ້າ
ໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະປະໂຣຫິດຜູ້ທີ່ເຝົ້າຢູ່ທີ່ປະຕູກໍນຳເງິນຊຶ່ງເຂົານຳມາໃນພຣະວິຫານຂອງ
ພຣະອົງຜູ້ເປັນເຈົ້ານັ້ນໃສ່ໄວ້ໃນຫີບນັ້ນ
10 ເມື່ອເຂົາເຫັນວ່າມີເງິນໃນຫີບນັ້ນຫລາຍແລ້ວ ຣາຊເລຂາ ແລະມະຫາປະໂຣຫິດຈະມານັບເງິນແລະເອົາເງິນທີ່ເຂົາ
ພົບໃນພຣະວິຫານຂອງພຣະຜູ້ເປັນເຈົ້ານັ້ນໃສ່ຖົງມັດໄວ້
11 ແລ້ວເຂົາຈະມອບເງິນທີ່ຊັ່ງອອກແລ້ວນັ້ນໃສ່ມືຂອງຄົນງານຜູ້ດູແລພຣະວິຫານຂອງພຣະຜູ້ເປັນເຈົ້າ ແລ້ວເຂົາຈະ
ຈ່າຍຕໍ່ໃຫ້ແກ່ຊ່າງໄມ້ແລະຊ່າງກໍ່ສ້າງ ຜູ້ທຳງານພຣະວິຫານຂອງພຣະຜູ້ເປັນເຈົ້າ
12 ແລະໃຫ້ແກ່ຊ່າງກໍ່ ແລະຊ່າງສະກັດຫີນ ທັງຈ່າຍຊື້ໄມ້ ແລະຫີນສະກັດ ທີ່ໃຊ້ໃນການສ້ອມແຊມພຣະວິຫານຂອງພ
ຣະຜູ້ເປັນເຈົ້າ ແລະເພື່ອຄ່າໃຊ້ຈ່າຍໃດໆໃນງານສ້ອມແຊມພຣະວິຫານຂອງພຣະຜູ້ເປັນເຈົ້າ
13 ແຕ່ວ່າເງິນທີ່ນຳມາຖວາຍໃນພຣະວິຫານຂອງພຣະຜູ້ເປັນເຈົ້າບໍ່ໄດ້ນຳໄປໃຊ້ໃນການທຳຖ້ວຍເງິນ ມີດຕັດ ໃສ້ຕະ
ກຽງ ຊາມ ແກ ຫລືພາຊນະທອງຄຳໃດໆ ຫລືພາຊນະເງິນ
14 ເພາະເງິນນັ້ນເຂົາໃຫ້ແກ່ຄົນງານຊຶ່ງທຳງານສ້ອງແຊມພຣະວິຫານຂອງພຣະຜູ້ເປັນເຈົ້າ
15 ແລະເຂົາບໍ່ໄດ້ຂໍບັນຊີຈາກຄົນທີ່ເຂົາມອບເງິນໃສ່ໃນມືໃຫ້ເອົາໄປຈ່າຍແກ່ຄົນງານ ເພາະວ່າເຂົາປະຕິບັດງານດ້ວຍ
ຄວາມສັດຊື່
16 ເງິນທີ່ໄດ້ຈາກການໄຖ່ຄວາມຜິດ ແລະເງິນທີ່ໄດ້ຈາກການໄຖ່ບາບ ບໍ່ໄດ້ນຳມາໄວ້ໃນພຣະວິຫານຂອງພຣະຜູ້ເປັນ
ເຈົ້າ ເງິນນັ້ນເປັນຂອງປະໂຣຫິດ

Hazael Threatens Jerusalem

17 ແລ້ວຄາວນັ້ນຮາຊາເອນເຈົ້າຊີວິດແຫ່ງຊີເຣັຽໄດ້ຍົກຂຶ້ນໄປສູ້ຮົບກັບເມືອງກາດແລະຍຶດເມືອງນັ້ນໄດ້ ແຕ່ເມື່ອຮາຊາ
ເອນມຸ່ງຫນ້າຈະໄປຕີກຸງເຢຣູຊາເລັມ
18 ເຢໂຮອັສເຈົ້າຊີວິດແຫ່ງຢູດາ ຊົງນຳເອົາຂອງສິ່ງບູຊາທັງຫມົດທີ່ເຢຮົວຊາຟັດ ແລະເຢໂຮຣາມ ແລະອາຊາກີຢາບັນ
ພະບຸຣຸດຂອງພຣະອົງຖວາຍໄວ້ນັ້ນ ແລະຂອງສິ່ງບູຊາຂອງພຣະອົງເອງ ແລະທັງຄຳທັງຫມົດທີ່ພົບໃນຄັງພຣະວິຫານ
ຂອງພຣະຜູ້ເປັນເຈົ້າ ແລະຂອງສຳນັກພຣະຣາຊວັງ ແລະສິ່ງສິ່ງເຫລົ່ານີ້ເປັນຂອງຂວັນຮາຊາເອນເຈົ້າຊີວິດແຫ່ງຊີເຣັຽ
ແລ້ວຮາຊາເອນກໍຖອຍທັບຈາກກຸງເຢຣູຊາເລັມ

**ມໍຣະນະກັມຂອງໂຢອັສ**

Death of Joash

(2 ຂຄວ 24:23-27)

19 ສ່ວນພຣະຣາຊກິດນອກນັ້ນຂອງໂຢອັສ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະ
ດານແຫ່ງພຣະຣາຊາປະເທດຢູດາຫລື
20 ຂ້າຣາຊການຂອງພຣະອົງລຸກຂຶ້ນກະທຳການທໍຣະຍົດແລະປະຫານໂຢອັສເສັຽໃນວັງມິນໂລ ຕາມທາງທີ່ລົງໄປ
ຍັງຊິນລາ
21 ຄືໂຢຊາກາບຸດຊີເມອາທ ແລະເຢໂຮຊາບັດ ບຸດໂຊເມີ ຂ້າຣາຊການຂອງພຣະອົງໄດ້ປະຫານພຣະອົງ ພຣະອົງຈຶ່ງ
ສິ້ນພຣະຊົນ ແລະເຂົາຝັງໄວ້ກັບບັນພະບຸຣຸດຂອງພຣະອົງໃນນະຄອນດາວິດ ແລະອາມາຊີຢາໂອຣົດຂອງພຣະອົງ
ໄດ້ຂຶ້ນຄອງແທນ

## 13 ຣັຊການເຢໂຮອາຮັສ

Jehoahaz Reigns over Israel

1 ໃນປີທີຊາວສາມແຫ່ງຣັຊການໂຢອັສຣາຊໂອຣົດຂອງອາຮັສຊີຢາເຈົ້າຊີວິດແຫ່ງຢູດາ ເຢໂຮອາຮັສໂອຣົດຂອງເຢຮູ
ໄດ້ເລີ້ມປົກຄອງເຫນືອອິສຣາເອນໃນຊາມາເຣັຽ ແລະຊົງປົກຄອງຢູ່ສິບເຈັດປີ
2 ພຣະອົງຊົງກະທຳສິ່ງທີ່ຊົ່ວຊ້າໃນສາຍພຣະເນດພຣະຜູ້ເປັນເຈົ້າ ແລະກະທຳຕາມບາບຂອງເຢໂຣໂບອາມບຸດເນບັດ
ຊຶ່ງພຣະອົງໄດ້ຊົງກະທຳໃຫ້ອິສຣາເອນເຮັດນຳດ້ວຍ ພຣະອົງບໍ່ໄດ້ພາກຈາກສິ່ງເຫລົ່ານັ້ນ
3 ແລະພຣະພິໂຣດຂອງພຣະຜູ້ເປັນເຈົ້າກໍພຸ່ງຂຶ້ນຕໍ່ອິສຣາເອນ ແລະພຣະອົງຊົງມອບເຂົາທັງຫລາຍໄວ້ໃນມືຂອງຮາຊາ
ເອນ ແລະໃນມືຂອງເບນຮາດາດໂອຣົດຂອງຮາຊາເອນເລື້ອຍໆ
4 ແລ້ວເຢໂຮອາຮັສໄດ້ອ້ອນວອນພຣະຜູ້ເປັນເຈົ້າ ແລະພຣະຜູ້ເປັນເຈົ້າຊົງຟັງທ່ານ ເພາະພຣະອົງຊົງເຫັນການບີບບັງ
ຄັບອິສຣາເອນ ຄືທີ່ເຈົ້າຊີວິດແຫ່ງຊີເຣັຽບີບບັງຄັບເຂົາຢ່າງໃດ
5 (ເຫດສັນນັ້ນ ພຣະຜູ້ເປັນເຈົ້າຊົງປະທານຜູ້ຊ່ອຍຜູ້ນຶ່ງແກ່ອິສຣາເອນ ເຂົາຈຶ່ງລອດພົ້ນຈາກມືຂອງຄົນຊີເຣັຽ ແລະປະ
ຊາຊົນອິສ    ຣາເອນກໍອາໄສຢູ່ໃນບ້ານເຂົາຢ່າງເດີມ
6 ແຕ່ເຂົາກໍບໍ່ໄດ້ພາກຈາກບາບຂອງຣາຊວົງເຢໂຣໂບອາມ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນເຮັດເຫມືອນກັນ ແຕ່
ຊົງດຳເນີນໃນບາບນັ້ນ ແລະອາເຊຣາກໍຍັງຄົງຢູ່ໃນຊາມາເຣັຽດ້ວຍ)
7 ເພາະບໍ່ໄດ້ເຫລືອກອງທັບໄວ້ໃຫ້ເຢໂຮອາຮັສເກີນກວ່າທະຫານມ້າຫ້າສິບຄົນແລະຣົດຮົບສິບຄັນແລະທະຫານຣາບ
ນຶ່ງຫມື່ນຄົນເພາະພຣະຣາຊາແຫ່ງຊີເຣັຽໄດ້ທຳລາຍເຂົາທັງຫລາຍຖິ້ມດັ່ງຢຽບຂີ້ຝຸ່ນດິນ
8 ສ່ວນພຣະຣາຊກິດນອກນັ້ນຂອງເຢໂຮອາຮັສ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳແລະຍຸທພະລັງຂອງພຣະອົງບໍ່ໄດ້
ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດອິສຣາເອນຫລື
9 ແລະເຢໂຮອາຮັສຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງໄວ້ໃນຊາມາເຣັຽ ແລະໂຢອັສໂອຣົດ
ຂອງພຣະອົງຂຶ້ນຄອງແທນພຣະອົງ

### ຣັຊການເຢໂຮອັສ

Jehoash Reigns over Israel

10 ໃນປີທີສາມສິບເຈັດແຫ່ງຣັຊການໂຢອັສພຣະຣາຊາແຫ່ງຢູດາ ເຢໂຮອັສໂອຣົດເຢໂຮອາຮັສໄດ້ເລີ້ມປົກຄອງເຫນືອອິ
ສຣາເອນໃນຊາມາເຣັຽ ແລະພຣະອົງຊົງປົກຄອງສິບຫົກປີ
11 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະອົງບໍ່ໄດ້ພາກຈາກບັນດາບາບຂອງເຢໂຣໂບ
ອາມບຸດເນບັດ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນທຳດ້ວຍ ແຕ່ພຣະອົງຊົງດຳເນີນໃນບາບນັ້ນ
12 ສ່ວນພຣະຣາຊກິດນອກນັ້ນຂອງໂຢອັສແລະບັນດາສິ່ງຊຶ່ງພຣະອົງຊົງກະທຳແລະຍຸດພະລັງຊຶ່ງພຣະອົງຊົງສູ້ຮົບກັບ
ອາມາຊີຢາເຈົ້າຊີວິດແຫ່ງຢູດາບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດອິສຣາເອນຫລື
13 ໂຢອັສຈຶ່ງຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຢໂຣໂບອາມຊົງປະທັບເທິງທີ່ນັ່ງຂອງພຣະອົງ ແລະ
ເຂົາຝັງພຣະສົບໂຢອັສໄວ້ໃນຊາມາເຣັຽກັບພຣະຣາຊາແຫ່ງອິສຣາເອນ

### ເອລີຊາສິ້ນຊີວິດ

Death of Elisha

14 ເມື່ອເອລີຊາໄດ້ລົ້ມເຈັບລົງດ້ວຍພຍາດຮ້າຍແຮງ ແລະໃກ້ຈະສິ້ນລົມຫາຍໃຈນັ້ນ ໂຢອັສເຈົ້າຊີວິດອິສຣາເອນໄດ້ສະ
ເດັດມາຢ້ຽມຢາມທ່ານພຣະອົງຊົງຮ້ອງໄຫ້ທັງເວົ້າວ່າ, “ພໍ່ເອີຍ, ພໍ່ຂອງຂ້ອຍເອີຍ ທ່ານເປັນຜູ້ປ້ອງກັນຜູ້ຍິ່ງໃຫຍ່ແຫ່ງ
ອິສຣາເອນ”
15 ເອລີຊາຈຶ່ງທູນພຣະອົງວ່າ, “ຂໍຊົງເອົາຄັນທະນູແລະລູກທະນູມາ” ພຣະອົງຈຶ່ງຊົງເອົາຄັນທະນູແລະລູກທະນູມາ

16 ແລ້ວທ່ານທູນເຈົ້າຊີວິດແຫ່ງອິສຣາເອນວ່າ, "ຂໍຊົງຈັບທະນູ" ແລະພຣະອົງຊົງຈັບມາແລະເອລີຊາເອົາມືຂອງຕົນວາງ
ເທິງພຣະຫັດຂອງເຈົ້າຊີວິດ
17 ແລະທ່ານທູນວ່າ, "ຂໍຊົງເປີດປ່ອງຢ້ຽມດ້ານຕາເວັນອອກ" ແລະພຣະອົງຊົງເປີດແລ້ວເອລີຊາທູນວ່າ, "ຈົ່ງຍິງຫນ້າທະ
ນູ" ແລະ  ພຣະອົງກໍຊົງຍິງ ແລະທ່ານທູນວ່າ, "ລູກທະນູໄຊຊະນະຂອງພຣະຜູ້ເປັນເຈົ້າ ລູກທະນູໄຊຊະນະເຫນືອຊີ
ເຣັຽ ເພາະພຣະອົງຈະຊົງຕໍ່ສູ້ກັບຄົນຊີເຣັຽທີ່ເມືອງອາເຟກ ຈົນກວ່າພຣະອົງຈະຊົງກະທຳໃຫ້ເຂົາສິ້ນໄປ"
18 ແລະທ່ານທູນວ່າ, "ຂໍຊົງຈັບລູກທະນູ" ແລະພຣະອົງຊົງຈັບມັນ ແລະທ່ານທູນພຣະຣາຊາແຫ່ງອິສຣາເອນວ່າ, "ເອົາ
ລູກທະນູຟາດລົງດິນ" ແລະພຣະອົງຊົງຕີສາມຄັ້ງແລ້ວຊົງຢຸດເສັຽ
19 ແລ້ວຄົນແຫ່ງພຣະເຈົ້າກໍໃຈຮ້າຍພຣະອົງ ແລະທູນວ່າ, "ພຣະອົງຄວນຟາດມັນລົງຈັກຫ້າຫລືຫົກຄັ້ງ ເພື່ອວ່າຈະຕີຊະ
ນະພວກຊີເຣັຽຢ່າງສິ້ນເຊີງ ສະນັ້ນພຣະອົງຈະຕີຊະນະພວກຊີເຣັຽພຽງສາມເທື່ອເທົ່ານັ້ນ"
20 ເອລີຊາໄດ້ສິ້ນຊີວິດໄປ ເຂົາກໍທຳພິທີປົງສົບທ່ານຢ່າງສົມກຽດ ໃນຄາວນັ້ນພວກໂມອາບໄດ້ເຂົ້າປຸ້ນສະດົມແຜ່ນດິນ
ນັ້ນທຸກໆປີ
21 ມີຄັ້ງນຶ່ງ ຄົນກຸ່ມນຶ່ງໄດ້ຫາມສົບຄົນຕາຍໄປຝັງ ກໍຫລຽວເຫັນໂຈນຫມູ່ນຶ່ງ ເຂົາຈຶ່ງໂຍນສົບຊາຍຄົນນັ້ນລົງໄປໃນອຸບ
ໂມງຂອງເອລີຊາ ແລ້ວກໍພາກັນແລ່ນຫນີເອົາຕົວລອດ  ເມື່ອຊາກສົບຊາຍຄົນນັ້ນໄດ້ຖືກກັບກະດູກຂອງເອລີຊາ ເຂົາ
ກໍຄືນຊີວິດລຸກຢືນຂຶ້ນ

Israel recaptures Cities from Aram

22 ຝ່າຍຮາຊາເອນເຈົ້າຊີວິດແຫ່ງຊີເຣັຽໄດ້ບີບບັງຄັບຄົນອິສຣາເອນຢູ່ຕລອດຣັຊການຂອງເຢໂຮອາຮັສ
23 ແຕ່ພຣະຜູ້ເປັນເຈົ້າຊົງພຣະກະຣຸນາຕໍ່ເຂົາ ແລະຊົງເມດຕາເຂົາ ແລະພຣະອົງຊົງຫັນມາທາງເຂົາ ເພາະຄຳຫມັ້ນສັນ
ຍາຂອງພຣະອົງກັບອັບຣາຮາມ ອີຊາກ ແລະຢາໂຄບ ແລະຈະບໍ່ຊົງທຳລາຍເຂົາ ຫລືປະລະຖິ້ມເຂົາເສັຽໃຫ້ພົ້ນພຣະ
ພັກຈົນບັດນີ້
24 ເມື່ອຮາຊາເອນເຈົ້າຊີວິດແຫ່ງຊີເຣັຽສິ້ນພຣະຊົນ ເບນຮາດາດ ໂອຣົດຂອງພຣະອົງໄດ້ຂຶ້ນຄອງແທນພຣະອົງ
25 ແລ້ວໂຢອັສໂອຣົດຂອງເຢໂຮອາຮັສໄດ້ຍຶດບັນດາຫົວເມືອງຈາກເບນຮາດາດບຸດຮາຊາເອນກັບຄືນມາ ເປັນຫົວ
ເມືອງທີ່ພຣະອົງຕີໄປໄດ້ ຈົນເຢໂຮອາຮັສບິດາຂອງໂຢອັສໄດ້ຣົບຊະນະພຣະອົງສາມຄັ້ງແລະໄດ້ຫົວເມືອງອິສຣາ
ເອນກັບຄືນມາ

## 14 ຣັຊການອາມາຊີຢາ

Ameziah Reigns over Judah

(2 ຂຄວ 25:1-26:2)

1 ໃນປີທີສອງແຫ່ງຣັຊການໂຢອັສ ໂອຣົດຂອງໂຢອາຮັສກະສັດແຫ່ງອິສຣາເອນ ອາມາຊີຢາໂອຣົດຂອງໂຢອັສເຈົ້າຊີ
ວິດແຫ່ງຢູດາ ໄດ້ເລີ້ມປົກຄອງ
2 ເມື່ອພຣະອົງຊົງເລີ້ມປົກຄອງນັ້ນ ພຣະອົງມີອາຍຸຊາວຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມຊາວເກົ້າປີ ພ
ຣະມານຂອງ ພຣະອົງມີພຣະນາມວ່າ ເຢໂຮອັດດິນຊາວເຢຣູຊາເລັມ
3 ພຣະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ແຕ່ຍັງບໍ່ເຫມືອນດາວິດບັນພະບຸຣຸດຂອງພຣະອົງ ພ
ຣະອົງຊົງກະທຳຕາມທຸກສິ່ງຊຶ່ງໂຢອັສບິດາຂອງພຣະອົງໄດ້ຊົງກະທຳ
4 ແຕ່ວ່າບ່ອນນະມັສການສະຖານທີ່ສູງນັ້ນຍັງບໍ່ໄດ້ຊົງຮື້ເສັຽ ປະຊາຊົນຍັງຄົງຖວາຍສັຕບູຊາແລະເຜົາເຄື່ອງຫອມເທິງ
ບ່ອນນະມັສການສະຖານທີ່ສູງເຫລົ່ານັ້ນ
5 ແລະຕໍ່ມາເມື່ອຣາຊອານາຈັກລໍຢູ່ໃນພຣະຫັດຂອງພຣະອົງຢ່າງຫມັ້ນຄົງແລ້ວ ພຣະອົງກໍຊົງປະຫານຊີວິດຂ້າຣາຊ
ການຂອງພຣະອົງຜູ້ທີ່ຂ້າບິດາຂອງພຣະອົງເສັຽ

6 ແຕ່ພຣະອົງບໍ່ໄດ້ຊົງປະຫານຊີວິດລູກຫລານຂອງຜູ້ທີ່ຂ້ານັ້ນ ຕາມຊຶ່ງໄດ້ບັນທຶກໄວ້ໃນຫນັງສືທັມບັນຍັດຂອງໂມເຊ
ທີ່ພຣະຜູ້ເປັນເຈົ້າຊົງສັ່ງວ່າ, "ຢ່າປະຫານຊີວິດບິດາເພາະການກະທຳຂອງລູກຫລານ ຫລືຢ່າປະຫານລູກຫລານ
ເພາະການກະທຳຂອງບິດາ ແຕ່ທຸກຄົນຕ້ອງຕາຍເພາະບາບຂອງຕົນເອງ"
7 ພຣະອົງຊົງປະຫານຊີວິດຄົນເອໂດມນຶ່ງຫມື່ນຄົນໃນພູເຂົາເກືອ ແລະຍຶດເມືອງເຊລາດ້ວຍການສົງຄາມ ແລະເອີ້ນ
ເມືອງນັ້ນວ່າ ໂຢກເທເອນ ຊຶ່ງເປັນຊື່ມາເຖິງທຸກວັນນີ້
8 ແລະອາມາຊີຢາຊົງໃຊ້ຜູ້ສົ່ງຂ່າວໄປຫາ ເຢໂຮອັສໂອຣົດຂອງເຢໂຮອາຮັສ ໂອຣົດເຢຮູ ເຈົ້າຊີວິດແຫ່ງອິສຣາເອນທູນ
ວ່າ, "ມາເຖີດ ຂໍໃຫ້ເຮົາມາປະເຊີນຫນ້າກັນ"
9 ແລະເຢໂຮອັສເຈົ້າຊີວິດແຫ່ງອິສຣາເອນຊົງສົ່ງຂ່າວໄປຍັງອາມາຊີຢາເຈົ້າຊີວິດແຫ່ງຢູດາວ່າ, "ຍັງມີຄັ້ງນຶ່ງພຸ່ມຫນາມ
ທີ່ເລບານອນສົ່ງຂ່າວໄປຫາຕົ້ນສົນເທິງພູເຂົາເລບານອນວ່າ "ຈົ່ງຍົກບຸດຍິງຂອງເຈົ້າໃຫ້ເປັນພັຣຍາບຸດຊາຍຂອງ
ເຮົາ" ແລະສັດປ່າທີ່ງໂຕນຶ່ງແຫ່ງເລບານອນຜ່ານມາ ແລະຢຽບພຸ່ມຫນາມນັ້ນເສັຽ
10 ຈິງຢູ່ ທ່ານໄດ້ໂຈມຕີເອໂດມ ແລະພຣະທັຍຂອງທ່ານກໍທຳໃຫ້ທ່ານອວດໂຕຂຶ້ນ ຈົ່ງພໍໃຈໃນສັກສີຂອງທ່ານເຖີດ
ແລະຢູ່ກັບບ້ານເພາະເຫດໃດທ່ານຈຶ່ງເຮົ້າໃຈຕົນເອງໃຫ້ຕໍ່ສູ້ແລະຮັບອັນຕະຣາຍ ອັນຈະໃຫ້ທ່ານລົ້ມລົງ ທັງທ່ານ
ແລະຢູດາດ້ວຍ"
11 ແຕ່ອາມາຊີຢາບໍ່ໄດ້ຊົງຟັງ ເຢໂຮອັສເຈົ້າຊີວິດແຫ່ງອິສຣາເອນຈຶ່ງຂຶ້ນໄປ ແລະພຣະອົງກັບອາມາຊີຢາເຈົ້າຊີວິດແຫ່ງ
ຢູດາກໍປະເຊີນຫນ້າກັນທີ່ເບັດເຊເມສຊຶ່ງເປັນຂອງຢູດາ
12 ຢູດາກໍຜ່າຍແພ້ອິສຣາເອນ ແລະທຸກຄົນກໍຫນີກັບໄປບ້ານຂອງຕົນ
13 ແລະເຢໂຮອັສເຈົ້າຊີວິດແຫ່ງອິສຣາເອນກໍຈັບອາມາຊີຢາເຈົ້າຊີວິດແຫ່ງຢູດາໂອຣົດຂອງເຢໂຮອັສ ໂອຣົດຂອງອາຮາ
ຊີຢາທີ່ເມືອງເບັດເຊເມສແລະໄດ້ສະເດັດມາຍັງເຢຣູຊາເລັມ ແລະໄດ້ທຳລາຍກຳແພງເຢຣູຊາເລັມລົງເສັຽສີ່ຮ້ອຍ
ສອກ ຕັ້ງແຕ່ປະຕູເອຟຣາອິມຈົນເຖິງປະຕູແຈຂອງກຳແພງ
14 ພຣະອົງຊົງຍຶດທອງຄຳ ແລະເງິນທັງຫມົດ ແລະເຄື່ອງໃຊ້ທັງຫມົດທີ່ພົບໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະໃນ
ຄັງຂອງສຳນັກພຣະຣາຊວັງພ້ອມກັບຄົນປະກັນ ແລະພຣະອົງກັບໄປຍັງຊາມາເຣັຽ
15 ສ່ວນພຣະຣາຊກິດນອກນັ້ນຂອງເຢໂຮອັສຊຶ່ງພຣະອົງໄດ້ຊົງກະທຳ ທັງຍຸດພະລັງຂອງພຣະອົງ ແລະທີ່ພຣະອົງຊົງສູ້
ຮົບກັບອາມາຊີຢາ ເຈົ້າຊີວິດແຫ່ງຢູດາຢ່າງໃດນັ້ນ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດ
ອິສຣາເອນຫລື
16 ແລະເຢໂຮອັສຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງໄວ້ໃນຊາມາເຣັຽກັບບັນດາພຣະຣາຊາ
ແຫ່ງອິສຣາເອນ ແລະເຢໂຣໂບອາມໂອຣົດຂອງພຣະອົງໄດ້ປົກຄອງແທນພຣະອົງ
17 ອາມາຊີຢາໂອຣົດຂອງເຢໂຮອັສເຈົ້າຊີວິດແຫ່ງຢູດາຊົງພຣະຊົນຢູ່ສິບຫ້າປີ ຫລັງຈາກມໍຣະນະກັມຂອງເຢໂຮອັສໂອ
ຣົດຂອງເຢໂຮອາຮັສເຈົ້າຊີວິດແຫ່ງອິສຣາເອນ
18 ສ່ວນພຣະຣາຊກິຈນອກນັ້ນຂອງອາມາຊີຢາ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດຢູດາ
ຫລື?
19 ແລະເຂົາໄດ້ຮ່ວມກັນກະບົດຕໍ່ພຣະອົງໃນເຢຣູຊາເລັມ ແລະພຣະອົງຊົງຫນີໄປຍັງລາຄິສ ແຕ່ເຂົາໃຊ້ຄົນໄປຕາມພ
ຣະອົງທີ່ລາຄິສ ແລະປະຫານຊີວິດພຣະອົງເສັຽທີ່ນັ້ນ
20 ແລະເຂົານຳພຣະສົບບັນທຸກມ້າກັບມາແລະຝັງໄວ້ໃນເຢຣູຊາເລັມຢູ່ກັບບັນພະບຸຣຸດຂອງພຣະອົງໃນນະຄອນດາວິດ
21 ແລະປະຊາຊົນທັງສິ້ນແຫ່ງຢູດາກໍຕັ້ງອາຊາຣີຢາ ຜູ້ຊຶ່ງມີອາຍຸສິບຫົກປີ ໃຫ້ເປັນກະສັດແທນອາມາຊີຢາພຣະຣາຊບິ
ດາຂອງພຣະອົງ
22 ພຣະອົງຊົງສ້າງເມືອງເອລັທ ແລະໃຫ້ກັບຂຶ້ນແກ່ຢູດາ ຫລັງຈາກທີ່ເຈົ້າຊີວິດຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພ
ຣະອົງ

**ຣັຊການເຢໂຣໂບອາມ 2**

Jeroboam II Reigns over Israel

23 ໃນປີທີສິບຫ້າແຫ່ງຣັຊການອາມາຊີຢາໂອຣົດຂອງເຢໂຮອັສເຈົ້າຊີວິດແຫ່ງອິສຣາເອນໄດ້ເລີ້ມປົກຄອງໃນຊາມາເຣັຽ
ແລະຊົງປົກຄອງຢູ່ສີ່ສິບເອັດປີ
24 ແລະພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະອົງບໍ່ໄດ້ຊົງພາກຈາກບາບທັງສິ້ນຂອງ
ເຢໂຣໂບອາມບຸດເນບັດ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນທຳດ້ວຍ
25 ພຣະອົງຊົງຕີເອົາດິນແດນອິສຣາເອນຄືນມາຕັ້ງແຕ່ທາງເຂົ້າເມືອງຮາມັທ ໄກໄປຈົນເຖິງທະເລແຫ່ງອາຣາບາຕາມພ
ຣະຄຳຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ຊຶ່ງພຣະອົງກ່າວໂດຍຜູ້ຮັບໃຊ້ຂອງພຣະອົງຄື ໂຢນາ ຜູ້ເປັນ
ບຸດອາມິດຕັຍຜູ້ປະກາດພຣະທັມຜູ້ມາຈາກກັດເຮເຟີ
26 ເພາະພຣະຜູ້ເປັນເຈົ້າທອດພຣະເນດເຫັນວ່າ ຄວາມທຸກໃຈຂອງອິສຣາເອນນັ້ນຂົມຂື່ນເພາະບໍ່ມີຜູ້ໃດເຫລືອ ບໍ່ວ່າ
ທາດຫລືອິສຣະ ແລະບໍ່ມີຜູ້ໃດຊ່ອຍອິສຣາເອນ
27 ພຣະຜູ້ເປັນເຈົ້າບໍ່ໄດ້ກ່າວວ່າ ຈະຊົງລົບນາມອິສຣາເອນເສັຽຈາກໃຕ້ຟ້າສວັນ ແຕ່ພຣະອົງຊົງຊ່ອຍເຂົາໂດຍພຣະຫັດ
ຂອງເຢໂຣໂບອາມໂອຣົດຂອງເຢໂຮອັສ
28 ສ່ວນພຣະຣາຊກິດນອກນັ້ນຂອງເຢໂຣໂບອາມ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ແລະຍຸດພະລັງຂອງພຣະອົງ ພ
ຣະອົງສູ້ຮົບຢ່າງໃດແລະເຣື່ອງທີ່ພຣະອົງຊົງຕີເອົາດາມັສກັສ ແລະຮາບັທຄືນແກ່ອິສຣາເອນ ຊຶ່ງໄດ້ເຄີຍເປັນຂອງຢູ
ດາ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດອິສຣາເອນຫລື
29 ແລະເຢໂຣໂບອາມຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ຄືບັນດາພຣະຣາຊາແຫ່ງອິສຣາເອນ ແລະເຊຄາ
ຣິຢາໂອຣົດຂອງພຣະອົງຂຶ້ນຄອງແທນພຣະອົງ

## 15 ຣັຊການອາຊາຣິຢາ

Azariah Reigns over Judah

(2 ຂຄວ 26:3-23)

1 ໃນປີທີ່ຊາວເຈັດແຫ່ງຣັຊການເຢໂຣໂບອາມເຈົ້າຊີວິດແຫ່ງອິສຣາເອນ ອາຊາຣິຢາໂອຣົດຂອງອາມາຊີຢາເຈົ້າຊີວິດ
ແຫ່ງຢູດາໄດ້ເລີ້ມປົກຄອງ
2 ເມື່ອພຣະອົງຊົງເລີ້ມປົກຄອງນັ້ນ ພຣະອົງຊົງມີອາຍຸສິບຫົກປີ ແລະພຣະອົງຊົງປົກຄອງຢູ່ໃນກຸງເຢຣູຊາເລັມຫ້າສິບ
ສອງປີ ພຣະມານດາມີພຣະນາມວ່າເຢໂກລີຢາຊາວເຢຣູຊາເລັມ
3 ພຣະອົງໄດ້ຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມທຸກຢ່າງທີ່ອາມາຊີຢາພຣະບິດາຂອງພຣະອົງ
ຊົງກະທຳ
4 ແຕ່ບ່ອນນະມັສການສະຖານທີ່ສູງກໍຍັງບໍ່ໄດ້ຖືກກຳຈັດເສັຽ ປະຊາຊົນຍັງຖວາຍສັຕບູຊາ ແລະເຜົາເຄື່ອງຫອມເທິງ
ບ່ອນນະມັສການສະຖານທີ່ສູງເຫລົ່ານັ້ນ
5 ແລະພຣະອົງຊົງລົງໂທດເຈົ້າຊີວິດ ເຈົ້າຊີວິດຈຶ່ງຊົງເປັນໂຣກເຮື້ອນຈົນເຖິງວັນສິ້ນພຣະຊົນ ແລະຊົງປະທັບໃນວັງຕ່າງ
ຫາກ ແລະໂຢທາມໂອຣົດຂອງເຈົ້າຊີວິດຄວບຄຸມສຳນັກພຣະຣາຊວັງ ແລະຊົງປົກຄອງຣາສດອນແຫ່ງແຜ່ນດິນ
6 ສ່ວນພຣະຣາຊກິດນອກນັ້ນຂອງອາຊາຣິຢາ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາ
ວະດານແຫ່ງພຣະຣາຊາປະເທດຢູດາຫລື
7 ແລະອາຊາຣິຢາຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງໄວ້ກັບບັນພະບຸຣຸດຂອງພຣະອົງໃນນະ
ຄອນດາວິດ ແລະໂຢທາມໂອຣົດຂອງພຣະອົງຂຶ້ນຄອງແທນພຣະອົງ

**ຣັຊການເຊຄາຣິຢາ**

Zechariah reigns over Israel

8 ໃນປີທີສາມສິບແປດແຫ່ງຣັຊການອາຊາຣີຢາເຈົ້າຊີວິດແຫ່ງຢູດາ ເຊຄາຣີຢາໂອຣົດຂອງເຢໂຣໂບອາມຂຶ້ນຄອງເໜ
ືອອິສຣາເອນໃນຊາມາເຣັຽຫົກເດືອນ
9 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ດັ່ງທີ່ບັນພະບຸຣຸດຂອງພຣະອົງຊົງກະທຳພຣະອົງບໍ່
ໄດ້ຊົງພາກຈາກບາບຂອງເຢໂຣໂບອາມບຸດເນບັດ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນທຳດ້ວຍ
10 ຊັນລູມບຸດຢາເບສຮ່ວມກັນກະບົດຕໍ່ພຣະອົງ ແລະລົ້ມພຣະອົງເສັຽຕໍ່ຫນ້າປະຊາຊົນແລະປະຫານພຣະອົງເສັຽ ແລະ
ຂຶ້ນຄອງແທນພຣະອົງ
11 ສ່ວນພຣະຣາຊກິດນອກນັ້ນຂອງເຊຄາຣີຢາ ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດອິສຣາ
ເອນ
12 (ເຫດການນີ້ເປັນໄປຕາມພຣະດຳຣັດທີ່ພຣະຜູ້ເປັນເຈົ້າກ່າວແກ່ເຢຮູວ່າ, “ບຸດຊາຍຂອງເຈົ້າຈະນັ່ງເທິງພຣະທີ່ນັ່ງຂອງ
ອິສຣາເອນເຖິງຊົ່ວຊີວິດທີສີ່” ແລະເປັນໄປຢ່າງນັ້ນແຫລະ)

**ຣັຊການຊັນລູມ**

Shallum reigns over Israel

13 ຊັນລູມບຸດຢາເບສໄດ້ເລີ້ມປົກຄອງໃນປີທີສາມສິບເກົ້າແຫ່ງຣັຊການອຸສຊີຢາເຈົ້າຊີວິດຂອງຢູດາ ແລະທ່ານຄອງໃນ
ຊາມາເຣັຽລະຫວ່າງເວລານຶ່ງເດືອນ
14 ແລ້ວເມນາເຮມບຸດກາດີໄດ້ຂຶ້ນມາຈາກເມືອງຕີຣ໌ຊາ ແລະມາຍັງຊາມາເຣັຽ ແລະທ່ານກໍລົ້ມຊັນລູມບຸດຢາເບສເສັຽທີ່
ໃນຊາມາເຣັຽແລະປະຫານຊີວິດທ່ານເສັຽ ແລະໄດ້ຂຶ້ນປົກຄອງແທນທ່ານ
15 ສ່ວນພຣະຣາຊກິດນອກນັ້ນຂອງຊັນລູມແລະການຮ່ວມກັນຄິດກະບົດທີ່ທ່ານໄດ້ກະທຳ ໄດ້ບັນທຶກໄວ້ໃນຫນັງສືພົງ
ສາວະດານແຫ່ງພຣະຣາຊາປະເທດອິສຣາເອນ
16 ໃນຄາວນັ້ນເມນາເຮມປຸ້ນຕິຟສາ ແລະບັນດາຜູ້ທີ່ຢູ່ໃນເມືອງນັ້ນ ແລະດິນແດນຂອງເມືອງນັ້ນຕັ້ງແຕ່ຕີຣ໌ຊາໄປ ເພາະ
ເຂົາບໍ່ໄດ້ເປີດໃຫ້ແກ່ທ່ານ ທ່ານຈຶ່ງປຸ້ນເມືອງນັ້ນ ແລະທ່ານໄດ້ຜ່າທ້ອງຍິງຖືພາໃນເມືອງນັ້ນເສັຽທຸກຄົນ

**ຣັຊການເມນາເຮມ**

menahem reigns over Israel

17 ໃນປີທີສາມສິບເກົ້າແຫ່ງຣັຊການອາຊາຣີຢາເຈົ້າຊີວິດແຫ່ງຢູດາ ເມນາເຮມບຸດກາດີໄດ້ເລີ້ມປົກຄອງເຫນືອອິສຣາ
ເອນ ແລະພຣະອົງຊົງປົກຄອງໃນຊາມາເຣັຽສິບປີ
18 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະອົງບໍ່ໄດ້ພາກຈາກບາບຂອງເຢໂຣໂບອາມ
ບຸດເນບັດ ຕລອດຣັຊການຂອງພຣະອົງ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນທຳດ້ວຍ
19 ປູນເຈົ້າຊີວິດແຫ່ງອັສຊີເຣັຽໄດ້ຍົກຂຶ້ນມາຕໍ່ສູ້ແຜ່ນດິນນັ້ນ ແລະເມນາເຮມໄດ້ຖວາຍເງິນນຶ່ງພັນຕະລັນແກ່ປູນ ເພື່ອ
ຈະໃຫ້ພຣະອົງນັ້ນຊ່ອຍໃຫ້ທ່ານຍຶດພຣະຣາຊອານາຈັກໄວ້ໄດ້
20 ເມນາເຮມໄດ້ເລັ່ງເອົາເງິນນັ້ນມາຈາກອິສຣາເອນຄືຈາກຄົນຮັ່ງມີທຸກຄົນ ເງິນຄົນລະຫ້າສິບເຊເກລ ເພື່ອຖວາຍແກ່
ເຈົ້າຊີວິດແຫ່ງອັສຊີເຣັຽ ເຈົ້າຊີວິດແຫ່ງອັສຊີເຣັຽຈຶ່ງຍົກທັບກັບ ແລະບໍ່ໄດ້ຊົງຢັ້ງຢູ່ໃນແຜ່ນດິນນັ້ນ
21 ສ່ວນພຣະຣາຊກິຈຂອງເມນາເຮມ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງ
ພຣະຣາຊາປະເທດອິສຣາເອນຫລື?
22 ແລະເມນາເຮມກໍລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເປກາຣີຢາໂອຣົດກໍຂຶ້ນຄອງແທນພຣະອົງ

**ຣັຊການເປກາຮີຢາ**

Pekahiah Reigns over Israel

23 ໃນປີທີຫ້າສິບແຫ່ງຣັຊການອາຊາຣີຢາເຈົ້າຊີວິດແຫ່ງຢູດາ ເປກາຮີຢາໂອຣົດຂອງເມນາເຮມໄດ້ເລີ້ມປົກຄອງເໜືອອິ
ສຣາເອນໃນຊາມາເຣັງ ແລະພຣະອົງຊົງປົກຄອງສອງປີ
24 ແລະພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະອົງບໍ່ໄດ້ຊົງພາກຈາກບາບຂອງເຢໂຣໂບ
ອາມບຸດເນ ບັດ ຊຶ່ງພຣະອົງຊົງກະທຳໃຫ້ອິສຣາເອນທຳດ້ວຍ
25 ແລະເປກາບຸດເຣມາລີຢາ ແມ່ທັບຂອງພຣະອົງໄດ້ຮ່ວມກັນຄິດກະບົດຕໍ່ພຣະອົງ ແລະໄດ້ປະຫານພຣະອົງເສັຽໃນ
ຊາມາເຣັຽໃນປ້ອມຂອງສຳນັກພຣະຣາຊວັງ ກັບອາຣ໌ໂກບແລະອາຣີເອ ແລະມີຄົນກິເລອາດຫ້າສິບຄົນຮ່ວມກັນຄິດ
ກະບົດກັບທ່ານ ທ່ານໄດ້ປະຫານພຣະອົງແລະໄດ້ຂຶ້ນປົກຄອງແທນພຣະອົງ
26 ສ່ວນພຣະຣາຊກິດນອກນັ້ນຂອງເປກາຮີຢາ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ມີບັນທຶກໄວ້ໃນໜັງສືພົງສາວະ
ດານແຫ່ງ ພຣະຣາຊາປະເທດອິສຣາເອນ

**ຣັຊການເປກາ**

Pekah Reigns over Israel

27 ໃນປີທີຫ້າສິບສອງແຫ່ງຣັຊການອາຊາຣີຢາເຈົ້າຊີວິດແຫ່ງຢູດາ ເປກາບຸດເຣມາລີຢາ ໄດ້ເລີ້ມປົກຄອງເໜືອອິສຣາ
ເອນໃນຊາມາເຣັຽ ແລະຊົງປົກຄອງຊາວປີ
28 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະອົງບໍ່ໄດ້ພາກຈາກບາບຂອງເຢໂຣໂບອາມ
ບຸດເນບັດ ຊຶ່ງ ພຣະອົງຊົງກະທຳໃຫ້ອິສຣາເອນທຳດ້ວຍ
29 ໃນຣັຊການຂອງເປກາເຈົ້າຊີວິດແຫ່ງອິສຣາເອນ ຕິກລັທປີເລເຊີເຈົ້າຊີວິດແຫ່ງອັສຊີເຣັຽໄດ້ຍົກມາ ແລະຍຶດເມືອງອີ
ໂຢນ ອາເບນເບັດມາອາກາ ຢາໂນອາ ເກເດສ ຮາໂຊຣ໌ ກິເລອາດ ແລະຄາລີເລແຜ່ນດິນເນັຟທາລີທັງໝົດ ແລະ
ກວາດຕ້ອນປະຊາຊົນເປັນຊະເລີຍໄປຍັງອັສຊີເຣັຽ
30 ແລ້ວໂຮເຊຢາ ບຸດເອລາໄດ້ຮ່ວມຄິດກະບົດຕໍ່ເປກາບຸດເຣມາລີຢາ ແລະລົ້ມພຣະອົງລົງ ແລະປະຫານພຣະອົງເສັຽ
ແລະຂຶ້ນຄອງແທນພຣະອົງໃນປີທີຊາວແຫ່ງຣັຊການໂຢທາມ ໂອຣົດຂອງອຸສຊີຢາ
31 ສ່ວນພຣະຣາຊກິດນອກນັ້ນຂອງເປກາແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ມີບັນທຶກໄວ້ໃນໜັງສືພົງສາວະດານພ
ຣະຣາຊາປະເທດອິສຣາເອນ

**ຣັຊການໂຢທາມ**

Jotham Reigns over Judah

(2 ຂຄວ 27:1-9)

32 ໃນປີທີສອງແຫ່ງຣັຊການເປກາບຸດເຣມາລີຢາເຈົ້າຊີວິດແຫ່ງອິສຣາເອນ ໂຢທາມ ໂອຣົດຂອງອຸສຊີຢາເຈົ້າຊີວິດແຫ່ງ
ຢູດາໄດ້ເລີ້ມປົກຄອງ
33 ເມື່ອພຣະອົງຊົງເລີ້ມປົກຄອງນັ້ນມີອາຍຸສິບຫ້າປີ ແລະພຣະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ ພຣະມານດາ
ຂອງພຣະອົງມີພຣະນາມວ່າ ເຢຣູຊາບຸດຍິງຂອງຊາໂດກ
34 ແລະພຣະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ຕາມທຸກຢ່າງທີ່ອຸສຊີຢາພຣະຣາຊບິດາຂອງ
ພຣະອົງຊົງກະທຳ
35 ແຕ່ບ່ອນນະມັສການສະຖານທີ່ສູງກໍຍັງບໍ່ໄດ້ຖືກກຳຈັດເສັຽ ປະຊາຊົນຍັງຖວາຍສັດບູຊາແລະເຜົາເຄື່ອງຫອມເທິງ
ບ່ອນນະມັສການສະຖານທີ່ສູງນັ້ນ ພຣະອົງຊົງສ້າງປະຕູເທິງຂອງພຣະວິຫານແຫ່ງພຣະຜູ້ເປັນເຈົ້າ
36 ສ່ວນພຣະຣາຊກິດນອກນັ້ນຂອງໂຢທາມ ແລະບັນດາສິ່ງຊຶ່ງພຣະອົງໄດ້ຊົງກະທຳບໍ່ໄດ້ບັນທຶກໄວ້ໃນໜັງສືພົງສາວະ
ດານແຫ່ງ ພຣະຣາຊາປະເທດຢູດາຫລື?
37 ໃນການຄັ້ງນັ້ນພຣະຜູ້ເປັນເຈົ້າໄດ້ຊົງໃຊ້ເຣຊີນເຈົ້າຊີວິດຊີເຣັຽ ແລະເປກາບຸດເຣມາລີຢາໃຫ້ມາສູ້ກັບຢູດາ

38 ໂຢທາມໄດ້ຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະໄດ້ຝັງໄວ້ກັບບັນພະບຸຣຸດຂອງພຣະອົງ ແລະອາຮັສ
ໂອຣົດຂອງພຣະອົງຂຶ້ນຄອງແທນ

## 16 ຣັຊການອາຮັສ

Ahaz Reigns over Judah

(2 ຂຄວ 28:1-27)

1 ໃນປີທີສິບເຈັດແຫ່ງຣັຊການເປກາບຸດເຣມາລີຢາ ອາຮັສໂອຣົດຂອງໂຢທາມເຈົ້າຊີວິດແຫ່ງຢູດາໄດ້ເລີ້ມປົກຄອງ
2 ອາຮັສມີອາຍຸຊາວປີ ເມື່ອພຣະອົງຊົງເລີ້ມປົກຄອງ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສິບຫົກປີ ແລະພຣະ
ອົງບໍ່ໄດ້ຊົງກະທຳສິ່ງທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພຣະອົງດັ່ງດາວິດບັນພະບຸຣຸດຂອງພ
ຣະອົງໄດ້ຊົງກະທຳ
3 ແຕ່ພຣະອົງຊົງດຳເນີນຕາມທາງຂອງເຈົ້າຊີວິດແຫ່ງອິສຣາເອນ ພຣະອົງເຖິງກັບຊົງຖວາຍໂອຣົດຂອງພຣະອົງໃຫ້ລຸຍ
ໄຟເປັນເຄື່ອງບູຊາ ຕາມການກະທຳອັນໜ້າລັງກຽດຂອງປະຊາຊາດຊຶ່ງພຣະຜູ້ເປັນເຈົ້າຊົງຂັບໄລ່ເສັຽໃຫ້ພົ້ນໜ້າ
ປະຊາຊົນອິສຣາເອນ
4 ແລະພຣະອົງຊົງຖວາຍສັຕບູຊາ ແລະເຜົາເຄື່ອງຫອມເທິງບ່ອນນະມັສການສະຖານທີ່ສູງ ແລະໃນເນີນສູງແລະໃຕ້
ຕົ້ນໄມ້ທຸກຕົ້ນ
5 ແລ້ວເຣຊີນເຈົ້າຊີວິດແຫ່ງຊີເຣັຽ ແລະເປກາບຸດເຣມາລີຢາເຈົ້າຊີວິດແຫ່ງອິສຣາເອນຊົງຍົກຂຶ້ນມາທຳສົງຄາມກັບກຸງ
ເຢຣູຊາເລັມ ແລະເຈົ້າຊີວິດທັງສອງໄດ້ລ້ອມອາຮັສໄວ້ ແຕ່ຊົງເອົາໄຊຊະນະຍັງບໍ່ໄດ້
6 ຄາວນັ້ນເຣຊີນເຈົ້າຊີວິດແຫ່ງຊີເຣັຽໄດ້ເຂົ້າຍຶດເມືອງເອລັທຄືນໃຫ້ຊີເຣັຽ ແລະຊົງຂັບໄລ່ພວກຢິວເສັຽຈາກເອລັທແລະ
ຄົນຊີເຣັຽມາທີ່ເອລັທ ແລະຢູ່ທີ່ນັ້ນຈົນທຸກວັນນີ້
7 ອາຮັສຈຶ່ງຊົງສົ່ງຜູ້ສົ່ງຂ່າວໄປຍັງຕີກລັທປີເລເຊີເຈົ້າຊີວິດແຫ່ງອັສຊີເຣັຽວ່າ, "ຂ້າພະເຈົ້າເປັນຄົນໃຊ້ຂອງທ່ານ ແລະເປ
ັນບຸດຂອງທ່ານ ຂໍເຊີນຂຶ້ນມາຊ່ວຍຂ້າພະເຈົ້າໃຫ້ພົ້ນຈາກມືຂອງເຈົ້າຊີວິດແຫ່ງຊີເຣັຽ ແລະຈາກມືຂອງເຈົ້າຊີວິດແຫ່ງ
ອິສຣາເອນ ຜູ້ຊຶ່ງລຸກຂຶ້ນຕໍ່ສູ້ຂ້າພະເຈົ້າ"
8 ອາຮັສຊົງນຳເອົາເງິນແລະທອງຄຳຊຶ່ງມີຢູ່ໃນພຣະວິຫານແຫ່ງພຣະຜູ້ເປັນເຈົ້າ ແລະໃນຄັງສຳນັກພຣະຣາຊວັງ ແລະ
ສົ່ງເປັນຂອງຂວັນຖວາຍແກ່ເຈົ້າຊີວິດແຫ່ງອັສຊີເຣັຽ
9 ເຈົ້າຊີວິດແຫ່ງອັສຊີເຣັຽກໍຊົງຍົກທັບຂຶ້ນໄປຍັງດາມັສກັສແລະຍຶດໄດ້ ຈັບປະຊາຊົນເມືອງນັ້ນໄປເປັນຊະເລີຍຍັງ
ເມືອງຄີຣ໌ ແລະຊົງປະຫານເຣຊີນເສັຽ
10 ເມື່ອເຈົ້າຊີວິດອາຮັສສະເດັດໄປດາມັສກັສ ເພື່ອພົບກັບຕີກລັທປີເລເຊີກໍຊົງເຫັນແທ່ນທີ່ບູຊາດາມັສກັສ ແລະກະສັດ
ອາຮັສຊົງສົ່ງຫຸ່ນແທ່ນບູຊາໄປຍັງປະໂຣຫິດອຸຣີຢາພ້ອມທັງແບບແຜນຕາມລັກສນະການສ້າງ
11 ແລະປະໂຣຫິດອຸຣີຢາໄດ້ສ້າງແທ່ນນັ້ນ ຕາມແບບທຸກປະການຊຶ່ງກະສັດອາຮັສໄດ້ສົ່ງມາຈາກດາມັສກັສ ປະໂຣຫິດ
ອຸຣີຢາຈຶ່ງໄດ້ສ້າງແທ່ນບູຊານັ້ນກ່ອນທີ່ກະສັດອາຮັສສະເດັດຈາກດາມັສກັສມາເຖິງ
12 ເມື່ອເຈົ້າຊີວິດສະເດັດຈາກດາມັສກັສເຖິງແລ້ວ ເຈົ້າຊີວິດກໍຊົງເຫັນແທ່ນບູຊາ ແລ້ວພຣະອົງຊົງເຂົ້າມາໃກ້ແທ່ນບູຊາ
ສະເດັດຂຶ້ນເທິງນັ້ນ
13 ແລະຊົງເຜົາເຄື່ອງບູຊາຂອງພຣະອົງ ແລະທັນຍາບູຊາຂອງພຣະອົງ ແລະຊົງເທເຄື່ອງດື່ມບູຊາຂອງພຣະອົງ ແລະຊົງ
ພົມເລືອດເຄື່ອງສານຕິບູຊາຂອງພຣະອົງລົງເທິງແທ່ນນັ້ນ
14 ພຣະອົງຊົງຍ້າຍແທ່ນບູຊາທອງສຳຣິດ ຊຶ່ງຢູ່ຕໍ່ໜ້າພຣະພັກພຣະຜູ້ເປັນເຈົ້າອອກເສັຽຈາກຂ້າງໜ້າພຣະວິຫານຈາກ
ສະຖານທີ່ ລະຫວ່າງແທ່ນບູຊາຂອງພຣະອົງ ແລະພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະຕັ້ງໄວ້ທາງດ້ານເໜືອ
ແຫ່ງແທ່ນບູຊາຂອງພຣະອົງ

15 ກະສັດອາຮັສຊົງສັ່ງກັບປະໂຣຫິດອຸຣີຢາວ່າ, “ເທິງແທ່ນໃຫຍ່ນີ້ ທ່ານຈົ່ງເຜົາເຄື່ອງເຜົາບູຊາຕອນເຊົ້າແລະທັນຍາບູ
ຊາຕອນແລງ ແລະເຄື່ອງເຜົາບູຊາຂອງເຈົ້າຊີວິດ ແລະເຄື່ອງທັນຍາບູຊາຂອງພຣະອົງພ້ອມກັບເຄື່ອງເຜົາບູຊາຂອງ
ບັນດາຣາສດອນ ແລະທັນຍາບູຊາຂອງເຂົາທັງຫລາຍ ແລະເຄື່ອງດື່ມບູຊາຂອງເຂົາທັງຫລາຍແລະຈົ່ງຊິດເລືອດທັງ
ຫມົດຂອງເຄື່ອງເຜົາບູຊາເທິງນັ້ນ ແລະເລືອດທັງຫມົດຂອງເຄື່ອງສັດບູຊາ ແຕ່ແທ່ນບູຊາທອງສຳຣິດໃຫ້ເປັນບ່ອນທີ່
ເຮົາຈະທູນຖາມພຣະຜູ້ເປັນເຈົ້າ”
16 ອຸຣີຢາໄດ້ກະທຳການເຫລົ່ານີ້ທັງສິ້ນຕາມພຣະບັນຊາຂອງກະສັດອາຮັສ
17 ເຈົ້າຊີວິດອາຮັສຊົງຕັດແຜງແທ່ນນັ້ນອອກ ແລະຊົງຍົກຂັນອອກໄປຈາກແທ່ນເສັ່ງ ແລະພຣະອົງຊົງເອົາຂັນໃຫຍ່ລົງ
ມາເສັ່ງຈາກງົວທອງສຳຣິດທີ່ຮອງຢູ່ນັ້ນ ຊົງວາງໄວ້ເທິງພື້ນດິນ
18 ແລະສາລາວັນສະບາໂຕຊຶ່ງເຂົາໄດ້ສ້າງໄວ້ໃນພຣະວິຫານ ແລະທາງເຂົ້າພຣະວິຫານຂອງພຣະຜູ້ເປັນເຈົ້າຊັ້ນນອກ
ສຳລັບເຈົ້າຊີວິດນັ້ນ ພຣະອົງຊົງປ່ຽນເສັ່ງ ເພາະເຫັນແກ່ເຈົ້າຊີວິດແຫ່ງອັສຊີເຣັຽ
19 ສ່ວນພຣະຣາຊກິຈນອກນັ້ນຂອງອາຮັສ ຊຶ່ງພຣະອົງຊົງກະທຳບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາ
ຊາປະເທດຢູດາຫລື?
20 ແລະອາຮັສຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງໄວ້ກັບບັນພະບຸຣຸດຂອງພຣະອົງໃນນະ
ຄອນດາວິດ ແລະເຮເຊຄີຢາໂອຣົດຂອງພຣະອົງຂຶ້ນປົກຄອງແທນພຣະອົງ

## 17 ຣັຊການໂຮເຊອາ

Hoshea Reigns over Israel

1 ໃນຣັຊການປີທີສິບສອງຂອງເຈົ້າອາຮັສ ເຈົ້າຊີວິດແຫ່ງຢູດາ ໂຮເຊອາບຸດເອລາ ໄດ້ຂຶ້ນເປັນເຈົ້າຊີວິດປະເທດອິສຣາ
ເອນ ແລະປົກຄອງກຸງຊາມາເຣັຽຢູ່ເກົ້າປີ
2 ພຣະອົງໄດ້ທຳຜິດຕໍ່ພຣະຜູ້ເປັນເຈົ້າແຕ່ກໍຍັງບໍ່ສໍ່າບັນດາເຈົ້າຊີວິດທີ່ປົກຄອງອິສຣາເອນອົງກ່ອນໆ
3 ເຈົ້າຊີວິດຊັນມາເນເຊີແຫ່ງອັສຊີເຣັຽໄດ້ທຳເສິກຕໍ່ສູ້ພຣະອົງ ຝ່າຍໂຮເຊອາຈຶ່ງຍອມຢູ່ໃຕ້ອຳນາດແລະເສັ່ງສ່ວຍປະຈຳ
ປີໃຫ້ທຸກໆປີ
4 ແຕ່ຢູ່ມາໂຮເຊອາໄດ້ທໍຣະຍົດຕໍ່ອັສຊີເຣັຽ ຄືພຣະອົງໄດ້ສົ່ງທູດໄປຫາໂສເຈົ້າຊີວິດແຫ່ງເອຢິບ ແລະບໍ່ຍອມເສັ່ງສ່ວຍ
ປະຈຳປີໃຫ້ອັສຊີເຣັຽ ເມື່ອຊັນມາເນເຊີຮູ້ຂ່າວພຣະອົງກໍຈັບໂຮເຊອາໄປຂັງຄຸກໄວ້

### ກຸງຊາມາເຣັຽແຕກ

Israel Carried Captive to Assyria

5 ແລ້ວຊັນມາເນເຊີເຈົ້າຊີວິດແຫ່ງອັສຊີເຣັຽ ໄດ້ບຸກເຂົ້າໂຈມຕີປະເທດອິສຣາເອນ ແລະໄດ້ອ້ອມເມືອງຊາມາເຣັຽເປັນ
ເວລາສາມປີ
6 ໃນປີທີເກົ້າຂອງຣັຊການເຈົ້າໂຮເຊອາ ເຈົ້າຊີວິດອັສຊີເຣັຽໄດ້ຍຶດເອົາກຸງຊາມາເຣັຽ ແລະນຳເອົາຊາວອິສຣາເອນໄປ
ເປັນຊະເລີຍທີ່ອັສຊີເຣັຽ ພຣະອົງໄດ້ໃຫ້ບາງຄົນໃນພວກເຂົາອາໄສຢູ່ທີ່ເມືອງ ຮາລາ ຢູ່ໃກ້ແມ່ນ້ຳຮາໂບຣ໌ ໃນເຂດໂກ
ຊານແລະຢູ່ໃນເມືອງຂອງຊາວເມເດສ
7 ກຸງຊາມາເຣັຽຫລົ້ມຈົມກໍຍ້ອນຊາວອິສຣາເອນທຳຜິດຕໍ່ພຣະຜູ້ເປັນເຈົ້າຂອງພວກເຂົາ ຜູ້ຊົງນຳເຂົາອອກຈາກປະເທດ
ເອຢິບ ຈາກກຳມືຂອງຟາຣາໂອ ເຈົ້າຊີວິດແຫ່ງເອຢິບ ຄືພວກເຂົາໄປຂາບໄຫວ້ພຣະອື່ນ
8 ແລະເຮັດຕາມປະເພນີຂອງຊົນຊາດທີ່ພຣະຜູ້ເປັນເຈົ້າຊົງຂັບໄລ່ຫນີໄປຈາກພວກເຂົາ ແລະຖືເອົາທັມນຽມທີ່ປະດິດ
ຄິດຂຶ້ນໂດຍບັນດາກະສັດອິສຣາເອນ
9 ພວກອິສຣາເອນໄດ້ພາກັນກະທຳໃນສິ່ງທີ່ພຣະຜູ້ເປັນເຈົ້າບໍ່ເພິ່ງປາຖນາ ພວກເຂົາໄດ້ສ້າງບ່ອນນະມັສການໄວ້ເທິງ
ບ່ອນສູງທົ່ວເມືອງຂອງພວກເຂົາ ຕັ້ງແຕ່ຫມູ່ບ້ານນ້ອຍໆເຖິງເມືອງໃຫຍ່ໆ

10 ພວກເຂົາໄດ້ຕັ້ງເສົາສັກສິດ ແລະຮູບພຣະອາເຊຣິມໄວ້ເທິງພູສູງທຸກໆຫນ່ອຍ ແລະຢູ່ໃຕ້ຕົ້ນໄມ້ໃຫຍ່ທຸກແຫ່ງ
11 ພວກເຂົາຖວາຍບູຊາຢູ່ຕາມບ່ອນເຫລົ່ານີ້ ຕາມແບບຂອງຊົນຊາດທີ່ພຣະຜູ້ເປັນເຈົ້າຊົງຂັບໄລ່ຫນີໄປຈາກພວກເຂົາ
ນັ້ນ ແລະພວກເຂົາໄດ້ທຳໃນສິ່ງທີ່ຊົ່ວຮ້າຍ ຊຶ່ງເປັນການກະທຳໃຫ້ພຣະຜູ້ເປັນເຈົ້າຊົງພຣະພິໂຣດ
12 ພວກເຂົາຂາບໄຫວ້ຮູບໂຄຣົບຊຶ່ງເປັນການຂືນຄຳສັ່ງຂອງພຣະຜູ້ເປັນເຈົ້າ
13 ພຣະຜູ້ເປັນເຈົ້າຊົງສັ່ງພວກຜູ້ສື່ງຂ່າວ ແລະພວກຜູ້ປະກາດພຣະທັມໄປເຕືອນອິສຣາເອນ ແລະຢູດາວ່າ, "ຈົ່ງຫັນຫນີ
ຈາກທາງຊົ່ວແລະຖືຮັກສາຄຳສັ່ງຂອງເຮົາ ຕາມບົດບັນຍັດທີ່ເຮົາໄດ້ໃຫ້ໄວ້ແກ່ບັນພະບຸຣຸດຂອງພວກເຈົ້າ ເຮົາໄດ້ໃຫ້
ບົດບັນຍັດນີ້ແກ່ພວກເຈົ້າ ໂດຍຜ່ານຜູ້ຮັບໃຊ້ຂອງເຮົາ ຄື ຜູ້ປະກາດພຣະທັມ"
14 ແຕ່ພວກເຂົາບໍ່ຟັງ ພວກເຂົາດື້ດ້ານເຫມືອນດັ່ງປູ່ຍ່າຕາຍາຍຂອງພວກເຂົາ ທີ່ບໍ່ມີຄວາມເຊື່ອໃນພຣະຜູ້ເປັນເຈົ້າຂອງ
ພວກເຂົາ
15 ພວກເຂົາໄດ້ປະຖິ້ມຄຳສັ່ງສອນ ແລະຄຳຫມັ້ນສັນຍາທີ່ພຣະອົງຊົງມີໄວ້ກັບບັນພະບຸຣຸດຂອງພວກເຂົາ ແລະທັງຄຳ
ເຕືອນທີ່ພຣະອົງຊົງເຕືອນພວກເຂົາ ພວກເຂົາຂາບໄຫວ້ຮູບໂຄຣົບທີ່ໄຮ້ສາຣະຈົນກາຍເປັນຜູ້ທີ່ອັບປໂຍດ ເຂົາຕິດ
ຕາມແບບຢ່າງຂອງຊົນຊາດທີ່ຢູ່ອ້ອມຮອບເຂົາ ຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງເຂົາແລ້ວວ່າບໍ່ໃຫ້ເຂົາກະທຳຄືຊົນຊາດ
ເຫລົ່ານັ້ນ
16 ພວກເຂົາປະຖິ້ມຂໍ້ຄຳສັ່ງທຸກຢ່າງຂອງພຣະຜູ້ເປັນເຈົ້າ ຜູ້ຊົງເປັນພຣະເຈົ້າຂອງເຂົາ ແລະໄດ້ໃຊ້ໂລຫະຫລໍ່ເປັນຮູບງົວ
ສອງໂຕຂຶ້ນເປັນທີ່ສັກກາຣະບູຊາ ໄດ້ທຳຫລັກສັກສິດ ໄດ້ນະມັສການດວງດາວ ຕລອດທັງຮັບໃຊ້ພຣະບາອານ
17 ພວກເຂົາເອົາບຸດຊາຍແລະບຸດຍິງມາຖວາຍບູຊາ ພວກເຂົາດູໂຫນ ດູມໍ ແລະຕັ້ງຫນ້າຕັ້ງຕາທຳໃນສິ່ງທີ່ຊົ່ວຊ້າຕໍ່ສາຍ
ພຣະເນດຂອງພຣະຜູ້ເປັນເຈົ້າ ຊຶ່ງເປັນການຍົວະເຍົ້າໃຫ້ພຣະອົງຊົງພຣະພິໂຣດ
18 ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າຊົງພິໂຣດພວກອິສຣາເອນ ແລະຊົງຂັບໄລ່ເຂົາຫນີຈາກພຣະພັກຂອງພຣະອົງ ໂດຍຈົ່ງ
ໄວ້ແຕ່ຄົນໃນຣາຊອານາຈັກຢູດາເທົ່ານັ້ນ
19 ຊາວຢູດາບໍ່ຖືຮັກສາຂໍ້ຄຳສັ່ງຂອງພຣະຜູ້ເປັນເຈົ້າເຊັ່ນດຽວກັນ ເຂົາປະຕິບັດຕາມຮີດຄອງປະເພນີຂອງພວກອິສຣາ
ເອນ
20 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງປະຖິ້ມຊາວອິສຣາເອນທຸກຄົນ ພຣະອົງຊົງທຳໃຫ້ພວກເຂົາຫລົ້ມຈົມ ແລະຊົງມອບເຂົາ
ໄວ້ໃນກຳມືຂອງພວກສັດຕຣູຜູ້ໂຫດຮ້າຍ ຈົນໃນທີ່ສຸດພຣະອົງກໍໄດ້ຊົງຂັບໄລ່ເຂົາຫນີໃຫ້ໄກຈາກພຣະພັກຂອງພຣະ
ອົງ
21 ຫລັງຈາກພຣະຜູ້ເປັນເຈົ້າໄດ້ຊົງແຍກອິສຣາເອນອອກຈາກຢູດາແລ້ວ ພວກອິສຣາເອນກໍໄດ້ແຕ່ງຕັ້ງເຢໂຣໂບ
ອາມບຸດເນບັດໃຫ້ເປັນເຈົ້າຊີວິດ ເຢໂຣໂບອາມໄດ້ຊັກຊວນຊາວອິສຣາເອນໃຫ້ປະລະພຣະຜູ້ເປັນເຈົ້າ ແລະນຳພາ
ພວກເຂົາກະທຳຄວາມຜິດຢ່າງຮ້າຍແຮງ
22 ພວກອິສຣາເອນໄດ້ທຳບາບເຫມືອນດັ່ງ ເຢໂຣໂບອາມ ແລະໄດ້ກະທຳຄວາມຜິດຄວາມບາບນັ້ນຕໍ່ໄປ
23 ຈົນຜົນສຸດທ້າຍ ພຣະຜູ້ເປັນເຈົ້າຊົງຂັບໄລ່ພວກເຂົາຫນີໃຫ້ໄກຈາກພຣະພັກຂອງພຣະອົງ ຕາມທີ່ພຣະອົງຊົງບອກ
ຜ່ານມາທາງພວກຜູ້ປະກາດພຣະທັມ ຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງ ພຣະອົງຊົງກວາດເອົາພວກອິສຣາເອນຈາກ
ບ້ານເກີດເມືອງນອນຂອງເຂົາ ໄປເປັນຊະເລີຍທີ່ປະເທດອັສຊີເຣັຽຈົນເຖິງເທົ່າທຸກວັນນີ້

**ຊາວອັສຊີເຣັຽຕັ້ງຖິ່ນຖານຢູ່ໃນອິສຣາເອນ**

Assyria Resettles Samaria

24 ເຈົ້າຊີວິດອັສຊີເຣັຽໄດ້ນຳປະຊາຊົນຈາກຫົວເມືອງຕ່າງໆ ໃນປະເທດບາບີໂລນ ຄືກຸທາ ອາວວາ ຮາມັທ ເຊຟາຣ໌ວາ
ອິມ ມາຢູ່ໃນປະເທດຊາມາເຣັຽແທນພວກອິສຣາເອນ ພວກເຂົາໄດ້ເຂົ້າມາຄອບຄອງ ແລະອາໄສຢູ່ຕາມຫົວເມືອງ
ຕ່າງໆ

25 ຕອນທີ່ພວກເຂົາມາຢູ່ໃຫມ່ ພວກເຂົາບໍ່ໄດ້ນະມັສການພຣະຜູ້ເປັນເຈົ້າ ດັ່ງນັ້ນ ພຣະອົງຈຶ່ງຊົງສັ່ງຝູງສິງມາກັດກິນ
ພວກເຂົາເປັນຈຳນວນຫລາຍ
26 ພວກເຂົາຈຶ່ງໄດ້ທູນຕໍ່ເຈົ້າຊີວິດອັສຊີເຣັຽວ່າ ຊົນຊາດທີ່ພຣະອົງໃຫ້ມາອາໄສຢູ່ໃນເມືອງຊາມາເຣັຽບໍ່ຮູ້ຈັກພິທີນະມັສ
ການພຣະປະຈຳປະເທດ ພຣະນັ້ນຈຶ່ງສົ່ງສິງມາກັດກິນພວກເຂົາ
27 ແລ້ວເຈົ້າຊີວິດອັສຊີເຣັຽຈຶ່ງໄດ້ຊົງອອກຄຳສັ່ງວ່າ, “ຈົ່ງສົ່ງປະໂຣຫິດຜູ້ນຶ່ງ ທີ່ຕົກເປັນຊະເລີຍຂອງເຮົານັ້ນ ໃຫ້ໄປສອນ
ພິທີນະມັສການພຣະປະຈຳປະເທດໃຫ້ແກ່ພວກເຂົາ”
28 ສະນັ້ນປະໂຣຫິດຜູ້ນຶ່ງໃນຈຳນວນພວກທີ່ຖືກກວາດມາແຕ່ຊາມາເຣັຽກໍໄປຢູ່ໃນເມືອງເບັດເອນ ແລະໄດ້ສອນພິທີນະ
ມັສການພຣະຜູ້ເປັນເຈົ້າໃຫ້ແກ່ພວກເຂົາ
29 ແຕ່ວ່າພວກເຂົາຍັງຄົງສ້າງຮູບໂຄຣົບເປັນພຣະເຈົ້າຂອງເຂົາແຕ່ລະຊົນຊາດຢູ່ ພວກເຂົາໄດ້ເອົາຮູບໂຄຣົບໄວ້ໃນ
ບ່ອນສັກສິດທີ່ຊາວຊາມາເຣັຽໄດ້ກໍ່ສ້າງໄວ້ ພວກເຂົາໄດ້ທຳເຊັ່ນນີ້ໃນທຸກໆຫົວເມືອງທີ່ເຂົາອາໄສຢູ່
30 ຊາວເມືອງບາບີໂລນໄດ້ສ້າງຮູບພຣະຊຸກໂກທເບໂນທ ຊາວເມືອງກຸທາໄດ້ສ້າງຮູບພຣະເນຣ໌ການ ຊາວເມືອງຮາມັທ
ໄດ້ສ້າງຮູບ ພຣະອາຊີມາ
31 ຊາວເມືອງອາວວາໄດ້ສ້າງຮູບພຣະນິບຮັສ ແລະພຣະຕາຣ໌ຕັກ ສ່ວນຊາວເຊຟາຣ໌ວາອິມໄດ້ເຜົາລູກຂອງຕົນຖວາຍບູ
ຊາຮູບພຣະ ອັດຣາມເມເລກ ແລະຮູບພຣະອານາມເມເລກ ຊຶ່ງເປັນພຣະເຈົ້າຂອງຊາວເຊຟາຣ໌ວາອິມ
32 ແຕ່ພວກເຂົາເຫລົ່ານີ້ກໍນະມັສການພຣະຜູ້ເປັນເຈົ້າເຫມືອນກັນ ແລະພວກເຂົາໄດ້ແຕ່ງຕັ້ງກັນໃນພວກເຂົາເອງໃຫ້
ເປັນປະໂຣຫິດປະຈຳບ່ອນສັກສິດເພື່ອຖວາຍເຄື່ອງບູຊາຢູ່ທີ່ນັ້ນ
33 ພວກເຂົານະມັສການພຣະຜູ້ເປັນເຈົ້າແລະທັງໄດ້ຮັບໃຊ້ພຣະຂອງພວກເຂົາ ຕາມຮີດຄອງຂອງປະເທດທີ່ເຂົາເຄີຍຢູ່
ມາກ່ອນນັ້ນ
34 ທຸກວັນນີ້ພວກເຂົາຍັງຄົງປະຕິບັດຕາມຮີດຄອງເກົ່າຢູ່ໂດຍບໍ່ໄດ້ນະມັສການພຣະຜູ້ເປັນເຈົ້າ ແລະບໍ່ໄດ້ປະຕິບັດຕາມ
ພຣະທັມ ຫລືກົດຂໍ້ຄຳສັ່ງທີ່ພຣະຜູ້ເປັນເຈົ້າຊົງມີໄວ້ແກ່ເຊື້ອສາຍຂອງຢາໂຄບ ຜູ້ຊຶ່ງພຣະອົງຊົງໃຫ້ຊື່ວ່າອິສຣາເອ
35 ພຣະຜູ້ເປັນເຈົ້າຊົງທຳຄຳຫມັ້ນສັນຍາກັບເຂົາ ແລະສັ່ງເຂົາວ່າ, “ພວກເຈົ້າບໍ່ຕ້ອງຮັບໃຊ້ ບໍ່ຕ້ອງຂາບໄຫວ້ ຫລືຖວາຍ
ບູຊາແກ່ ພຣະອື່ນ
36 ແຕ່ພວກເຈົ້າຕ້ອງຢຳເກງເຮົາ ຜູ້ເປັນພຣະຜູ້ເປັນເຈົ້າທີ່ໄດ້ນຳພວກເຈົ້າອອກມາຈາກປະເທດເອຢິບດ້ວຍອຳນາດອັນ
ຍິ່ງໃຫຍ່ຂອງເຮົາ
37 ພວກເຈົ້າຕ້ອງເຊື່ອຟັງພຣະທັມ ແລະກົດຂໍ້ຄຳສັ່ງທີ່ເຮົາໄດ້ຈາຣຶກໄວ້ໃຫ້ແກ່ພວກເຈົ້າ
38 ພວກເຈົ້າບໍ່ຕ້ອງນະມັສການພຣະອື່ນ ຢ່າລືມຄຳຫມັ້ນສັນຍາທີ່ເຮົາມີໄວ້ກັບພວກເຈົ້າ
39 ຈົ່ງໂຄຣົບຢຳເກງເຮົາຜູ້ເປັນພຣະຜູ້ເປັນເຈົ້າຂອງເຈົ້າ ແລະເຮົາຈະໄຖ່ພວກເຈົ້າອອກຈາກອຳນາດຂອງພວກສັດຕຣູ”
40 ແຕ່ປະຊາຊົນເຫລົ່ານີ້ບໍ່ຍອມຟັງ ແລະຍັງຄົງປະຕິບັດຕາມຮີດຄອງເກົ່າຢູ່
41 ສະນັ້ນພວກຊົນຊາດເຫລົ່ານີ້ ຈຶ່ງນະມັສການພຣະເຈົ້າພ້ອມທັງຮັບໃຊ້ຮູບໂຄຣົບຂອງພວກເຂົາອີກດ້ວຍ ທຸກວັນນີ້
ພວກລູກຫລານເຫລັນຂອງພວກເຂົາຍັງສືບຕໍ່ປະຕິບັດເຫມືອນພໍ່ແມ່ຂອງເຂົາຢູ່

## 18 ຣັຊການຂອງເຈົ້າເຮເຊກີຢາ

Hezekiah'd Reigns over Judah

(2 ຂຄວ 29:1-2; 31:1)

1 ໃນຣັຊການປີທີສາມຂອງ ໂຮເຊອາ ໂອຣົດຂອງເອລາເຈົ້າຊີວິດແຫ່ງອິສຣາເອນ ເຮເຊກີຢາ ໂອຣົດຂອງອາຮັສໄດ້
ເປັນເຈົ້າຊີວິດຢູດາ

2 ເມື່ອພຣະອົງຂຶ້ນຄອງຣາຊສົມບັດ ຊົງມີອາຍຸຢູ່ຊາວຫ້າປີ ແລະຊົງປົກຄອງຢູ່ທີ່ກຸງເຢຣູຊາເລັມເປັນເວລາຊາວເກົ້າປີ ມານດາຂອງພຣະອົງຊື່ວ່າ ອາບີ ເປັນບຸດສາວຂອງເຊຄາຣີຢາ

3 ພຣະອົງປະພຶດທຸກສິ່ງຕາມນໍ້າພຣະທັຍຂອງພຣະຜູ້ເປັນເຈົ້າ ດັ່ງດຽວກັນກັບດາວິດບັນພະບຸຣຸດທີ່ໄດ້ປະຕິບັດມາ

4 ພຣະອົງໄດ້ທຳລາຍບ່ອນສັກສິດໃນສະຖານທີ່ສູງສຸດ ໄດ້ທັບເສົາສັກສິດ ໄດ້ຕັດຫລັກໄມ້ສັກສິດ ແລະໄດ້ຕີຮູບງູທອງ ທີ່ໂມເຊໄດ້ຫລໍ່ຂຶ້ນ ງູທອງນີ້ມີຊື່ວ່າ ເນຮູສຕານ

5 ໃນສມັຍນັ້ນພວກອິສຣາເອນໄດ້ບູຊາຮູບນັ້ນ ເຈົ້າເຮເຊກີຢາໄດ້ໄວ້ວາງໃຈໃນພຣະຜູ້ເປັນເຈົ້າຂອງອິສຣາເອນ ບັນດາ ເຈົ້າຊີວິດແຫ່ງຢູດາທີ່ຂຶ້ນຄອງຣາຊສົມບັດກ່ອນພຣະອົງ ຫລືຂຶ້ນຄອງຣາຊສົມບັດຫລັງພຣະອົງ ບໍ່ມີອົງໃດເທົ່າທຽມ ກັບພຣະອົງໄດ້

6 ພຣະອົງມີຄວາມຈົງຮັກພັກດີຕໍ່ພຣະຜູ້ເປັນເຈົ້າຢ່າງບໍ່ລົດລະ ຊົງຖືຮັກສາຂໍ້ຄຳສັ່ງທີ່ພຣະຜູ້ເປັນເຈົ້າໃຫ້ໄວ້ກັບໂມເຊ

7 ດັ່ງນັ້ນພຣະຜູ້ເປັນເຈົ້າຈຶ່ງຊົງສະຖິດຢູ່ກັບພຣະອົງ ແລະທຸກສິ່ງທີ່ພຣະອົງອາສາທຳກໍສຳເຣັດຜົນ ພຣະອົງໄດ້ກະບົດຕໍ່ ສູ້ເຈົ້າຊີວິດ ອັສຊີເຣັຽ ແລະບໍ່ຍອມເສັຽສ່ວຍໃຫ້

8 ຊົງປາບປາມພວກຟີລິສຕິນຕັ້ງແຕ່ຫມູ່ບ້ານນ້ອຍໆຈົນເຖິງຫົວເມືອງໃຫຍ່ໆ ຮ່ວມທັງເມືອງກາຊາ ແລະທົ່ວທັງເຂດ ແດນນັ້ນ

9 ໃນຣັຊການປີທີສີ່ຂອງເຈົ້າເຮເຊກີຢາ ຊຶ່ງເປັນຣັຊການປີທີເຈັດຂອງເຈົ້າໂຮເຊອາບຸດຂອງເອລາ ເຈົ້າຊີວິດແຫ່ງອິສຣາ ເອນ ຊັນມາເນເຊີ ເຈົ້າຊີວິດອັສຊີເຣັຽໄດ້ບຸກຣຸກກຸງຊາມາເຣັຽ ໂດຍໄດ້ປິດລ້ອມເມືອງໄວ້

10 ພາຍໃນສາມປີເຈົ້າຊີວິດອັສຊີເຣັຽກໍຍຶດເມືອງນີ້ໄດ້ ຊຶ່ງເປັນປີທີຫົກຂອງຣັຊການເຈົ້າຊີວິດເຮເຊກີຢາ ແລະເປັນປີ ທີເກົ້າຂອງຣັຊການເຈົ້າຊີວິດໂຮເຊອາເຈົ້າຊີວິດແຫ່ງອິສຣາເອນ

11 ເຈົ້າຊີວິດອັສຊີເຣັຽໄດ້ກວາດຕ້ອນເອົາປະຊາຊົນອິສຣາເອນໄປເປັນຊະເລີຍທີ່ເມືອງອັສຊີເຣັຽ ພຣະອົງໄດ້ໃຫ້ບາງຄົນ ໃນພວກເຂົາອາໄສຢູ່ທີ່ເມືອງຮາລາແລະອີກພວກນຶ່ງໃຫ້ຢູ່ໃກ້ແມ່ນໍ້າຮາໂບຣ໌ ໃນເຂດໂກຊານແລະຢູ່ໃນເມືອງຂອງ ຊາວເມເດສ

12 ກຸງຊາມາເຣັຽຫລົ້ມຈົມກໍເພາະວ່າ ພວກອິສຣາເອນບໍ່ເຊື່ອຟັງພຣະຜູ້ເປັນເຈົ້າຂອງຕົນ ພວກເຂົາລະເມີດຄຳສັນຍາຄື ບໍ່ປະຕິບັດຕາມສິ່ງທີ່ໂມເຊ ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ບົ່ງໄວ້

**ອັສຊີເຣັຽຂົ່ມຂູ່ກຸງເຢຣູຊາເລັມ**

Sennacherib Invades Judah

(ອຊຢ 36:1-22; 2 ຂຄວ 32:1-19)

13 ໃນຣັຊການປີທີສິບສີ່ຂອງເຈົ້າເຮເຊກີຢາ ເຊນນາເກຣິບເຈົ້າຊີວິດອັສຊີເຣັຽ ໄດ້ໂຈມຕີປ້ອມປ້ອງກັນເມືອງຕ່າງໆໃນ ປະເທດຢູດາ ແລະຍຶດເອົາໄວ້ໄດ້ສຳເຣັດ

14 ແລ້ວເຮເຊກີຢາ ເຈົ້າຊີວິດແຫ່ງຢູດາໄດ້ມີພຣະຣາຊສານໄປຍັງເຈົ້າຊີວິດອັສຊີເຣັຽທີ່ເມືອງລາຄິສວ່າ, “ຂ້າພະເຈົ້າໄດ້ ທຳຜິດແລ້ວ ຂໍໃຫ້ເອີ້ນກອງທັບຖອນຄືນເສັຽ ຂ້າພະເຈົ້າຍອມທຳຕາມທຸກສິ່ງທີ່ທ່ານຕ້ອງການ” ເຈົ້າຊີວິດອັສຊີເຣັຽ ໄດ້ຮຽກຮ້ອງເອົາເງິນສາມຮ້ອຍຕະລັນແລະທອງຄຳສາມສິບຕະລັນຈາກເຮເຊກີຢາເຈົ້າຊີວິດແຫ່ງຢູດາ

15 ດັ່ງນັ້ນເຈົ້າເຮເຊກີຢາ ຈຶ່ງໄດ້ເອົາເງິນທັງຫມົດຈາກພຣະວິຫານພຣະຜູ້ເປັນເຈົ້າ ແລະຈາກຄັງພຣະຣາຊວັງມອບໃຫ້

16 ພຣະອົງໄດ້ລອກເອົາຄຳຈາກປະຕູພຣະວິຫານພຣະຜູ້ເປັນເຈົ້າ ແລະຈາກຂອບປ່ອງຢ້ຽມທີ່ພຣະອົງໄດ້ໂອບໄວ້ ແລ້ວ ສົ່ງໄປໃຫ້ເຈົ້າຊີວິດອັສຊີເຣັຽ

17 ເຈົ້າຊີວິດອັສຊີເຣັຽໄດ້ຮັບສັ່ງໃຫ້ ທາຣ໌ຕານ ຣັບຊາຣິສ ຣັບຊາເກ ໄປພ້ອມກັບກອງທັບໃຫຍ່ຈາກເມືອງລາຄິສເຖິງກຸງ ເຢຣູຊາເລັມ ເຂົ້າເຝົ້າເຈົ້າຊີວິດເຮເຊກີຢາ ເມື່ອມາຮອດກຸງເຢຣູຊາເລັມ ພວກເຂົາກໍຕັ້ງທີ່ຫມັ້ນຢູ່ໃກ້ຮ່ອງນໍ້າເບື້ອງ ເຫນືອຢູ່ຕິດຖນົນໄປຫາບ່ອນຊັກຜ້າ

18 ແລ້ວພວກເຂົາກໍຖືກສົ່ງໄປຫາເຈົ້າເຮເຊກີຢາ ແລະໄດ້ມີຂ້າຣາຊການຊັ້ນຜູ້ໃຫຍ່ສາມທ່ານອອກມາພົບພວກເຂົາ ຄື
ເອລີອາກິມ ບຸດຮິນກີຢາ ຜູ້ຮັບຜິດຊອບໃນພຣະຣາຊວັງ ເຊັບນາ ພຣະຣາຊເລຂານຸການ ແລະໂຢອາ ບຸດອາສາບຜູ້ຊ
ຶ່ງບັນທຶກຣາຍງານວຽກທົ່ວໄປ
19 ຜູ້ນຶ່ງໃນບັນດານາຍທະຫານອັສຊີເຣັຽເວົ້າຕໍ່ບຸກຄົນທັງສາມວ່າ, “ເຈົ້າຊີວິດຍິ່ງໃຫຍ່ແຫ່ງອັສຊີເຣັຽມີພຣະປະສົງຢາກ
ຈະຮູ້ວ່າ ດ້ວຍເຫດໃດເຈົ້າເຮເຊກີຢາຈຶ່ງມີຄວາມເຊື່ອໝັ້ນໃນພຣະທັຍແທ້
20 ທ່ານຄິດວ່າຄຳເວົ້ານັ້ນເປັນຍຸດທະພັນ ແລະກຳລັງທະຫານໄດ້ຊັ້ນບໍ? ພວກເຈົ້າຄິດວ່າ ໃຜຈະເປັນຜູ້ຊ່ອຍໃນການ
ກະບົດຕໍ່ຕ້ານເຮົາ
21 ຂ້າພະເຈົ້າຮູ້ວ່າ ພວກທ່ານກຳລັງອາໄສປະເທດເອຢິບຊຶ່ງເປັນປະເທດທີ່ປຽບເຫມືອນໄມ້ອໍ້ທີ່ໃຊ້ເຮັດໄມ້ເທົ້າ ມີແຕ່
ມັນຈະຫັກແລະສຽບແທງມືຜູ້ທີ່ໃຊ້ ເຈົ້າຊີວິດແຫ່ງເອຢິບກໍປຽບເຫມືອນດັ່ງທີ່ກ່າວມານີ້ແຫລະ””
22 ນາຍທະຫານຜູ້ນັ້ນເວົ້າຕໍ່ໄປວ່າ, “ບາງທີທ່ານອາດຈະບອກຂ້າພະເຈົ້າວ່າ ພວກທ່ານເພິ່ງພາອາໄສພຣະຜູ້ເປັນເຈົ້າ
ຂອງພວກທ່ານ ແຕ່ເຈົ້າເຮເຊກີຢາເປັນຜູ້ທຳລາຍບ່ອນສັກສິດແລະແທ່ນບູຊາທັງຫມົດ ທັງໄດ້ເວົ້າຕໍ່ປະຊາຊົນຢູດາ
ແລະເຢຣູຊາເລັມໃຫ້ນະມັສການແທ່ນບູຊາໃນກຸງເຢຣູຊາເລັມເທົ່ານັ້ນ
23 ຂ້າພະເຈົ້າຂໍທ້າທາຍຕໍ່ທ່ານດ້ວຍພຣະນາມຂອງເຈົ້າຊີວິດຂອງຂ້າພະເຈົ້າວ່າ ຄັນຂ້າພະເຈົ້າຈະເອົາມ້າໃຫ້ສອງພັນ
ໂຕ ພວກທ່ານຈະຊອກຄົນມາຂີ່ໄດ້ບໍ?
24 ພວກທ່ານນັ້ນ ແມ່ນແຕ່ຈະຕີກັບທະຫານຜູ້ນ້ອຍຂອງອັສຊີເຣັຽກໍຍັງບໍ່ໄຫວແລ້ວ ປານນັ້ນຍັງຈະໃຫ້ພວກເອຢິບສົ່ງ
ຣົດຮົບ ແລະທະຫານມ້າມາຊ່ອຍຢູ່ບໍ?
25 ພວກທ່ານຄົງຄິດວ່າ ພວກຂ້າພະເຈົ້າໄດ້ເຂົ້າມາໂຈມຕີແລະທຳລາຍປະເທດຂອງທ່ານ ໂດຍປາສຈາກຄວາມຊ່ອຍ
ເຫລືອຈາກ  ພຣະຜູ້ເປັນເຈົ້າຊັ້ນບໍ? ແມ່ນພຣະຜູ້ເປັນເຈົ້າເອງທີ່ໄດ້ຊົງບອກໃຫ້ຂ້າພະເຈົ້າໂຈມຕີ ແລະທຳລາຍປະ
ເທດຂອງພວກທ່ານ”
26 ຕໍ່ມາ ເອລີອາກິມ ເຊັບນາ ແລະ ໂຢອາ ໄດ້ເວົ້າຕໍ່ນາຍທະຫານຜູ້ນັ້ນວ່າ, “ຢ່າເວົ້າເປັນພາສາເຮັບເຣີເລີຍ ກະຣຸນາເວົ້າ
ເປັນພາສາອາຣາມ ເພາະພວກຂ້າພະເຈົ້າເຂົ້າໃຈຢູ່ ແລະເພື່ອບໍ່ໃຫ້ປະຊາຊົນຢູ່ເທິງກຳແພງຮູ້ເລື່ອງນຳ
27 ແຕ່ນາຍທະຫານເວົ້າຕອບວ່າ, “ພວກທ່ານຄິດວ່າ ເຈົ້າຊີວິດຂອງຂ້າພະເຈົ້າສົ່ງຂ້າພະເຈົ້າມານີ້ ເພື່ອບອກເລື່ອງນີ້ແກ່
ເຈົ້າຊີວິດຫລືຕົວພວກທ່ານເອງເທົ່ານັ້ນບໍ? ຂ້າພະເຈົ້າຢາກເວົ້າໃຫ້ປະຊາຊົນທີ່ນັ່ງເທິງກຳແພງນັ້ນໄດ້ຍິນນຳ ເພາະ
ວ່າພວກເຂົາຈະກິນຂີ້ ແລະດື່ມນໍ້າຍ່ຽວຂອງຕົນເອງດັ່ງດຽວກັນກັບພວກທ່ານ”
28 ແລ້ວນາຍທະຫານຜູ້ນັ້ນກໍຢືນຂຶ້ນຮ້ອງສຽງດັງ ເປັນພາສາເຮັບເຣີວ່າ,
29 “ຈົ່ງຟັງຄຳບອກເລົ່າຂອງເຈົ້າຊີວິດອັສຊີເຣັຽອົງຍິ່ງໃຫຍ່ວ່າ ຢ່າໃຫ້ເຈົ້າເຮເຊກີຢາຕົບຕາພວກທ່ານເລີຍ ທ່ານຈະບໍ່
ມີອຳນາດໃດໆຊ່ອຍເຫລືອພວກທ່ານໃຫ້ພົ້ນໄດ້ດອກ
30 ຢ່າຍອມໃຫ້ເຈົ້າເຮເຊກີຢາຈູງດຶງພວກທ່ານເຂົ້າເພິ່ງພຣະຜູ້ເປັນເຈົ້າເລີຍ ຢ່າຄິດວ່າພຣະຜູ້ເປັນເຈົ້າຈະຊ່ອຍພວກ
ທ່ານໃຫ້ພົ້ນພັຍໄດ້ ແລະຈະບໍ່ໃຫ້ເມືອງນີ້ຕົກຢູ່ໃນອຳນາດຂອງເຈົ້າຊີວິດອັສຊີເຣັຽໄດ້
31 ຢ່າເຊື່ອຟັງເຈົ້າເຮເຊກີຢາເລີຍ ເຈົ້າຊີວິດອັສຊີເຣັຽໄດ້ອອກຄຳສັ່ງໃຫ້ພວກທ່ານອອກມາຍອມຈຳນົນ ແລ້ວພວກທ່ານ
ກໍຈະມີສ່ວນໄດ້ກິນຫມາກອະງຸ່ນ ແລະຫມາກເດື່ອ ແລະກໍຈະໄດ້ດື່ມນໍ້າໃນສ້າງຂອງຕົນເອງ
32 ຈົນກວ່າພຣະອົງຈະໄດ້ນຳພວກທ່ານໄປສູ່ປະເທດທີ່ເປັນເຫມືອນປະເທດຂອງພວກທ່ານເອງ ຄືປະເທດທີ່ມີເຂົ້າບເລ
ແລະນໍ້າອະງຸ່ນຢ່າງດີ ມີເຂົ້າຈີ່ ມີນໍ້າອະງຸ່ນ ມີນໍ້າມັນແລະນໍ້າເຜິ້ງ ເພື່ອວ່າພວກທ່ານຈະມີຊີວິດແລະຈະບໍ່ຕາຍ ຂໍຢ່າ
ຟັງຄຳຫລອກລວງຂອງເຈົ້າເຮເຊກີຢາທີ່ບອກວ່າ  ພຣະຜູ້ເປັນເຈົ້າຈະຊົງຊ່ອຍຊີວິດຂອງພວກທ່ານໄວ້
33 ມີພຣະເຈົ້າຂອງຊົນຊາດໃດທີ່ຈະຊ່ອຍເຫລືອປະເທດໃຫ້ພົ້ນຈາກອຳນາດຂອງເຈົ້າຊີວິດອັສຊີເຣັຽໄດ້?
34 ພຣະເຈົ້າຂອງເມືອງຮາມັທ ເມືອງອາຣ໌ປັດ ເມືອງເຊຟາຣ໌ວາອີມ ເມືອງເຮນາ ແລະເມືອງອີວວານັ້ນຢູ່ໃສແລ້ວດຽວນີ້?
ບໍ່ເຫັນວ່າມີອົງໃດຊ່ອຍເມືອງຊາມາເຣັຽໄດ້ແມ່ນບໍ?

35 ຈຶ່ງບອກຂ້າພະເຈົ້າແດ່ວ່າ ມີພຣະເຈົ້າຂອງປະເທດໃດໃນຈຳນວນພຣະເຈົ້າເຫລົ່ານີ້ທີ່ໄດ້ຊ່ອຍປະເທດຂອງຕົນໃຫ້ພົ້ນຈາກກຳມືຂອງເຈົ້າຊີວິດອັສຊີເຣັຽໄດ້ ແລ້ວເຫດໃດພວກເຈົ້າຈຶ່ງຄິດວ່າ ພຣະຜູ້ເປັນເຈົ້າຈຶ່ງຈະສາມາດຊ່ອຍກຸງເຢຣູຊາເລັມໃຫ້ພົ້ນພັຍໄດ້?”

36 ປະຊາຊົນໄດ້ພາກັນມິດຢູ່ ເພາະວ່າເຈົ້າເຮເຊກີຢາໄດ້ສັ່ງບໍ່ໃຫ້ພວກເຂົາຕອບຫຍັງຫມົດ

37 ເອລີອາກິມ ເຊັບນາ ແລະໂຢອາ ຕ່າງກໍຈີກເສື້ອຜ້າຂອງຕົນເອງດ້ວຍຄວາມເສັ້ງໃຈ ແລະພາກັນເຂົ້າໄປຂາບທູນຖ້ອຍຄຳຂອງຣັບຊາເກ

## 19 ເຮເຊກີຢາຂໍຄຳປຶກສາຈາກເອຊາຢາ

Hezekiah Consults Isaiah

(ອຊຢ 37:1-7)

1 ເມື່ອເຈົ້າເຮເຊກີຢາໄດ້ຍິນຄຳຣາຍງານ ພຣະອົງກໍຊົງຈີກເຄື່ອງນຸ່ງແລະຊົງໃສ່ເຄື່ອງໄວ້ທຸກ ແລ້ວສະເດັດໄປຍັງພຣະວິຫານຂອງ ພຣະຜູ້ເປັນເຈົ້າ

2 ພຣະອົງໄດ້ສົ່ງເອລີອາກິມຜູ້ຮັບຜິດຊອບວຽກງານທົ່ວໄປໃນພຣະຣາຊວັງ ເຊັບນາຣາຊເລຂານຸການ ພ້ອມທັງພວກມະຫາປະໂຣຫິດ ໄປຫາຜູ້ປະກາດພຣະທັມເອຊາຢາ ບຸດອາໂມສ ທຸກຄົນທີ່ພຣະອົງສົ່ງໄປນີ້ນຸ່ງເຄື່ອງໄວ້ທຸກ

3 ພວກນີ້ໄດ້ເວົ້າຕໍ່ເອຊາຢາວ່າ, “ເຮເຊກີຢາໄດ້ບອກດັ່ງນີ້ ວັນນີ້ເປັນວັນທີ່ທົນທຸກທໍຣະມານ ເປັນວັນແຫ່ງການລົງໂທດ ແລະເປັນວັນອັບອາຍຂາຍຫນ້າ ພວກຂ້າພະເຈົ້າເປັນເຫມືອນຍິງທີ່ກຳລັງຈະອອກລູກຊຶ່ງບໍ່ມີແຮງພໍຈະເບັ່ງລູກອອກ

4 ເຈົ້າຊີວິດອັສຊີເຣັຽໄດ້ສົ່ງທະຫານຂອງພຣະອົງມາ ເພື່ອເວົ້າຫມິ່ນປມາດພຣະເຈົ້າຜູ້ຊົງພຣະຊົນຢູ່ ຂໍໃຫ້ພຣະຜູ້ເປັນເຈົ້າຂອງທ່ານຊົງຮັບຟັງຄຳນີ້ ແລະລົງໂທດແກ່ຜູ້ທີ່ກ່າວນັ້ນ ຂໍໃຫ້ທ່ານຈົ່ງອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ເພື່ອບ່າວໄພ່ຂອງເຮົາຈະໄດ້ມີຊີວິດສືບຕໍ່ໄປ”

5 ເມື່ອເອຊາຢາຮັບຂ່າວຈາກເຈົ້າຊີວິດເຮເຊກີຢາແລ້ວ ທ່ານກໍຝາກຄຳຂາບທູນກັບເມືອວ່າ,

6 “ພຣະຜູ້ເປັນເຈົ້າຊົງບໍ່ໃຫ້ພຣະອົງຫວັ່ນໄຫວຕໍ່ຄຳກ່າວຫາທີ່ວ່າ ພຣະຜູ້ເປັນເຈົ້າບໍ່ສາມາດຊ່ອຍໃຫ້ພວກເຮົາພົ້ນພັຍໄດ້

7 ເຮົາຈະບັນຈຸຈິດໃຈຢ່າງນຶ່ງໃນເຂົາ ເພື່ອເຂົາຈະໄດ້ຍິນເລົ່າລື ແລ້ວພຣະອົງກໍຈະກັບຄືນເມືອປະເທດຂອງພຣະອົງເອງ ແລະພຣະຜູ້ເປັນເຈົ້າຈະໃຫ້ພຣະອົງຖືກຂ້າໃນປະເທດນັ້ນ”

### ອັສຊີເຣັຽສົ່ງຄົນມາຂົ່ມຂູ່ອີກ

Sennacherib’s Threat

(ອຊຢ 37:8-13)

8 ຣັບຊາເກໄດ້ກັບໄປ ແລະໄດ້ພົບເຈົ້າຊີວິດແຫ່ງອັສຊີເຣັຽສູ້ຣົບຢູ່ທີ່ເມືອງລິບນາ ເພາະເຂົາໄດ້ຍິນວ່າເຈົ້າຊີວິດອອກຈາກລາຄິສແລ້ວ

9 ແລະເມື່ອກະສັດຊົງຊາບກ່ຽວກັບຕີຣ໌ຮາ ຊາວເອທີໂອເປັຽກຳລັງມຸ່ງຫນ້າມາໂຈມຕີພວກຕົນ ພຣະອົງຈຶ່ງສົ່ງພວກຜູ້ສົ່ງຂ່າວໄປເຝົ້າເຈົ້າເຮເຊກີຢາທູນວ່າ,

10 “ຢ່າໃຫ້ພຣະເຈົ້າຜູ້ທີ່ທ່ານເພິ່ງພາອາສັຍນັ້ນຫລອກລວງທ່ານເລີຍ ວ່າກຸງເຢຣູຊາເລັມຈະບໍ່ຕົກຢູ່ໃນອຳນາດຂອງເຮົາ

11 ດຽວນີ້ທ່ານກໍໄດ້ຍິນແລ້ວວ່າ ບັນດາເຈົ້າຊີວິດອັສຊີເຣັຽໄດ້ປະຕິບັດຢ່າງໃດຕໍ່ປະເທດທັງຫລາຍ ທີ່ພຣະອົງມຸ່ງຫວັງທຳລາຍ ທ່ານຄິດວ່າຈະຫນີພົ້ນໄປໄດ້ຊັ້ນບໍ?

12 ພວກບັນດາບັນພະບຸຣຸດຂອງຂ້າພະເຈົ້າໄດ້ທຳລາຍທົ່ວເມືອງຕ່າງໆ ເຊັ່ນ ເມືອງໂກຊານ ເມືອງຮາຣານ ເມືອງເຣເຊບ ແລະໄດ້ຂ້າຊາວເອເດນທີ່ໄດ້ອາສັຍຢູ່ໃນເມືອງເຕລັສຊາ ແຕ່ບໍ່ເຫັນມີພຣະເຈົ້າອົງໃດຊ່ອຍຊົນຊາດຕ່າງໆນັ້ນໃຫ້ພົ້ນໄດ້

13 ສ່ວນເຈົ້າຊີວິດເມືອງຮາມັດ ເມືອງອາປັດ ເມືອງເຊຟາວາອິມ ເມືອງເຮນາ ແລະມືອງອີວວາໄປໃສຫມົດ?”

**ເຮເຊກີຢາອ້ອນວອນ**

Hezekiah’s Prayer

(ອຊຢ 37:14-35)

14 ເຈົ້າເຮເຊກີຢາຊົງຮັບເອົາພຣະຣາຊສານຈາກມືຂອງຜູ້ຖືສານມາອ່ານ ພຣະອົງໄດ້ຂຶ້ນໄປພຣະວິຫານຂອງພຣະຜູ້ເປັນ
ເຈົ້າ ແລ້ວແຜ່ແບຣາຊສານນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າ
15 ເຈົ້າເຮເຊກີຢາອ້ອນວອນພຣະຜູ້ເປັນເຈົ້າດັ່ງນີ້ວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ຜູ້ຊົງປະທັບຢູ່
ພຣະທີ່ນັ່ງໃນພຣະວິຫານອັນສັກສິດນີ້ ພຣະອົງເທົ່ານັ້ນທີ່ຊົງເປັນພຣະເຈົ້າຂອງຣາຊອານາຈັກທັງປວງໃນໂລກນີ້
16 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຫລຽວແລເບິ່ງເຫດການທີ່ເກີດຂຶ້ນກັບພວກຂ້າພຣະອົງໃນເວລານີ້ ຂໍຊົງຟັງຖ້ອຍຄຳຂອງ
ເຊນເນເກຣິບທີ່ເວົ້າຫມິ່ນປມາດພຣະອົງ ຜູ້ເປັນພຣະເຈົ້າອົງຊົງພຣະຊົນຢູ່
17 ພວກຂ້າພຣະອົງຮູ້ດີວ່າ ເຈົ້າຊີວິດອັສຊີເຣັຽໄດ້ທຳລາຍລ້າງຊົນຊາດຕ່າງໆໃຫ້ຫມົດສິ້ນໄປ ໄດ້ເຮັດໃຫ້ຜືນແຜ່ນດິນ
ຮ້າງເປົ່າ
18 ແລະໂຍນພຣະຂອງພວກເຂົາເຂົ້າໃນກອງໄຟ ພຣະເຫລົ່ານັ້ນບໍ່ແມ່ນພຣະແທ້ ແຕ່ມະນຸດໄດ້ສ້າງຂຶ້ນມາດ້ວຍໄມ້
ແລະຫີນ
19 ແຕ່ວ່າດຽວນີ້ ຂໍພຣະຜູ້ເປັນເຈົ້າຊົງຊ່ອຍພວກຂ້າພຣະອົງໃຫ້ພົ້ນຈາກພວກອັສຊີເຣັຽ ເພື່ອວ່າທຸກຊົນຊາດໃນໂລກນີ້
ຈະຮູ້ຈັກວ່າ ພຣະອົງເທົ່ານັ້ນທີ່ເປັນພຣະເຈົ້າອົງຍິ່ງໃຫຍ່“
20 ແລ້ວເອຊາຢາບຸດອາໂມສກໍສົ່ງຄວາມໄປທູນເຈົ້າເຮເຊກີຢາວ່າ “ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນຊົງກ່າວ
ດັ່ງນີ້ວ່າ “ເຮົາໄດ້ຍິນຄຳອ້ອນວອນຂອງເຈົ້າເຣື່ອງເຊນນາເກຣິບ ເຈົ້າຊີວິດແຫ່ງອັສຊີເຣັຽແລ້ວ
21 ຕໍ່ໄປນີ້ເປັນຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວກ່ຽວກັບທ່ານນັ້ນວ່າ, “ທິດາພົມມະຈາຣີແຫ່ງຊີໂອນ ຫມິ່ນປມາດເຈົ້າ
ແລະເຍາະເຍີ້ຍເຈົ້າ ທິດາແຫ່ງເຢຣູຊາເລັມສັ່ນຫົວຕາມຫລັງໃສ່ເຈົ້າ
22 ເຈົ້າເຍີ້ຍແລະກ່າວຄຳຫຍາບຊ້າຕໍ່ຜູ້ໃດ ເຈົ້າຂຶ້ນສຽງຂອງເຈົ້າຕໍ່ຜູ້ໃດ ແລ້ວເບິ່ງຕາຂອງເຈົ້າຢ່າງອວດໂອທັງຕໍ່ຜູ້ໃດ
ຕໍ່ອົງບໍຣິສຸດແຫ່ງອິສຣາເອນຊັ້ນບໍ?
23 ເຈົ້າໄດ້ເຍີ້ຍພຣະຜູ້ເປັນເຈົ້າ ດ້ວຍຜູ້ສົ່ງຂ່າວຂອງເຈົ້າ ແລະເຈົ້າໄດ້ວ່າ “ດ້ວຍຣົດຮົບທີ່ຫລວງຫລາຍຂອງຂ້າ ຂ້າໄດ້
ຂຶ້ນໄປພູທີ່ສູງ ເຖິງທີ່ໄກສຸດຂອງເລບານອນ ຂ້າໄດ້ຕັດຕົ້ນສົນທີ່ສູງທີ່ສຸດຂອງມັນລົງ ແລະຕົ້ນແປກຕົ້ນທີ່ງາມທີ່ສຸດ
ນັ້ນລົງ ຂ້າເຂົ້າໄປໃນເຖິງປ່າບ່ອນໄກແສນໄກ
24 ຂ້າໄດ້ຂຸດນ້ຳສ້າງ ແລະໄດ້ດື່ມນ້ຳຢູ່ຕ່າງແດນ ຂ້າເອົາຕີນຂອງຂ້າກວາດທານນ້ຳທັງສິ້ນຂອງເອຢິບໃຫ້ແຫ້ງໄປ”
25 ເຈົ້າບໍ່ໄດ້ຍິນບໍວ່າ ເຮົາໄດ້ຕຽມແຜນການໄວ້ແຕ່ດົນແລ້ວແລະດຽວນີ້ ເຮົາໄດ້ປະຕິບັດຕາມແຜນການນັ້ນຄື ເຮົາໃຫ້
ເຈົ້າມີອຳນາດເພື່ອທຳລາຍກຳແພງອັນແຫນ້ນຫນາໃຫ້ຫັກເພພັງລົງ
26 ຊາວເມືອງນັ້ນບໍ່ມີກຳແພງຕໍ່ສູ້ ມີແຕ່ຢ້ານກົວຕົວສັ່ນ ພວກເຂົາປຽບເຫມືອນຫຍ້າທີ່ຢູ່ໃນທົ່ງນາ ຫລືຫຍ້າອ່ອນທີ່ປົ່ງ
ຂຶ້ນຢູ່ເທິງຫລັງຄາເຮືອນ ທີ່ຖືກກະແສລົມຮ້ອນຈາກທິດຕາເວັນອອກພັດປິວໄປ
27 ແຕ່ເຮົາຮູ້ທຸກຢ່າງກ່ຽວກັບເຈົ້າ ບໍ່ວ່າເຈົ້າເຮັດຫຍັງຫລືໄປໃສ ເຮົາຮູ້ວ່າເຈົ້າຄຽດຊັງເຮົາຫລາຍ
28 ເພາະເຈົ້າໄດ້ຄຽດຊັງແລະອວດຈອງຫອງ ດັ່ງນັ້ນເຮົາຈະເອົາຂອງເກາະດັງເຈົ້າແລະເອົາໃຍໃສ່ປາກເຈົ້າ ແລະຈະໃຫ້
ເຈົ້າກັບຄືນເມືອທາງເສັ້ນເກົ່າ”
29 ແລ້ວເອຊາຢາກໍເວົ້າຕໍ່ເຈົ້າເຮເຊກີຢາວ່າ, “ເຫດການສຳຄັນທີ່ຈະເກີດຂຶ້ນມີດັ່ງນີ້ຄື ໃນປີນີ້ແລະປີຫນ້າ ພຣະອົງແລະ
ປະຊາຊົນຈະໄດ້ກິນແຕ່ພືດຜົນທີ່ເກີດຂຶ້ນຕາມປ່າໄມ້ເທົ່ານັ້ນ ແຕ່ໃນປີຕໍ່ໄປຈະໄດ້ຫວ່ານພືດແລະເກັບກ່ຽວ ຈະໄດ້
ປູກສວນອະງຸ່ນ ແລະໄດ້ກິນຫມາກຂອງມັນ
30 ຊາວຢູດາທີ່ຍັງເຫລືອຢູ່ນັ້ນ ຈະເປັນເຫມືອນຕົ້ນໄມ້ທີ່ຢັ່ງຮາກເຖິງເລິກລົງພື້ນດິນ ແລະຈະເກີດດອກອອກຜົນ

31 ທີ່ກຸງເຢຣູຊາເລັມແລະເທິງພູຊີໂອນຈະມີຄົນເຫລືອຢູ່ ຍ້ອນຄວາມກະຕືຣືລົ້ນຂອງພຣະຜູ້ເປັນເຈົ້າຈະກະທຳການນີ້
32 “ເຫດສັນນັ້ນພຣະຜູ້ເປັນເຈົ້າຊົງກ່າວກ່ຽວກັບເຈົ້າຊີວິດອັສຊີເຣັຽວ່າ, “ທ່ານຈະເຂົ້າໄປໃນເມືອງນີ້ ຫລືຈະຍິງລູກຫນ້າ
ທະນູໃສ່ກໍບໍ່ໄດ້ ທະຫານທີ່ມີແຜ່ນເຫລັກຕ້ານທານຈະເຂົ້າໃກ້ເມືອງນີ້ບໍ່ໄດ້ ແລະຈະກອງດິນປີນຂຶ້ນເມືອງນີ້ກໍບໍ່ໄດ້
33 ເຂົາຈະກັບຄືນເມືອຕາມທາງເສັ້ນເກົ່າທີ່ເຂົາມາ ແລະເຂົາຈະບໍ່ໄດ້ເຂົ້າໄປໃນເມືອງນີ້ ເພື່ອກຽດແລະສັກສີຂອງເຮົາ
34 ແລະເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ ເຮົາຈະປ້ອງກັນແລະປົກປັກຮັກສາໄວ້” ເຮົາພຣະຜູ້ເປັນເຈົ້າຊົງໄດ້ກ່າວ
ໄວ້ດັ່ງນີ້

Sennacherib’s Defeat and Death

(ອຊຢ 37:36-38; 2 ຂຄວ 32:20-23)

35 ໃນຄືນດຽວກັນນັ້ນ ທູດຂອງພຣະຜູ້ເປັນເຈົ້າໄດ້ລົງມາປະຫານຊີວິດພວກທະຫານ ນຶ່ງແສນແປດຫມື່ນຫ້າພັນຄົນທີ່
ຄ້າຍທະຫານ ອັສຊີເຣັຽ ຕື່ນເຊົ້າມື້ໃຫມ່ມາໄດ້ມີຊາກສົບນອນເດັ່ຽຣະດາດ
36 ແລ້ວເຊນນາເກຣິບ ເຈົ້າຊີວິດອັສຊີເຣັຽໄດ້ຖອຍທັບກັບຄືນສູ່ນະຄອນນີເນເວ
37 ວັນນຶ່ງ ເມື່ອພຣະອົງກຳລັງຂາບໄຫວ້ທີ່ວິຫານຂອງ ພຣະນິສຣົກພຣະເຈົ້າຂອງທ່ານ ອັດຣາມເມເລກແລະຊາເຣເຊີໂອ
ຣົດຂອງພຣະອົງໄດ້ໃຊ້ດາບປົງພຣະຊົນພຣະອົງເສັຽ ແລ້ວປົບຫນີໄປປະເທດອາຣາຣັດ ຕໍ່ມາໂອຣົດອີກອົງນຶ່ງຂອງພ
ຣະອົງທີ່ຊົງພຣະນາມວ່າ ເອຊາຣ໌ຮັດໂດນກໍຂຶ້ນຄອງຣາຊສົມບັດແທນ

## 20 ເອເຊກີຢາຊົງປະຊວນ

Hezekiah’s Illness

(2 ຂຄວ 32:24-26; ອຊຢ38:1-8)

1 ຄັ້ງນັ້ນເຮເຊກີຢາຊົງປະຊວນໃກ້ຈະສິ້ນພຣະຊົນ ແລະເອຊາຢາຜູ້ປະກາດພຣະທັມບຸດອາໂມສເຂົ້າມາເຝົ້າພຣະອົງ
ແລະທູນພຣະອົງວ່າ, “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ຈົ່ງຈັດການບ້ານການເມືອງຂອງເຈົ້າໃຫ້ຮຽບຮ້ອຍ ເຈົ້າຈະຕ້ອງ
ຕາຍ ເຈົ້າຈະບໍ່ຟື້ນ”
2 ແລ້ວເຮເຊກີຢາຊົງຫັນພຣະພັກເຂົ້າຂ້າງຝາ ແລະອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ,
3 “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຣະລຶກເຖິງວ່າ ຂ້າພຣະອົງດຳເນີນຢູ່ຕໍ່ເບື້ອງພຣະພັກພຣະອົງດ້ວຍຄວາມຊື່ສັດ ແລະ
ດ້ວຍສິ້ນສຸດໃຈ ແລະໄດ້ກະທຳສິ່ງທີ່ດີໃນສາຍພຣະເນດຂອງພຣະອົງ” ແລະເຮເຊກີຢາກໍຮ້ອງໄຫ້
4 ຕໍ່ມາກ່ອນທີ່ເອຊາຢາຈະອອກໄປເຖິງລານ ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງທ່ານວ່າ,
5 “ຈົ່ງກັບໄປບອກເຮເຊກີຢາເຈົ້ານາຍແຫ່ງປະຊາກອນຂອງເຮົາວ່າ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງດາວິດບັນພະບຸຣຸດ
ຂອງເຈົ້າ ກ່າວດັ່ງນີ້ວ່າ ເຮົາໄດ້ຍິນຄຳອ້ອນວອນຂອງເຈົ້າແລ້ວ ເຮົາໄດ້ເຫັນນ້ຳຕາຂອງເຈົ້າແລ້ວ ເຮົາຈະຮັກສາເຈົ້າ
ໃນວັນທີສາມເຈົ້າຈະເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
6 ເຮົາຈະເພີ້ມຊີວິດຂອງເຈົ້າອີກສິບຫ້າປີ ເຮົາຈະຊ່ອຍເຈົ້າໃຫ້ພົ້ນ ແລະເມືອງນີ້ຈາກມືຂອງເຈົ້າຊີວິດອັສຊີເຣັຽ ແລະ
ປ້ອງກັນເມືອງນີ້ໄວ້ ເພື່ອເຫັນແກ່ເຮົາເອງ ແລະເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ”
7 ແລະເອຊາຢາບອກວ່າ, “ເອົາເຂົ້າຫນົມຫມາກເດື່ອມາອັນນຶ່ງ ໃຫ້ເຂົາເອົາມາວາງໄວ້ເທິງພຣະຍອດນັ້ນເພື່ອພຣະອົງ
ຈະຊົງຫາຍເປັນປົກກະຕິ”
8 ເຮເຊກີຢາກ່າວກັບເອເຊຢາວ່າ, “ອັນໃດຈະເປັນຫມາຍສຳຄັນວ່າ ພຣະຜູ້ເປັນເຈົ້າຈະຊົງຮັກສາຂ້າພະເຈົ້າ ທີ່ພຣະຜູ້
ເປັນເຈົ້າຈະຊົງກະທຳຕາມທີ່ພຣະອົງຊົງສັນຍາໄວ້ ຄືວ່າຈະໃຫ້ເງົາຄືບຫນ້າໄປສິບຂັ້ນ ຫລືກັບຄືນມາສິບຂັ້ນ”
9 ເຮເຊກີຢາກ່າວຕອບວ່າ, “ເປັນການງ່າຍທີ່ເງົາຈະຍາວອອກໄປອີກສິບຂັ້ນ ແຕ່ໃຫ້ເງົາກັບຄືນມາສິບຂັ້ນຕ່າງຫາກ
10 ແລະເອຊາຢາຜູ້ປະກາດພຣະທັມກໍຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ ແລະພຣະອົງຊົງນຳເງົາກັບຄືນມາສິບຂັ້ນ ຊຶ່ງເງົານັ້ນ
ໄດ້ເລີຍໄປໃນໂມງແດດຂອງອາຮັສ

11 ຄາວນັ້ນ ເມໂຣດັກບາລາດານ ໂອຣົດຂອງບາລາດານເຈົ້າຊີວິດແຫ່ງບາບີໂລນຊົງສົ່ງຣາຊສານແລະເຄື່ອງບັນນາ
ການມາຍັງເຮເຊກີຢາ ເພາະພຣະອົງຊົງຊາບວ່າເຮເຊກີຢາຊົງປະຊວນ

**ເອເຊກີຢາຊົງຮັບຄນະທູດຈາກກຸງບາບີໂລນ** Envoys from Babylon

(ອຊຢ 39:1-8)

12 ແລະເຮເຊກີຢາໄດ້ຊົງຕ້ອນຮັບເຂົາແລະພຣະອົງຊົງພາເຂົາຊົມຄັງຊັບທັງຫມົດຂອງພຣະອົງ ໃຫ້ຊົມເງິນ ທອງຄຳ
ແລະເຄື່ອງເທດ ແລະນ້ຳມັນປະເສີດແລະຄັງພຣະແສງຂອງພຣະອົງທຸກຢ່າງຊຶ່ງມີໃນຫ້ອງພຣະຄັງ ບໍ່ມີສິ່ງໃດທີ່ໃນພ
ຣະຣາຊວັງຫລືໃນຣາຊອານາຈັກຂອງພຣະອົງທັງສິ້ນຊຶ່ງພຣະອົງບໍ່ໄດ້ສຳແດງແກ່ພຣະອົງ

13 ແລະເອຊາຢາຜູ້ປະກາດພຣະທັມກໍເຂົ້າເຝົ້າກະສັດເຮເຊກີຢາ ແລະທູນພຣະອົງວ່າ, "ຄົນເຫລົ່ານີ້ທູນສິ່ງໃດແດ່ ແລະ
ເຂົາມາເຝົ້າ ພຣະອົງແຕ່ໃສ? ແລະເຮເຊກີຢາກ່າວວ່າ, "ເຂົາໄດ້ມາຈາກເມືອງໄກ ຈາກບາບີໂລນ"

14 ທ່ານທູນວ່າ, "ເຂົາເຫັນຫຍັງແດ່ໃນພຣະຣາຊວັງຂອງພຣະອົງ? ແລະເຮເຊກີຢາກ່າວຕອບວ່າ, "ເຂົາເຫັນທຸກຢ່າງໃນ
ວັງຂອງເຮົາ ບໍ່ມີສິ່ງໃດໃນພຣະຄັງຂອງເຮົາຊຶ່ງເຮົາບໍ່ໄດ້ສຳແດງແກ່ເຂົາ"

15 ແລ້ວເອເຊຢາທູນເຮເຊກີຢາວ່າ, "ຂໍຊົງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ

16 ວັນເວລາກຳລັງຍ່າງເຂົ້າມາເມື່ອສັພສິ່ງທັງສິ້ນໃນວັງຂອງເຈົ້າ ແລະສິ່ງຊຶ່ງບັນພະບຸຣຸດຂອງເຈົ້າໄດ້ສະສົມຈົນເຖິງ
ທຸກວັນນີ້ຈະຕ້ອງຖືກເອົາໄປຍັງບາບີໂລນ ບໍ່ມີສິ່ງໃດເຫລືອເລີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

17 ແລະລູກບາງຄົນຊຶ່ງຖືກຳເນີດຈາກເຈົ້າ ຜູ້ຊຶ່ງເກີດແກ່ເຈົ້າຈະຖືກນຳເອົາໄປ ແລະເຂົາຈະໄປເປັນຂັນທີໃນພຣະຣາ
ຊວັງຂອງເຈົ້າຊີວິດບາບີໂລນ"

18 ແລ້ວເຮເຊກີຢາກ່າວກັບເອຊາຢາວ່າ, "ພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງທ່ານກ່າວນັ້ນກໍດີຢູ່" ເພາະພຣະອົງດຳຣິວ່າ,
"ກໍດີແລ້ວບໍ່ແມ່ນຫລື" ໃນເມື່ອມີຄວາມຢູ່ເຢັນເປັນສຸກ ແລະຄວາມປອດພັຍໃນວັນເວລາຂອງເຮົາ"

19 ສ່ວນພຣະຣາຊກິຈນອກນັ້ນຂອງເຮເຊກີຢາ ແລະຍຸດພະລັງທັງສິ້ນຂອງພຣະອົງ ແລະທີ່ພຣະອົງຊົງສ້າງສະ ແລະຮາງ
ລະບາຍນ້ຳນຳນ້ຳເຂົ້າມາໃນກຸງຢ່າງໃດ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດຢູດາຫລື

**ມໍຣະກັມຂອງເຮເຊກີຢາ**

Death of Hezekiah

(2 ຂຄວ 32:32-33)

20 ແລະເຮເຊກີຢາຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະມານັສເຊໂອຣົດຂອງພຣະອົງຂຶ້ນປົກຄອງແທນ
ພຣະອົງ

## 21 ຣັຊການມານັສເຊ

Manasseh Reigns over Judah

(2 ຂຄວ 33:1-20)

1 ມານັສເຊມີອາຍຸສິບສອງປີ ເມື່ອພຣະອົງຂຶ້ນປົກຄອງ ແລະພຣະອົງຊົງຄອບຄອງໃນກຸງເຢຣູຊາເລັມຫ້າສິບຫ້າປີ ພ
ຣະມານດາຂອງພຣະອົງມີພຣະນາມວ່າເຮບຊີບາ

2 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມການກະທຳອັນຫນ້າກຽດຊັງແຫ່ງປະຊາຊາດ
ຊຶ່ງພຣະຜູ້ເປັນເຈົ້າຊົງຂັບໄລ່ໃຫ້ອອກໄປໃຫ້ພົ້ນຫນ້າປະຊາຊົນອິສຣາເອນ

3 ເພາະພຣະອົງຊົງສ້າງບ່ອນນະມັສການສະຖານທີ່ສູງ ຊຶ່ງເຮເຊກີຢາພຣະຣາຊບິດາຂອງພຣະອົງຊົງທຳລາຍເສັຽນັ້ນ
ຂຶ້ນໃຫມ່ ແລະພຣະອົງຊົງສ້າງແທ່ນບູຊາສຳລັບພຣະບາອານ ແລະຊົງສ້າງອາເຊຣາ ດັ່ງທີ່ອາຮັບເຈົ້າຊີວິດແຫ່ງອິສ
ຣາເອນຊົງກະທຳ ແລະຊົງນະມັສການບໍຣິວານທັງສິ້ນຂອງຟ້າສວັນ ແລະບົວຣະບັດພຣະເຫລົ່ານັ້ນ

4 ພຣະອົງຊົງສ້າງແທ່ນບູຊາໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຊຶ່ງພຣະຜູ້ເປັນເຈົ້າໄດ້ກ່າວວ່າ, “ເຮົາຈະບັນຈຸຊື່ຂອງ
ເຮົາໄວ້ໃນເຢຣູຊາເລັມ”
5 ພຣະອົງໄດ້ສ້າງແທ່ນບູຊາສໍາລັບບໍຣິວານແຫ່ງຟ້າສວັນໃນເດີ່ນທັງສອງຂອງພຣະວິຫານແຫ່ງພຣະຜູ້ເປັນເຈົ້າ
6 ພຣະອົງໄດ້ຊົງເຜົາໂອຣົດຂອງພຣະອົງເປັນເຄື່ອງບູຊາ ຖືເລີກຖືຍາມເວດມົນ ຄົບຝຶກເວດມົນກົນຄາຖາ ແລະແມ່ມົດ
ພຣະອົງຊົງກະທໍາຄວາມຊົ່ວຮ້າຍຢ່າງໃຫຍ່ຫລວງໃນສາຍພຣະເນດພຣະຜູ້ເປັນເຈົ້າ ກະທໍາໃຫ້ພຣະອົງຊົງພຣະພິ
ໂຣດ
7 ສ່ວນອາເຊຣາອັນເປັນຮູບໂຄຣົບສລັກນັ້ນ ພຣະອົງຊົງຕັ້ງໄວ້ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຜູ້ຊຶ່ງກ່າວກັບດາ
ວິດແລະໂຊໂລໂມນໂອຣົດຂອງພຣະອົງວ່າ, “ໃນພຣະວິຫານນີ້ແລະໃນເຢຣູຊາເລັມ ຊຶ່ງເຮົາໄດ້ເລືອກອອກຈາກເຜົ່າ
ທັງສິ້ນຂອງອິສຣາເອນ ເຮົາຈະບັນຈຸນາມຂອງເຮົາໄວ້ເປັນນິດ
8 ເຮົາຈະບໍ່ໃຫ້ເປັນເຫດໃຫ້ຕີນຂອງອິສຣາເອນພະເນຈອນອອກໄປຈາກແຜ່ນດິນຊຶ່ງເຮົາໄດ້ໃຫ້ກັບບັນພະບຸຣຸດຂອງ
ເຂົາອີກ ຖ້າເຂົາພຽງແຕ່ລະມັດລະວັງທີ່ຈະກະທໍາຕາມທຸກຢ່າງ ຊຶ່ງເຮົາໄດ້ບັນຊາເຂົາແລະຕາມທັມບັນຍັດທັງສິ້ນ ຊຶ່ງ
ໂມເຊຜູ້ຮັບໃຊ້ຂອງເຮົາບັນຊາເຂົາ
9 ແຕ່ເຂົາບໍ່ໄດ້ຟັງ ແລະມານັສເຊໄດ້ຊັກຈູງເຂົາໃຫ້ທໍາຊົ່ວຫລາຍຍິ່ງໄປກວ່າບັນດາປະຊາຊາດຊຶ່ງພຣະຜູ້ເປັນເຈົ້າຊົງ
ທໍາລາຍເສັຽຕໍ່ຫນ້າປະຊາຊົນອິສຣາເອນໄດ້ເຄີຍກະທໍາແລ້ວເສັຽອີກ
10 ພຣະຜູ້ເປັນເຈົ້າກ່າວໂດຍຜູ້ປະກາດພຣະທັມຜູ້ຮັບໃຊ້ຂອງພຣະອົງວ່າ,
11 “ເພາະມານັສເຊເຈົ້າຊີວິດແຫ່ງຢູດາໄດ້ກະທໍາການຫນ້າກຽດຊັງເຫລົ່ານີ້ ແລະໄດ້ກະທໍາສິ່ງຊົ່ວຮ້າຍຫລາຍຍິ່ງກວ່າ
ຄົນອາໂມຣິດໄດ້ກະທໍາທັງສິ້ນ ຜູ້ຊຶ່ງຢູ່ກ່ອນພຣະອົງ ແລະໄດ້ຊົງກະທໍາໃຫ້ຢູດາທໍາບາບຫລາຍດ້ວຍຮູບໂຄຣົບຂອງພ
ຣະອົງ
12 ເຫດສັນນັ້ນພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຮົາກໍາລັງນໍາເຫດຮ້າຍມາເຖິງເຢຣູຊາເລັມແລະ
ຢູດາ ຢ່າງທີ່ທຸກຄົນຊຶ່ງໄດ້ຍິນແລ້ວຫູທັງສອງຂອງເຂົາຈະອື້ໄປ
13 ແລະເຮົາຈະເອົາເຊືອກດັ່ງທີ່ວັດກຸງຊາມາເຣັຽຄຶງເຫນືອກຸງເຢຣູຊາເລັມ ແລະໃຊ້ລູກກະດິ່ງດັ່ງທີ່ວັດຣາຊວົງອາຮາບ
ແລະເຮົາຈະລ້າງເຢຣູຊາເລັມດັ່ງເຂົາລ້າງຊາມແລະພິກຂວ້ໍາ
14 ແລະເຮົາຈະແກວ່ງມໍຣະດົກສ່ວນທີ່ເຫລືອຂອງເຮົາອອກໄປເສັຽ ແລະມອບເຂົາໄວ້ໃນມືສັດຕຣູຂອງເຂົາ ແລະເຂົາທັງ
ຫລາຍຈະເປັນເຫຍື່ອແລະເປັນຂອງຖືກຍຶດຂອງສັດຕຣູທັງສິ້ນຂອງເຂົາ
15 ເພາະເຂົາໄດ້ກະທໍາສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງເຮົາ ແລະໄດ້ກະທໍາໃຫ້ເຮົາພິໂຣດ ຕັ້ງແຕ່ວັນທີ່ບັນພະບຸຣຸດຂອງ
ເຂົາອອກຈາກເອຢິບ ຈົນເຖິງທຸກວັນນີ້”
16 ນອກຈາກນີ້ມານັສເຊໄດ້ຊົງກະທໍາໃຫ້ໂລຫິດບໍ່ມີຄວາມຜິດຕົກຫລາຍຈົນເຕັມເຢຣູຊາເລັມຈາກຂ້າງນຶ່ງເຖິງອີກຂ້າງ
ນຶ່ງ ນອກເຫນືອຈາກບາບທີ່ພຣະອົງຊົງກະທໍາໃຫ້ຢູດາທໍາດ້ວຍ ໂດຍປະພຶດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັ
ນເຈົ້າ
17 ສ່ວນພຣະຣາຊກິຈນອກນັ້ນຂອງມານັສເຊ ແລະບັນດາສິ່ງຊຶ່ງພຣະອົງຊົງກະທໍາ ແລະບາບຊຶ່ງພຣະອົງຊົງກະທໍາ ບໍ່
ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາຊາປະເທດຢູດາຫລື
18 ແລະມານັສເຊຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຂົາຝັງໄວ້ໃນພຣະອຸທຍານແຄມວັງຂອງພຣະ
ອົງໃນສວນຂອງອຸສຊາ ແລະອາໂມນໂອຣົດຂອງພຣະອົງໄດ້ຂຶ້ນປົກຄອງແທນພຣະອົງ

**ຣັຊການອາໂມນ**

Amon Reigns over Judah

(2 ຂຄວ 33:21-25)

19 ອາໂມນມີອາຍຸຊາວສອງປີ ເມື່ອພຣະອົງເລີ່ມປົກຄອງແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສອງປີ ພຣະມານ
ດາຂອງພຣະອົງມີພຣະນາມວ່າເມຊຸນເລເມທ ບຸດຕຣີຂອງຮາຣຸສຊາວໂຢດບາ
20 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຢ່າງມານັສເຊບິດາຂອງພຣະອົງໄດ້ຊົງກະທຳ
21 ພຣະອົງຊົງດຳເນີນໃນທາງທັງສິ້ນຊຶ່ງບິດາຂອງພຣະອົງຊົງດຳເນີນ ແລະບົວລະບັດຮູບໂຄຣົບຊຶ່ງບິດາຂອງພຣະອົງຊົງ
ບົວລະບັດ ແລະນະມັສການຮູບເຫລົ່ານັ້ນ
22 ພຣະອົງຊົງປະຖິ້ມພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນຂອງພຣະອົງແລະບໍ່ໄດ້ຊົງດຳເນີນໃນທາງຂອງພຣະຜູ້
ເປັນເຈົ້າ
23 ແລະຂ້າຣາຊການຂອງອາໂມນໄດ້ຮ່ວມກັນຄິດກະບົດຕໍ່ພຣະອົງ ແລະປະຫານເຈົ້າຊີວິດໃນພຣະຣາຊວັງຂອງພຣະ
ອົງເສັຽ
24 ແຕ່ປະຊາຊົນໄດ້ປະຫານທຸກຄົນທີ່ຮ່ວມກັນຄິດກະບົດຕໍ່ກະສັດອາໂມນ ແລະປະຊາຊົນໄດ້ຕັ້ງໂຢຊີຢາໂອຣົດຂອງພ
ຣະອົງໃຫ້ເປັນເຈົ້າຊີວິດແທນພຣະອົງ
25 ສ່ວນພຣະຣາຊກິຈນອກນັ້ນຂອງອາໂມນຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານແຫ່ງພຣະຣາ
ຊາປະເທດຢູດາຫລື?
26 ແລະເຂົາຝັງໄວ້ໃນອຸບໂມງຂອງພຣະອົງໃນສວນຂອງອຸສຊາ ແລະໂຢຊີຢາໂອຣົດຂອງພຣະອົງໄດ້ປົກຄອງແທນພ
ຣະອົງ

## 22 ຣັຊການຂອງໂຢຊີຢາ

Josiah Reigns over Judah

(2 ຂຄວ 34:1-2)

1 ໂຢຊີຢາຂຶ້ນເປັນກະສັດຢູດາ ເມື່ອພຣະອົງມີອາຍຸໄດ້ແປດປີ ພຣະອົງຊົງປົກຄອງພຣະຣາຊບັນລັງເຢຣູຊາເລັມສາມ
ສິບເອັດປີ ມານດາຂອງພຣະອົງຊົງພຣະນາມວ່າ ເຢດີດາ ເປັນຣາຊທິດາຂອງອາດັຍຢາ ແລະເປັນຊາວເມືອງໂບສກັ
ທ
2 ພຣະອົງປະຕິບັດຕົນຕາມພຣະປະສົງຂອງພຣະຜູ້ເປັນເຈົ້າ ຊົງນັບຖືແລະດຳເນີນຕາມແບບຢ່າງ ດາວິດ ຜູ້ເປັນບັນ
ພະບຸຣຸດຂອງ ພຣະອົງ ແລະເຊື່ອຟັງພຣະບັນຍັດຂອງພຣະເຈົ້າທຸກຢ່າງ

### ປະໂຣຫິດຮີນກີຢາພົບປຶ້ມພຣະທັມ

Hilkiah Finds the Book of the Law

(2 ຂຄວ 34:8-28)

3 ໃນຣັຊການປີທີສິບແປດຂອງເຈົ້າຊີວິດໂຢຊີຢາ ພຣະອົງໄດ້ສົ່ງຣາຊເລຂາ ຊາຟານ ຜູ້ເປັນບຸດອາຊາລີຢາບຸດເມຊຸນ
ລາມໄປຍັງ ພຣະວິຫານຂອງພຣະຜູ້ເປັນເຈົ້າ ຮັບສັ່ງວ່າ,
4 "ເຈົ້າຈົ່ງໄປຫາຮີນກີຢາມະຫາປະໂຣຫິດ ແລະບອກໃຫ້ທ່ານຣາຍງານເງິນທີ່ພວກປະໂຣຫິດໄດ້ເກັບຈາກປະຊາຊົນ
ໃນທາງເຂົ້າວິຫານ
5 ບອກໃຫ້ທ່ານເອົາເງິນໃຫ້ພວກຫົວຫນ້າຄົນງານປະຈຳພຣະວິຫານ ເພື່ອໃຫ້ພວກຄົນງານສ້ອມແຊມພຣະວິຫານ
6 ເຊັ່ນພວກຊ່າງໄມ້ ຊ່າງກໍ່ ແລະຊ່າງປູນ ໄປຊື້ໄມ້ ແລະກ້ອນຫີນສຳລັບສ້ອມແຊມພຣະວິຫານໃຫມ່
7 ບໍ່ຕ້ອງໃຫ້ເຂົາເຮັດບັນຊີຣາຍຈ່າຍເງິນນີ້ ເພາະພວກເຂົາທີ່ເຮັດວຽກຢູ່ບ່ອນນັ້ນເປັນຄົນສັດຊື່"
8 ຊາຟານໄດ້ນຳເອົາຄຳສັ່ງຂອງເຈົ້າຊີວິດໄປບອກປະໂຣຫິດຮີນກີຢາ ແລ້ວຮີນກີຢາເລີຍບອກຊາຟານວ່າ, "ຂ້າພະເຈົ້າ
ໄດ້ພົບປຶ້ມ ພຣະທັມຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ" ແລ້ວຮີນກີຢາກໍໄດ້ເອົາປຶ້ມຫົວນັ້ນໃຫ້ຊາຟານອ່ານ

9 ຊາຟານໄດ້ກັບຄືນເມືອຣາຍງານຕໍ່ເຈົ້າຊີວິດວ່າ, “ຂ້າໃຊ້ຂອງພຣະອົງໄດ້ເອົາເງິນທີ່ຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ໃຫ້ແກ່ຫົວຫນ້າຄົນງານທີ່ປະຈຳການຢູ່ທີ່ນັ້ນແລ້ວ”
10 ແລ້ວຊາຟານຂາບທູນຕໍ່ໄປອີກວ່າ, “ປະໂຣຫິດຮິນກີຢາໄດ້ເອົາປຶ້ມນີ້ໃຫ້ຂ້ານ້ອຍ” ແລ້ວທ່ານກໍອ່ານໃຫ້ເຈົ້າຊີວິດຟັງ
11 ເມື່ອເຈົ້າຊີວິດໄດ້ຍິນເນື້ອຄວາມໃນພຣະທັມ ພຣະອົງກໍຊົງຈີກເຄື່ອງສລອງຂອງພຣະອົງຍ້ອນເສັ່ງພຣະທັຍ
12 ແລ້ວຊົງຮັບສັ່ງປະໂຣຫິດຮິນກີຢາ ອາຮີກາມບຸດຊາຟານ ອັກໂບຣ໌ ບຸດມີກັຍຢາ ຊາຟານຣາຊເລຂາ ແລະອາຊັຍຢາຜູ້ຮັບໃຊ້ຂອງເຈົ້າຊີວິດ ຮັບສັ່ງວ່າ,
13 “ຈົ່ງພາກັນທູນຕໍ່ພຣະຜູ້ເປັນເຈົ້າແທນເຮົາ ແລະປະຊາຊົນຢູດາທຸກຄົນກ່ຽວກັບຄຳສອນທີ່ມີຢູ່ໃນປຶ້ມນັ້ນ ເຣື່ອງໃຫຍ່ແທ້ແມ່ນພຣະເຈົ້າຊົງພຣະພິໂຣດພວກເຮົາ ຍ້ອນວ່າບັນພະບຸຣຸດຂອງພວກເຮົາບໍ່ປະຕິບັດຕາມຖ້ອຍຄຳທີ່ຂຽນໄວ້ໃນປຶ້ມນີ້”
14 ປະໂຣຫິດຮິນກີຢາ ອາຮີກາມ ອັກໂບຣ໌ ຊາຟານ ແລະອາຊັຍຢາກໍພາກັນໄປຫາຜູ້ປະກາດພຣະທັມຍິງທີ່ຊື່ວ່າ ຮຸນດາພັຣຍາຂອງຊັນລູມ ບຸດຂອງຕິກວາ ບຸດຮາຣ໌ຮັສ ເປັນຜູ້ຮັກສາເຄື່ອງນຸ່ງຖືປະຈຳພຣະວິຫານ ເວລານັ້ນນາງຢູ່ໃນກຸງເຢຣູຊາເລັມເຂດເມືອງໃຫມ່ ແລະເຂົາທັງຫລາຍໄດ້ສົນທະນາກັບນາງ
15 ແລະນາງຕອບເຂົາວ່າ, “ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ “ຈົ່ງໄປບອກຊາຍຄົນທີ່ໃຊ້ເຈົ້າມາຫາເຮົານັ້ນວ່າ
16 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເຮົາຈະລົງໂທດກຸງເຢຣູຊາເລັມຕລອດທັງປະຊາຊົນທຸກຄົນ ຕາມເນື້ອຄວາມຢູ່ໃນປຶ້ມທີ່ເຈົ້າຊີວິດຢູດາໄດ້ອ່ານນັ້ນ
17 ພວກເຂົາໄດ້ເຫີນຫ່າງເຮົາໄປຖວາຍບູຊາພຣະອື່ນ ຊຶ່ງເປັນການຍົວະເຍົ້າໃຫ້ເຮົາຄຽດຮ້າຍເຂົາ ຄວາມຄຽດຮ້າຍຂອງເຮົາໄດ້ຕົກໃສ່ກຸງເຢຣູຊາເລັມໂດຍຈະບໍ່ເຊົາງ່າຍ
18 ສ່ວນເຈົ້າຊີວິດ ເຮົາພຣະຜູ້ເປັນເຈົ້າແຫ່ງອິສຣາເອນຂໍກ່າວດັ່ງນີ້ວ່າ ເມື່ອເຈົ້າໄດ້ຟັງຖ້ອຍຄຳທຸກຂໍ້ທີ່ຂຽນໄວ້ໃນປຶ້ມນີ້ແລ້ວ
19 ເຈົ້າມີຄວາມແທນງໃຈ ແລະຖ່ອມຕົວລົງຕໍ່ຫນ້າເຮົາ ທັງໄດ້ຈີກເສື້ອຜ້າແລະຮ້ອງໄຫ້ ໃນເມື່ອເຈົ້າໄດ້ຍິນວ່າ ເຮົາຈະລົງໂທດກຸງເຢຣູຊາເລັມຕລອດທັງປະຊາຊົນ ເຮົາຈະທຳໃຫ້ສະຖານທີ່ນີ້ເປັນຫນ້າລັງກຽດແລະຖືກສາບແຊ່ງ
20 ຍ້ອນວ່າ ເຮົາໄດ້ຍິນຄຳອ້ອນວອນຂອງເຈົ້າແລ້ວ ເຮົາຈະບໍ່ໃຫ້ມີການລົງໂທດແບບນີ້ຕລອດຊົ່ວຊີວິດຂອງເຈົ້າ ເຈົ້າຈະຕາຍໄປຢ່າງສງົບສຸກ” ພວກເຂົາໄດ້ນຳເອົາຄຳຕອບນີ້ເມືອກາບບັງຄົມທູນເຈົ້າຊີວິດ

## 23 ການປະຕິຍານຕົວຕໍ່ພຣະພັກພຣະເຈົ້າ

Josiah’s reformation

(2 ຂຄວ 34:29-33)

1 ເຈົ້າຊີວິດຊົງປ່າວປະກາດເອີ້ນເອົາພວກເຖົ້າແກ່ຊາວຢູດາແລະຊາວເຢຣູຊາເລັມມາ
2 ແລ້ວພຣະອົງພ້ອມທັງພວກເຖົ້າແກ່ ພວກປະໂຣຫິດພ້ອມພວກຜູ້ປະກາດພຣະທັມ ແລະປະຊາຊົນທຸກຄົນທັງຜູ້ທຸກຍາກແລະຮັ່ງມີ ກໍຂຶ້ນໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະອົງຊົງອ່ານຖ້ອຍຄຳທຸກຂໍ້ທີ່ກ່າວໄວ້ໃນປຶ້ມ ຄຳຫມັ້ນສັນຍາທີ່ຄົ້ນພົບຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າສູ່ທຸກຄົນຟັງ
3 ເຈົ້າຊີວິດຊົງຢືນຢູ່ຂ້າງເສົາແລະໄດ້ໃຫ້ຄຳຫມັ້ນສັນຍາຕໍ່ພຣະຜູ້ເປັນເຈົ້າວ່າ ຈະຖືຮັກສາຄຳສັ່ງແລະພຣະທັມຂອງພຣະອົງດ້ວຍສຸດຈິດສຸດໃຈ ເພື່ອເຮັດຕາມຂໍ້ຄວາມໃນຄຳຫມັ້ນສັນຍາທີ່ຂຽນໄວ້ໃນປຶ້ມຫົວນັ້ນ ປະຊາຊົນທຸກຄົນກໍພາກັນໃຫ້ຄຳປະຕິຍານວ່າ ຈະຖືຮັກສາຄຳຫມັ້ນສັນຍານັ້ນ
4 ຕໍ່ມາເຈົ້າຊີວິດໄດ້ຊົງຮັບສັ່ງ ຮິນກີຢາມະຫາປະໂຣຫິດ ພວກປະໂຣຫິດຜູ້ຮອງແລະພວກຜູ້ເຝົ້າປະຕູ ໃຫ້ຍົກຍ້າຍສິ່ງຂອງທຸກຢ່າງທີ່ໃຊ້ສຳລັບຂາບໄຫວ້ພຣະບາອານ ພຣະອາເຊຣາ ແລະດວງດາວຕ່າງໆອອກຈາກພຣະວິຫານໄປ ພ

ຣະອິງໄດ້ເຜົາສິ່ງຂອງເຫລົ່ານີ້ຢູ່ໃກ້ຮ່ອມພູກິດໂຣນນອກກຸງເຢຣູຊາເລັມ ແລ້ວຊົງໃຫ້ເຂົາຫຸບເອົາຂີ້ຝຸ່ນຂອງມັນ
ໄປເມືອງເບັດເອນ
5 ພຣະອົງໄດ້ຂັບໄລ່ພວກປະໂຣຫິດຈອມປອມ ທີ່ເຈົ້າຊີວິດຢູດາໄດ້ແຕ່ງຕັ້ງໃຫ້ຖວາຍເຄື່ອງບູຊາ ຢູ່ໃນບ່ອນສັກສິດ
ຕ່າງໆຢູ່ໃນເມືອງຢູດາ ແລະຢູ່ໃນບ້ານໃກ້ຄຽງກຸງເຢຣູຊາເລັມ ຄືພວກທີ່ຖວາຍເຄື່ອງບູຊາແກ່ພຣະບາອານ ພຣະອາ
ທິດ ພຣະຈັນ ແລະດວງດາວຕ່າງໆ
6 ທ່ານໄດ້ຍ້າຍເສົາຫີນສັກສິດໃນພຣະວິຫານຂອງພຣະຜູ້ເປັນເຈົ້າອອກຈາກກຸງເຢຣູຊາເລັມ ແລ້ວເອົາໄປໄວ້ໃນຮ່ອມ
ພູກິດໂຣນ ແລະໄດ້ເຜົາມັນຢູ່ທີ່ນັ້ນແລ້ວໄດ້ຕີໃຫ້ມັນມຸ່ນເປັນຂີ້ເທົ່າໂຮຍໃສ່ຂຸມຝັງສົບຄົນທຳມະດາ
7 ພຣະອົງໄດ້ທຳລາຍບ່ອນຢູ່ຂອງພວກໂສເພນີ ໃນພຣະວິຫານຂອງພຣະຜູ້ເປັນເຈົ້າ (ຊຶ່ງເປັນບ່ອນທີ່ພວກຜູ້ຍິງຕ່ຳເສື້ອ
ໃຫ້ອາເຊຣາ) ( ກະສັດເຈມ໌=ແລະພຣະອົງຊົງທຳລາຍເຮືອນກະເທີຍ…)
8 ພຣະອົງນຳເອົາພວກປະໂຣຫິດທຸກຄົນໃນເມືອງຢູດາແລະທົ່ວປະເທດມາຍັງກຸງເຢຣູຊາເລັມ ແລ້ວທຳລາຍສະຖານທີ່
ສັກສິດໃຫ້ເສັຽຄວາມສັກສິດ ຄືບ່ອນທີ່ພວກປະໂຣຫິດເຫລົ່ານັ້ນຖວາຍເຄື່ອງບູຊາຕັ້ງແຕ່ເມືອງເກບາເຖິງເບເອີເຊບາ
ພຣະອົງຍັງໄດ້ທຳລາຍຫໍຜີຮ້າຍຢູ່ໃກ້ປະຕູເມືອງທີ່ໂຢຊວຍ ຜູ້ປົກຄອງເມືອງໄດ້ສ້າງໄວ້ ຫໍຜີນັ້ນຢູ່ທາງເບື້ອງຊ້າຍຂອງ
ປະຕູໃຫຍ່ທາງເຂົ້າເມືອງ
9 ພວກປະໂຣຫິດເຫລົ່ານີ້ໄປຮັບໃຊ້ທີ່ພຣະວິຫານບໍ່ໄດ້ ແຕ່ໄດ້ຮັບອະນຸຍາດໃຫ້ກິນເຂົ້າຈີ່ບໍ່ໃສ່ເຊື້ອແປ້ງເຫມືອນດັ່ງປະ
ໂຣຫິດອື່ນໆໄດ້
10 ພຣະອົງໄດ້ທຳລາຍເຕົາເຜົາບູຊາໃນຮ່ອມພູ ເບນຮິນໂນມ ເພື່ອວ່າຈະບໍ່ມີຜູ້ໃດເອົາລູກຫລານ ຫລືບຸດສາວຂອງຕົນ
ໄປເຜົາຖວາຍບູຊາ ພຣະໂມເລກ
11 ພຣະອົງໄດ້ເອົາມ້າທີ່ເຈົ້າຊີວິດຢູດາໄດ້ອຸທິດຖວາຍແກ່ພຣະອາທິດນັ້ນຫນີ ພ້ອມທັງເຜົາຣົດທີ່ໃຊ້ໃນເວລາຂາບໄຫວ້
ພຣະອາທິດ ມ້າກັບຣົດນີ້ໄດ້ຢູ່ໃນເດີ່ນພຣະວິຫານໃກ້ໆປະຕູ ແລະໃກ້ບ່ອນຢູ່ຂອງກົມມະວັງນາທານເມເລກ
12 ພຣະອົງໄດ້ທຳລາຍແທ່ນບູຊາທີ່ເຈົ້າຊີວິດຢູດາ ໄດ້ສ້າງໄວ້ເທິງຫລັງຄາພຽງພຣະຣາຊວັງ ຢູ່ເຫນືອພຣະຣາຊສຳນັກ
ຂອງເຈົ້າຊີວິດ ອາຮັສພ້ອມທັງແທ່ນບູຊາສອງບ່ອນທີ່ ມານັສເຊໄດ້ສ້າງໄວ້ໃນເດີ່ນພຣະວິຫານ ພຣະອົງໄດ້ທຳລາຍ
ມັນເສັຽຫາຍຫມົດ ແລ້ວເອົາໄປຖິ້ມລົງໃນຮ່ອມພູກິດໂຣນ
13 ແລະເຈົ້າຊີວິດໄດ້ທຳລາຍແທ່ນບູຊາທີ່ໂຊໂລໂມນໄດ້ສ້າງຂຶ້ນຢູ່ທາງທິດຕາເວັນອອກຂອງກຸງເຢຣູຊາເລັມ ຢູ່ທາງທິດ
ໃຕ້ຂອງພູຫມາກກອກເທດ ແທ່ນນີ້ເຂົາໄດ້ສ້າງໄວ້ສຳລັບຂາບໄຫວ້ ຮູບໂຄຣົບທີ່ຫນ້າກຽດຊັງ ຄືພຣະອັສຕາຣ໌ເຕ
ຂອງຊາວຊີໂດນ ພຣະເກໂມສຂອງຊາວໂມອາບ ແລະພຣະໂມເລກຂອງຊາວອັມໂມນ
14 ພຣະອົງຍັງໄດ້ທຳລາຍເສົາຫີນສັກສິດລົງ ແລະຕັດຫລັກໄມ້ສັກສິດອີກ ແລ້ວເອົາກະດູກຄົນຖິ້ມໄວ້ໃນບ່ອນນັ້ນທັງ
ຫມົດ
15 ນອກຈາກນີ້ພຣະອົງຍັງໄດ້ທຳລາຍບ່ອນນະມັສການທີ່ເບັດເອນ ຊຶ່ງເປັນສະຖານທີ່ເຢໂຣໂບອາມບຸດເນບັດໄດ້ສ້າງ
ໄວ້ ແລະພາຊາວອິສຣາເອນທຳຢູ່ທີ່ນັ້ນ ພຣະອົງໄດ້ທຳລາຍແທ່ນບູຊາຈົນມຸ່ນແລະຈູດຫລັກສັກສິດທີ່ສ້າງບູຊາພຣະ
ອາເຊຣາ
16 ເມື່ອໂຢຊີຢາຫລຽວອ້ອມໄປມາກໍຊົງເຫັນຂຸມຝັງສົບຢູ່ຂ້າງພູນ້ອຍ ພຣະອົງຈຶ່ງຊົງເອົາກະດູກຄົນຈາກຂຸມຝັງສົບນັ້ນ
ມາເຜົາເທິງແທ່ນບູຊາ ເພື່ອໃຫ້ແທ່ນບູຊານັ້ນເສັຽຄວາມສັກສິດ ຊຶ່ງເປັນໄປຕາມພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງ
ຄົນແຫ່ງພຣະເຈົ້າໄດ້ປະກາດໄວ້ໃນສມັຍກ່ອນໆ ຜູ້ຊຶ່ງປ່າວຮ້ອງທຳນວາຍເຖິງສິ່ງເຫລົ່ານີ້
17 ພຣະອົງຈຶ່ງຊົງຖາມວ່າ, "ບ່ອນນີ້ແມ່ນຂຸມຝັງສົບຂອງໃຜ?" ຊາວເມືອງເບັດເອນຈຶ່ງທູນຕອບວ່າ, "ແມ່ນຂຸມຝັງສົບຜູ້
ປະກາດພຣະທັມຊາວຢູດາ ຊຶ່ງເປັນຜູ້ທຳນວາຍສິ່ງທີ່ພຣະອົງກຳລັງທຳຢູ່ນີ້"
18 ເຈົ້າຊີວິດຈຶ່ງສັ່ງວ່າ, "ຖ້າເຊັ່ນນັ້ນ ປະໄວ້ທັ້ນແຫລະ, ຢ່າໃຫ້ໃຜໄປລົບກວນກະດູກຂອງທ່ານເດີ" ດັ່ງນັ້ນ ພວກເຂົາຈຶ່ງ
ບໍ່ແຕະຕ້ອງກະດູກນັ້ນ ພ້ອມທັງກະດູກຂອງຜູ້ປະກາດພຣະທັມຊາວຊາມາເຣັຽ

19 ໂຢຊີຢາຍັງໄດ້ທຳລາຍບ່ອນສັກກາລະບູຊາທັງຫມົດຢູ່ເທິງບ່ອນສັກສິດທີ່ເຈົ້າຊີວິດອິສຣາເອນໄດ້ສ້າງໄວ້ໃນທຸກໆຫົວ
ເມືອງ ເພາະການນີ້ເປັນເຫດໃຫ້ພຣະຜູ້ເປັນເຈົ້າຊົງພຣະພິໂຣດ ພຣະອົງໄດ້ທຳລາຍບ່ອນເຫລົ່ານີ້ເຫມືອນດັ່ງໄດ້ທຳ
ລາຍທີ່ເບັດເອນ
20 ພຣະອົງໄດ້ຂ້າພວກປະໂຣຫິດຈອມປອມທຸກຄົນ ທີ່ຢູ່ຕາມບ່ອນສັກສິດເທິງແທ່ນບູຊານັ້ນ ແລະໄດ້ເຜົາກະດູກຄົນໃສ່
ເທິງແທ່ນບູຊາທຸກອັນ ແລ້ວໄດ້ກັບຄືນເມືອກຸງເຢຣູຊາເລັມ

**ຖືເທສການປັສຄາ**

The Passover Celebrated

(2 ຂຄວ 35:1-19)

21 ແລະເຈົ້າຊີວິດຊົງອອກຄຳສັ່ງແກ່ບ່າວໄພ່ຣາສດອນທຸກຄົນວ່າ, “ຈົ່ງສເລີມສລອງວັນປັສຄາ ເພື່ອເປັນການຖວາຍ
ກຽດແດ່ພຣະຜູ້ເປັນເຈົ້າ ຕາມຄຳແນະນຳທີ່ມີໄວ້ໃນປຶ້ມຄຳຫມັ້ນສັນຍານັ້ນ
22 ນັບຕັ້ງແຕ່ວັນທີ່ພວກຜູ້ປົກຄອງໄດ້ປົກຄອງອິສຣາເອນ ເຖິງສມັຍຂອງເຈົ້າຊີວິດອິສຣາເອນ ແລະເຈົ້າຊີວິດຢູດາບໍ່
ເຄີຍມີການ ສລອງປັສຄາດັ່ງນີ້ເລີຍ
23 ຕົກມາໃນຣັຊການປີທີສິບແປດຂອງເຈົ້າຊີວິດໂຢຊີຢາ ຈຶ່ງມີການສເລີມສລອງປັສຄາອີກທີ່ກຸງເຢຣູຊາເລັມ ເພື່ອ
ຖວາຍພຣະກຽດແດ່ພຣະຜູ້ເປັນເຈົ້າ

**ການປ່ຽນແປງອື່ນໆໂດຍເຈົ້າໂຢຊີຢາ**

24 ນອກຈາກນີ້ ເພື່ອໃຫ້ເປັນໄປຕາມພຣະຄຳທີ່ຂຽນໄວ້ໃນປຶ້ມທີ່ປະໂຣຫິດ ຮິນກີຢາໄດ້ພົບຢູ່ໃນພຣະວິຫານ ໂຢຊີຢາໄດ້
ກຳຈັດຂັບໄລ່ຫມໍຜີ ຫມໍດູໂຊກຊະຕາ ຫມໍເວດມົນກົນຄາຖາ ຮ້ານພຣະແລະຮູບໂຄຣົບອື່ນໆຕລອດທັງສິ່ງຂອງທີ່ໃຊ້
ນະມັສການພຣະຕ່າງໆໃນປະເທດຢູດາ ແລະກຸງເຢຣູຊາເລັມ
25 ບໍ່ເຄີຍມີເຈົ້າຊີວິດອົງໃດທີ່ຂຶ້ນຄອງຣາຊສົມບັດກ່ອນພຣະອົງໄດ້ຮັບໃຊ້ພຣະຜູ້ເປັນເຈົ້າເຫມືອນດັ່ງພຣະອົງ ຄືພຣະອົງ
ໄດ້ຮັບໃຊ້ຢ່າງສຸດອົກສຸດໃຈ ສຸດກຳລັງວັງຊາ ຍ້ອນວ່າພຣະອົງໄດ້ເຊື່ອຟັງພຣະທັມທີ່ໂມເຊໄດ້ຂຽນໄວ້ ເຈົ້າຊີວິດອົງ
ຕໍ່ມາບໍ່ເຫມືອນພຣະອົງເລີຍ
26 ເຖິງປານນີ້ກໍຕາມ ພຣະຜູ້ເປັນເຈົ້າຍັງບໍ່ເຊົາພຣະພິໂຣດປະເທດຢູດາ ຍ້ອນການກະທຳບາບຂອງມານັສເຊ
27 ພຣະຜູ້ເປັນເຈົ້າຊົງສັ່ງວ່າ, “ເຮົາຈະກຳຈັດພວກຢູດາໃຫ້ຫນີຈາກເຮົາດັ່ງທີ່ເຮົາໄດ້ທຳຕໍ່ອິສຣາເອນ ເຮົາຈະປະຖິ້ມກຸງ
ເຢຣູຊາເລັມ ເມືອງທີ່ເຮົາເລືອກໄວ້ນີ້ພ້ອມທັງພຣະວິຫານທີ່ເຮົາໄດ້ບອກວ່າ ເປັນບ່ອນຢູ່ຂອງເຮົາ”

**ມໍຣະນະກັມຂອງໂຢຊີຢາ**

Josiah Dies in Battle

(2 ຂຄວ 35:20-36:1)

28 ສ່ວນພຣະຣາຊກິດນອກນັ້ນຂອງໂຢຊີຢາແລະບັນດາສິ່ງທີ່ຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະ
ດານພຣະຣາຊາແຫ່ງປະເທດຢູດາຫລື?
29 ໃນສມັຍຂອງພຣະອົງຟາຣາໂອເນໂກເຈົ້າຊີວິດແຫ່ງເອຢິບ ໄດ້ນຳກອງທັບໄປຊ່ອຍເຈົ້າຊີວິດແຫ່ງອັສຊີເຣັຽທີ່ແມ່ນໍ້າ
ເອີຟຣາດ ໂຢຊີຢາພຍາຍາມຢັບຢັ້ງກອງທັບເອຢິບໄວ້ທີ່ເມກິດໂດ ຈົນພຣະອົງຖືກຂ້າໃນສນາມຮົບ
30 ພວກຂ້າຣາຊການໄດ້ນຳເອົາສົບຂອງພຣະອົງໃສ່ຣົດມ້າອອກມາຈາກເມກິດໂດໄປຍັງກຸງເຢຣູຊາເລັມ ແລະຝັງໄວ້ໃນ
ອຸບໂມງຂອງພຣະອົງ ແລະຣາສດອນນັ້ນກໍຮັບເຢໂຮອາຮັສໂອຣົດໂຢຊີຢາຫົດສົງທ່ານໄວ້ ແລະຕັ້ງທ່ານໃຫ້ເປັນເຈົ້າ
ຊີວິດແທນຣາຊບິດາຂອງທ່ານ

**ຣັຊການເຢໂຮອາຮັສແລະການຖືກປົດ**

Reign and Captivity of Jehoahaz

(2 ຂຄວ 36:1-4)

31 ເຢໂຮອາຮັສມີອາຍຸຊາວສາມປີ ເມື່ອພຣະອົງຊົງເລີ່ມປົກຄອງ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສາມ
ເດືອນ ພຣະມານດາຂອງພຣະອົງມີພຣະນາມວ່າຮາມຸຕານບຸດຕຣີຂອງເຢເຣມີຢາ ຊາວລິບນາ
32 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມທຸກຢ່າງຊຶ່ງບັນພະບຸຣຸດຂອງພຣະອົງໄດ້ກະ
ທຳ
33 ຟາຣາໂອເນໂກກໍຈັບພຣະອົງຂັງໄວ້ທີ່ ຣິບນາໃນແຜ່ນດິນຮາມັທ ເພື່ອບໍ່ໃຫ້ພຣະອົງປົກຄອງໃນເຢຣູຊາເລັມ ແລະກຳ
ນົດບັນນາການຈາກແຜ່ນດິນນັ້ນເປັນເງິນນຶ່ງຮ້ອຍຕະລັນ ແລະທອງຄຳນຶ່ງຕະລັນ
34 ແລະຟາຣາໂອເນໂກຊົງຕັ້ງເອລີຢາກີມ ບຸດໂຢຊີຢາເປັນເຈົ້າຊີວິດແທນໂຢຊີຢາບິດາຂອງທ່ານ ແລະປ່ຽນຊື່ຂອງທ່ານ
ເປັນເຢຮົວອາກີມ ແຕ່ໄດ້ພາເຢໂຮອາຮັສໄປເສັຽ ແລະທ່ານມາເຖິງເອຢິບແລະສິ້ນຊີວິດເສັຽທີ່ນັ້ນ
35 ແລະເຢຮົວອາກີມກໍມອບເງິນ ແລະທອງຄຳແກ່ຟາຣາໂອແຕ່ພຣະອົງຊົງເກັບພາສີຈາກຊາວແຜ່ນດິນ ເພື່ອມອບເງິນ
ຕາມບັນຊາຂອງຟາຣາໂອພຣະອົງຊົງເລັ່ງເອົາເງິນແລະທອງຄຳຂອງຣາສດອນນັ້ນຈາກທຸກຄົນຕາມການປະເມີນ
ເພື່ອມອບແກ່ຟາຣາໂອເນໂກ

**ຣັຊການເຢຮົວອາກີມ**

Jehoiakim Reigns over Judah

(2 ຂຄວ 36:5-8)

36 ເຢຮົວອາກີມມີອາຍຸຊາວຫ້າປີ ເມື່ອພຣະອົງຊົງເລີ່ມປົກຄອງ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສິບເອັດປີ
ພຣະມານດາຂອງພຣະອົງມີພຣະນາມວ່າເຊບີດາບຸດຕຣີເປດັຍຢາຊາວຣູມາ
37 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າຕາມທຸກຢ່າງຊຶ່ງບັນພະບຸຣຸດຂອງພຣະອົງໄດ້ຊົງກະ
ທຳ

## 24

Judah Overrun by Enemies

1 ໃນຣັຊການຂອງພຣະອົງ ເນບູກາດເນສຊາຣ໌ເຈົ້າຊີວິດແຫ່ງບາບີໂລນຍົກຂຶ້ນມາ ແລະເຢຮົວອາກີມເປັນຄົນໃຊ້ຂອງ
ພຣະອົງສາມປີ ແລ້ວທ່ານກໍກັບກະບົດຕໍ່ພຣະອົງ
2 ແລະພຣະຜູ້ເປັນເຈົ້າຊົງໃຊ້ພວກຄົນຄັນເດອານ ແລະພວກຄົນຊີເຣັຽ ແລະຄົນໂມອາບ ແລະພວກຄົນອັມໂມນມາຕໍ່ສູ້
ກັບທ່ານ ແລະຊົງໃຊ້ເຂົາທັງຫລາຍໄປຕໍ່ສູ້ຢູດາເພື່ອຈະທຳລາຍເສັຽ ຕາມພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງພຣະອົງ
ກ່າວໂດຍບັນດາຜູ້ປະກາດ  ພຣະທັມຜູ້ຮັບໃຊ້ຂອງພຣະອົງ
3 ແທ້ຈິງເຫດການນີ້ເກີດຂຶ້ນກັບຢູດາຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າເພື່ອຈະໃຫ້ເຂົາອອກໄປເສັຽຈາກສາຍພຣະ
ເນດຂອງພຣະອົງ ເພາະບັນດາບາບຂອງມານັສເຊຕາມທຸກຢ່າງຊຶ່ງພຣະອົງໄດ້ຊົງກະທຳ
4 ແລະເພາະໂລຫິດທີ່ບໍ່ມີຄວາມຜິດຊຶ່ງທ່ານໄດ້ທຳໃຫ້ຫລັ່ງນັ້ນດ້ວຍ ເພາະທ່ານໄດ້ກະທຳໃຫ້ໂລຫິດທີ່ບໍ່ມີຄວາມຜິດ
ຕົກເຕັມເຢຣູຊາເລັມ ແລະພຣະຜູ້ເປັນເຈົ້າບໍ່ຊົງອະພັຍ
5 ສ່ວນພຣະຣາຊກິດນອກນັ້ນຂອງເຢຮົວອາກີມ ແລະບັນດາສິ່ງຊຶ່ງພຣະອົງຊົງກະທຳ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາ
ວະດານແຫ່ງພຣະຣາຊາປະເທດຢູດາຫລື?
6 ເຢຮົວອາກີມຈຶ່ງຊົງລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພຣະອົງ ແລະເຢຮົວອາຄີນໂອຣົດຂອງພຣະອົງຂຶ້ນປົກຄອງ
ແທນພຣະອົງ
7 ແລະເຈົ້າຊີວິດແຫ່ງເອຢິບບໍ່ໄດ້ຊົງຍົກອອກມາຈາກແຜ່ນດິນຂອງພຣະອົງອີກ ເພາະເຈົ້າຊີວິດແຫ່ງບາບີໂລນໄດ້ຍຶດ
ແດນທັງສິ້ນຊຶ່ງເປັນຂອງເຈົ້າຊີວິດເອຢິບຕັ້ງແຕ່ລຳທານເອຢິບເຖິງແມ່ນ້ຳເອີຟຣາດ

**ເຢຮົວອາຄີນແລະເຈົ້ານາຍຖືກຈັບໄປເປັນຊະເລີຍຍັງບາບີໂລນ**

Reign and Captivity of Jehoiachin

(2 ຂຄວ 36:9-10)

8 ເຢຮີວອາຄິນມີອາຍຸສິບແປດປີ ເມື່ອພຣະອົງຊົງເລີ້ມປົກຄອງ ແລະພຣະອົງຊົງປົກຄອງໃນກຸງເຢຣູຊາເລັມສາມເດືອນ
ພຣະມານດາຂອງພຣະອົງມີພຣະນາມວ່າເນຮູສຕາບຸດຕຣີຂອງເອນນາທານ ຊາວເຢຣູຊາເລັມ
9 ເຢຮີວອາຄິນໄດ້ທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມທຸກຢ່າງຊຶ່ງພຣະບິດາຂອງພຣະອົງຊົງກະ
ທຳ
10 ຄາວນັ້ນຂ້າຣາຊການຂອງເນບູກາດເນສຊາເຈົ້າຊີວິດແຫ່ງບາບີໂລນຍົກຂຶ້ນມາຍັງກຸງເຢຣູຊາເລັມລ້ອມກຸງໄວ້
11 ເນບູກາດເນສຊາເຈົ້າຊີວິດແຫ່ງບາບີໂລນສະເດັດມາທີ່ເມືອງນັ້ນຂນະເມື່ອຂ້າຣາຊການຂອງພຣະອົງຍັງອ້ອມເມືອງ
ຢູ່
12 ແລ້ວເຢຮີວອາຄິນເຈົ້າຊີວິດຢູດາພ້ອມທັງພຣະມານດາ ແລະພຣະຣາຊວົງ ພວກນາຍທະຫານແລະພວກເຈົ້ານາຍກໍ
ຍອມຈຳນົນຕໍ່ເຈົ້າຊີວິດກຸງບາບີໂລນ ທຸກຄົນຈຶ່ງຖືກເນບູກາດເນສຊາຈັບໄປເປັນຊະເລີຍ ຊຶ່ງເປັນປີທີແປດແຫ່ງຣັຊ
ການຂອງພຣະອົງ

**ຢູດາເປັນຊະເລີຍ**

Capture of Jerusalem

13 ເນບູກາດເນສຊາຣ໌ໄດ້ກວາດເອົາຊັບສົມບັດເງິນຄຳໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະໃນພຣະຣາຊວັງໄປຫມົດ
ພຣະອົງໄດ້ທັບເອົາເຄື່ອງໃຊ້ທີ່ໂຊໂລໂມນໄດ້ທຳດ້ວຍຄຳໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຊຶ່ງການນີ້ເປັນໄປຕາມ
ທີ່ພຣະຜູ້ເປັນເຈົ້າຊົງໄດ້ບອກລ່ວງຫນ້າແລ້ວ
14 ພຣະອົງໄດ້ກວາດເອົາຊາວກຸງເຢຣູຊາເລັມ ບັນດາພວກເຈົ້ານາຍທີ່ມີຊື່ສຽງທຸກຄົນໄປເປັນຊະເລີຍ ທັງຫມົດນີ້ມີຢູ່ນຶ່ງ
ຫມື່ນຄົນ ນອກຈາກນີ້ພຣະອົງຍັງໄດ້ເອົາຊ່າງຝີມືດີ ແລະຊ່າງໂລຫະໄປນຳດ້ວຍ ແລະໄດ້ປະໄວ້ແຕ່ຄົນທຸກຍາກ
ເຫລືອໄວ້ໃນປະເທດ
15 ພຣະອົງໄດ້ຈັບເຢຮີວອາຄິນ ພ້ອມທັງພຣະມານດາແລະຣາຊວົງ ພວກມະເຫສີ ແລະພວກເຈົ້ານາຍທຸກຄົນຢູ່ໃນປະ
ເທດໄປສູ່ກຸງບາບີໂລນ
16 ຜູ້ທີ່ມີຫນ້າທີ່ສຳຄັນມີເຈັດພັນຄົນ ຊ່າງຝີມືດີ ແລະຊ່າງໂລຫະນຶ່ງພັນຄົນ ບຸກຄົນເຫລົ່ານີ້ມີຄວາມແຂງແຮງ ແລະສາ
ມາດເປັນທະຫານໄດ້
17 ເຈົ້າຊີວິດບາບີໂລນໄດ້ແຕ່ງຕັ້ງມັດຕານີຢາ ລຸງຂອງເຢຮີວອາກີນຂຶ້ນເປັນເຈົ້າຊີວິດຂອງຢູດາ ໂດຍປ່ຽນຊື່ໃຫ້ໃຫມ່ວ່າ
ເຊເດກີຢາ

**ຣັຊການເຊເດກີຢາ**

Zedekiah Reigns over Judah

(2 ຂຄວ 36:11-14; ຢຣມ 52:1-3)

18 ເຊເດກີຢາຂຶ້ນຄອງຣາຊສົມບັດທີ່ກຸງເຢຣູຊາເລັມ ເມື່ອອາຍຸຊາວເອັດປີ ແລະເປັນເຈົ້າຊີວິດຢູ່ກຸງເຢຣູຊາເລັມເປັນເວ
ລາສິບເອັດປີ ພຣະມານດາຂອງພຣະອົງມີພຣະນາມວ່າຮາມູຕານເປັນຣາຊທິດາຂອງເຢເຣມີຢາຊາວລິບນາ
19 ພຣະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຜູ້ເປັນເຈົ້າ ຕາມທຸກຢ່າງຊຶ່ງເຢຮີວອາກີມຊົງກະທຳ
20 ພຣະຜູ້ເປັນເຈົ້າຊົງພຣະພິໂຣດໂກດເຄືອງຊາວກຸງເຢຣູຊາເລັມແລະຊາວຢູດາຫລາຍ ພຣະອົງຊົງຂັບໄລ່ໃຫ້ພວກເຂົາ
ຫນີພົ້ນຈາກສາຍພຣະເນດພຣະອົງ

**ຖືກຈັບໄປເປັນຊະເລີຍທີ່ກຸງບາບີໂລນ**

The Fall and Captivity of Judah

(2 ຂຄວ 36:15-21; ຢຣມ 52:3-30)

ເຊເດກີຢາໄດ້ກະບົດຕໍ່ສູ້ເຈົ້າຊີວິດບາບີໂລນ

25

Chapter 25

1 ເມື່ອວັນທີສິບເດືອນສິບປີທີເກົ້າແຫ່ງຣັຊການຂອງພຣະອິງ ແລະຢູ່ມາເນບຸກາດເນສຊາຣ໌ເຈົ້າຊີວິດບາບີໂລນໄດ້ຍົກ
ທັບມາພ້ອມກັບ ກອງທັບທັງສິ້ນຂອງພຣະອິງເຂົ້າສູ້ຣົບກຸງເຢຣູຊາເລັມ ພຣະອິງໄດ້ມາຕັ້ງຄ້າຍຢູ່ນອກເມືອງ ແລະ
ໄດ້ກອງດິນຂຶ້ນຕາມກຳແພງ ເພື່ອບຸກໂຈມຕີ

2 ກຸງນີ້ໄດ້ຖືກອ້ອມໄວ້ມາຈົນຮອດປີທີສິບເອັດແຫ່ງຣັຊການຂອງເຊເດກີຢາ

3 ຕໍ່ມາໃນວັນທີເກົ້າຂອງເດືອນສີ່ປີດຽວກັນນັ້ນ ໄດ້ມີການອຶດຢາກຢ່າງຮ້າຍແຮງ ຈົນປະຊາຊົນບໍ່ມີອາຫານການກິນ
ແລະກຳແພງເມືອງບາງບ່ອນກໍຖືກສັດຕຣູທຳລາຍລົງ

4 ສະນັ້ນເຈົ້າຊີວິດແລະພວກທະຫານຈຶ່ງໄດ້ຫລົບຫນີອອກໄປໃນຕອນກາງຄືນທັງໆທີ່ພວກບາບີໂລນກຳລັງອ້ອມເມືອງ
ຢູ່ ພວກເຂົາໄດ້ອອກໄປທາງປະຕູເມືອງລະຫວ່າງກຳແພງທັງສອງຂ້າງ ຊຶ່ງເປັນບ່ອນທີ່ໃກ້ກັບສວນຂອງເຈົ້າຊີວິດ
ແລ້ວມຸ່ງຫນ້າໄປທາງຮ່ອມພູຈໍແດນ

5 ພວກທະຫານບາບີໂລນໄດ້ໄລ່ຕິດຕາມເຈົ້າຊີວິດເຊເດກີຢາໄປ ແລະທັນພຣະອົງໄດ້ທີ່ທົ່ງນາໃກ້ເມືອງເຢຣີໂກ ສ່ວນ
ພວກທະຫານຂອງພຣະອົງໄດ້ປະພຣະອົງຫນີໄປ

6 ພວກບາບີໂລນຈັບເຊເດກີຢາໄປໃຫ້ເນບຸກາດເນສຊາຣ໌ຢູ່ເມືອງຣິບລາ ແລະພຣະອົງກໍຖືກຕັດສິນຄະດີຢູ່ທີ່ນັ້ນ

7 ເຈົ້າຊີວິດບາບີໂລນໄດ້ຂ້າຣາຊໂອຣົດຂອງເຊເດກີຢາ ຕໍ່ຫນ້າຕໍ່ຕາຂອງພຣະອົງເອງ ແລ້ວເຈາະຫນ່ວຍຕາເຊເດກີຢາ
ອອກ ລ່າມ ໂສ້ພຣະອົງໄວ້ແລະນຳພຣະອົງໄປຍັງກຸງບາບີໂລນ

8 ໃນຣັຊການປີທີສິບເກົ້າວັນທີສິບເຈັດເດືອນຫ້າຂອງເນບຸກາດເນສຊາ ເຈົ້າຊີວິດບາບີໂລນ ເນບູຊາຣາດານ ທີ່ປຶກສາ
ແລະຜູ້ບັນຊາການຄົນນຶ່ງຂອງພຣະອົງ ໄດ້ເຂົ້າໄປໃນກຸງເຢຣູຊາເລັມ

9 ແລະຈູດພຣະວິຫານຂອງພຣະຜູ້ເປັນເຈົ້າຈູດພຣະຣາຊວັງ ແລະເຮືອນຊານທຸກໆຫລັງຂອງເຈົ້ານາຍຜູ້ສຳຄັນ

10 ພວກທະຫານຂອງພຣະອົງໄດ້ທຳລາຍກຳແພງເມືອງ

11 ເນບຸກາດເນສຊາໄດ້ຈັບປະຊາຊົນທີ່ຍັງຄ້າງເຫລືອຢູ່ໃນເມືອງພ້ອມທັງພວກຊ່າງຝີມືດີ ຕລອດທັງພວກທີ່ອອກມາ
ສວາມິພັກຕໍ່ຊາວບາບີໂລນໄປເປັນຊະເລີຍທີ່ກຸງບາບີໂລນ

12 ແຕ່ເຂົາໄດ້ປະໃຫ້ຄົນທຸກຍາກທີ່ສຸດທີ່ບໍ່ມີໄຮ່ນາໄວ້ໃນປະເທດ ເພື່ອເປັນຄົນເຮັດສວນອະງຸ່ນ ແລະເຮັດໄຮ່ໄຖນາ

13 ຊາວບາບີໂລນໄດ້ທັບເສົາທອງ ທັບດິນເສົາແລະຂັນນ້ຳທອງສຳຣິດໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລ້ວເອົາ
ທອງເຫລົ່ານັ້ນໄປຍັງກຸງບາບີໂລນ

14 ພວກເຂົາຍັງໄດ້ຂົນເອົາເຄື່ອງໃຊ້ສຳລັບທຳຄວາມສະອາດແທ່ນບູຊາ ຄື ສຽມ ຊວ້ານ ຄຸໃສ່ຂີ້ເທົ່າໄຟ ຖາດແລະມີດ
ຕັດ ໃສ້ຕະກຽງ ໂອໃສ່ເລືອດເວລາຂ້າສັດຖວາຍບູຊາ ຫມໍ້ສຳລັບເຄື່ອງຫອມເຜົາບູຊາ ແລະເຄື່ອງທອງສຳຣິດທັງ
ຫມົດທີ່ໃຊ້ໃນພິທີການຂອງວິຫານ

15 ພວກເຂົາໄດ້ຂົນເອົາທຸກສິ່ງທີ່ເຮັດດ້ວຍຄຳ ຫລືເງິນໄປ ຄື ຫມໍ້ນ້ອຍ ແລະອ່າງໃສ່ຖ່ານຫີນ

16 ເຄື່ອງທອງສຳຣິດທີ່ກະສັດໂຊໂລໂມນເຮັດໄວ້ໃນວິຫານຄື ເສົາສອງເສົາ ຕີນເສົາ ອ່າງໃຫຍ່ໃສ່ນ້ຳ

17 ເຄື່ອງເຫລົ່ານີ້ຫນັກຫລາຍຈົນຊັ່ງບໍ່ໄດ້ ເສົາສອງເສົານັ້ນ ແຕ່ລະເສົາສູງສິບແປດສອກ ຢູ່ເທິງເສົາມີບົວທອງສຳຣິດ
ບົວແຕ່ລະດອກສູງສາມສອກ ມີຮູບພວງມາລາແລະຮູບຫມາກພິລາອ້ອມຮອບບົວນັ້ນ

18 ເນບຸກາດເນສຊາຣ໌ຜູ້ບັນຊາການທະຫານໄດ້ຈັບມະຫາປະໂຣຫິດເຊຣັຍຢາແລະປະໂຣຫິດເຊຟັນຢາຜູ້ຮອງ ພ້ອມທັງ
ຜູ້ມີຫນ້າທີ່ດູແລພຣະວິຫານສາມຄົນໄປນຳ

19 ພາຍໃນເມືອງທ່ານໄດ້ຈັບຜູ້ບັນຊາການທະຫານ ທີ່ປຶກສາພຣະມະຫາກະສັດຫ້າຄົນ ຮອງຜູ້ບັນຊາການທະຫານ ຜູ້
ຮັບຜິດຊອບທະບຽນພົນ ແລະຄົນສຳຄັນອື່ນໆອີກຫົກສິບຄົນທີ່ຍັງຢູ່ໃນເມືອງ

20 ເນບູຊາຣາດານໄດ້ຈັບເອົາພວກເຫລົ່ານີ້ໄປຫາເຈົ້າຊີວິດບາບີໂລນທີ່ຣິບລາ
21 ໃນເຂດແດນຮາມັດຢູ່ທີ່ນັ້ນເຈົ້າຊີວິດໄດ້ທໍຣະມານ ແລະໄດ້ຂ້າພວກເຂົາເສັຽ ດັ່ງນັ້ນແຫລະ ຊາວຢູດາຈຶ່ງຖືກເນຣະ
ເທດອອກຈາກປະເທດຂອງຕົນ

**ເກດາລີຢາຮັບຕຳແໜ່ງເປັນຜູ້ປົກຄອງຢູດາ** Gedaliah Made Governor of Judah

(ຢຣມ 40:5-41:18)

22 ເຈົ້າເນບູກາດເນສຊາຣ໌ເຈົ້າຊີວິດບາບີໂລນໄດ້ແຕ່ງຕັ້ງເກດາລີຢາ ບຸດອາຮີກາມ ບຸດຊາຟານ ເປັນຜູ້ປົກຄອງປະເທດ
ຢູດາ ແລະໃຫ້ເປັນຜູ້ຮັບຜິດຊອບທຸກຄົນທີ່ບໍ່ໄດ້ຖືກຈັບໄປກຸງບາບີໂລນ
23 ເມື່ອພວກນາຍແລະພົນທະຫານທີ່ຢູ່ນອກເມືອງໄດ້ຍິນວ່າ ເຈົ້າຊີວິດບາບີໂລນໄດ້ແຕ່ງຕັ້ງເກດາລີຢາເປັນຜູ້ປົກຄອງ
ພວກເຂົາກໍພາກັນໄປຫາເກດາລີຢາທີ່ເມືອງມິສປາ ຄືອິຊມາເອນບຸດເນທານີຢາ ໂຢຮານານ ບຸດກາເຣອາ ເຊຣັຍຢາ
ບຸດຕັນຮູເມທ ຊາວເນໂທຟາ ແລະຢາອາຊານີຢາບຸດຄົນຕະກູນມາອາກາ
24 ສ່ວນກາດາລີຢາກໍເວົ້າຕໍ່ພວກເຫລົ່ານີ້ວ່າ, “ພວກທ່ານບໍ່ຕ້ອງຢ້ານຊາວບາບີໂລນດອກ ຈົ່ງຢູ່ໃນປະເທດນີ້ ແລະຮັບ
ໃຊ້ເຈົ້າຊີວິດບາບີໂລນ ແລ້ວພວກທ່ານຈະມີຄວາມສຸກ”
25 ແຕ່ວ່າໃນເດືອນທີເຈັດຂອງປີນັ້ນ ອິຊມາເອນບຸດເນທານີຢາບຸດເອລີຊາມາ ຜູ້ເປັນເຊື້ອກະສັດພ້ອມທັງທະຫານສິບ
ຄົນ ໄດ້ເຂົ້າມາຂ້າເກດາລີຢາພ້ອມທັງຊາວອິສຣາເອນ ແລະຊາວບາບີໂລນທີ່ຢູ່ນຳທ່ານໃນເມືອງມິສປານັ້ນ
26 ແລ້ວປະຊາຊົນອິສຣາເອນທັງຫມົດ ທັງຄົນຮັ່ງມີແລະຄົນຈົນ ພ້ອມທັງພວກນາຍທະຫານກໍພາກັນປົບຫນີໄປຍັງປະ
ເທດເອຢິບເພາະຢ້ານຊາວບາບີໂລນ

**ເຢຮີວອາຄິນໄດ້ຮັບອະພັຍໂທດ**

Jehoiachin Released from Prison

(ຢຣມ 52:31-34)

27 ໃນປີທີສາມສິບເຈັດທີ່ເຢຮີວອາຄິນ ເຈົ້າຊີວິດແຫ່ງຢູດາຕົກເປັນຊະເລີຍ ເປັນປີທີ່ເອວີນເມໂຣດັກຂຶ້ນເປັນເຈົ້າຊີວິດ ພ
ຣະອົງໄດ້ໃຫ້ອະພັຍໂທດແກ່ເຢຮີວອາຄິນເຈົ້າຊີວິດແຫ່ງຢູດາ ແລະໄດ້ປ່ອຍພຣະອົງອອກຈາກຄຸກ
28 ໃນວັນທີຊາວເຈັດຂອງເດືອນສິບສອງ ເອວີນເມໂຣດັກໄດ້ລ້ຽງດູພຣະອົງຢ່າງມີເມດຕາຈິດ ທັງໄດ້ອະນຸຍາດໃຫ້ມີ
ກຽດກວ່າເຈົ້າຊີວິດອົງອື່ນໆທີ່ຖືກຈັບມາຢູ່ກຸງບາບີໂລນ
29 ດັ່ງນັ້ນເຢຮີວອາຄິນຈຶ່ງໄດ້ຮັບອະນຸຍາດໃຫ້ຖອດເຄື່ອງນຸ່ງນັກໂທດອອກ ແລະໄດ້ຮັບປະທານອາຫານຮ່ວມໂຕະກັບ
ເຈົ້າຊີວິດ ຕລອດມາ
30 ເຈົ້າຊີວິດເປັນຜູ້ອຸປຖັມ ແລະຮັບຜິດຊອບຈົນຊົ່ວຊີວິດຂອງທ່ານ